# ພຣະທັມ 1 ຊາມູເອນ


| | | | | | | | |
|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | 30 | 31 | |


## ຊາມູເອນ ສະບັບຕົ້ນ

1 SAMUEL

### 1 ເອນການາ ແລະຄອບຄົວທີ່ຊີໂລ

Samuel’s Birth and Dedication

2 ມີຊາຍຄົນນຶ່ງຊື່ວ່າເອນການາ ເປັນຄົນຕະກູນເອຟຣາອິມ ທ່ານຢູ່ເມືອງຣາມາທາອິມ ເທິງພູດອຍເອຟຣາອິມ
ທ່ານເປັນບຸດຊາຍຂອງເຢໂຣຮາມ
3 ເຢໂຣຮາມເປັນບຸດເອລີຮູ ຫລານຂອງໂຕຮູ ແລະເຫລັນຂອງຊູຟ ຊາວເຜົ່າເອຟຣາອິມ ເອນການາ ມີເມັຽສອງ
ຄົນຄື ນາງຮັນນາ ແລະນາງເປນິນນາ ເປນິນນາມີບຸດ ແຕ່ຮັນນາບໍ່ມີບຸດ
4 ທຸກໆປີເອນການາໄດ້ອອກຈາກເຮືອນຂອງຕົນຂຶ້ນໄປນະມັສການຖວາຍເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າແຫ່ງ
ຈັກກະວານທີ່ເມືອງຊີໂລ ຢູ່ບ່ອນນີ້ແມ່ນໂຮບ ແລະຟີເນຮາ ບຸດຊາຍທັງສອງຂອງເອລີເປັນປະໂຣຫິດບົວລະ
ບັດພຣະຜູ້ເປັນເຈົ້າ
5 ທຸກໆເທື່ອທີ່ເອນການາຖວາຍເຄື່ອງບູຊາ ທ່ານຈະຕ້ອງແບ່ງຂອງຖວາຍນີ້ໃຫ້ເປນິນນາ ແລະບຸດຂອງທ່ານແຕ່
ລະຄົນ
6 ສຳລັບຮັນນານັ້ນ ທ່ານໄດ້ແບ່ງສ່ວນທີ່ດີໆກວ່າໝູ່ໃຫ້ແກ່ນາງ ເຖິງແມ່ນວ່າພຣະຜູ້ເປັນເຈົ້າບໍ່ຊົງອະນຸຍາດໃຫ້
ນາງມີລູກກໍຕາມ ແຕ່ເອນການາກໍຮັກນາງຫລາຍທີ່ສຸດ
7 ຍ້ອນວ່າພຣະຜູ້ເປັນເຈົ້າບໍ່ຊົງໃຫ້ນາງມີບຸດ ຄູ່ແຂ່ງຂອງນາງຄືເປນິນນາໄດ້ເຮັດໃຫ້ນາງທົນທຸກທໍຣະມານອັບ
ອາຍຂາຍໜ້າ ແລະຊຸ້ນເຄືອງໃຈເລື້ອຍໆ
8 ເຫດການຢ່າງນີ້ເກີດຂຶ້ນທຸກໆປີ ຍາມເມື່ອເຂົາພາກັນຂຶ້ນໄປພຣະວິຫານຂອງພຣະຜູ້ເປັນເຈົ້າ ເປນິນນາກໍເຮັດ
ໃຫ້ຮັນນາເສົ້າໂສກເສັຽໃຈ ນາງຈຶ່ງຮ້ອງໄຫ້ແລະບໍ່ຍອມກິນຫຍັງໝົດ
9 ເອນການາຜູ້ເປັນຜົວຈຶ່ງຖາມວ່າ, “ຮັນນາເປັນຫຍັງເຈົ້າຈຶ່ງຮ້ອງໄຫ້ ແລະບໍ່ຍອມກິນເຂົ້າກິນນໍ້າ
ເປັນຫຍັງເຈົ້າຈຶ່ງໂສກເສົ້າຢູ່ເລື້ອຍໆ ຂ້ອຍບໍ່ມີຄວາມໝາຍທໍ່ມີບຸດສິບຄົນຊັ້ນບໍ່”

**ຮັນນາ ແລະເອລີ**

10 ຄັ້ງນຶ່ງທີ່ຊີໂລ ຫລັງຈາກເຂົາຮັບປະທານອາຫານແລ້ວ ນາງຮັນນາກໍລຸກຂຶ້ນໃກ້ປະຕູພຣະວິຫານຂອງພຣະຜູ້
ເປັນເຈົ້າ ປະໂຣຫິດເອລີກໍນັ່ງຢູ່ເທິງຕັ່ງອີ້
11 ຮັນນາຮູ້ສຶກຂົມຂື່ນໃນໃຈຫລາຍໃນຂນະທີ່ນາງອ້ອນວອນຫາພຣະຜູ້ເປັນເຈົ້າ
12 ນາງໄດ້ຮ້ອງໄຫ້ດ້ວຍຄວາມທຸກໃຈ ນາງໄດ້ສາບານຢ່າງໜັກແໜ້ນວ່າ, “ພຣະຜູ້ເປັນເຈົ້າແຫ່ງຈັກກະວານ ຂໍ
ພຣະອົງຊົງຫລຽວເບິ່ງຂ້າພຣະອົງຜູ້ຮັບໃຊ້ຂອງພຣະອົງເທີ້ນ ຂໍຊົງຫລຽວເບິ່ງຄວາມໂສກເສົ້າຂອງຂ້າພຣະອົງ

ແລະຂໍຊົງຈົດຈຳຢ່າຫລົງລືມຂ້າພຣະອົງ ຖ້າວ່າ ພຣະອົງຊົງປະທານບຸດຊາຍໃຫ້ຂ້າພຣະອົງ ຂ້າພຣະອົງຂໍສັນຍາວ່າ ຈະອຸທິດຖວາຍເດັກນັ້ນໃຫ້ແກ່ພຣະອົງຕລອດຊົ່ວຊີວິດຂອງເຂົາ ແລະຜົມຂອງເຂົາຈະບໍ່ຖືກຕັດຈັກເທື່ອ
13 ນາງຮັນນາໄດ້ອ້ອນວອນພຣະຜູ້ເປັນເຈົ້າເປັນເວລາດົນນານ ເອລີກໍສັງເກດເບິ່ງປາກຂອງນາງ
14 ຝ່າຍຮັນນາອ້ອນວອນຢູ່ໃນໃຈ ແຕ່ສົບຂອງນາງເໜັງຕີງ ບໍ່ໄດ້ຍິນສຽງຂອງນາງ ເຫດສະນັ້ນເອລີຈຶ່ງຄິດວ່ານາງເມົາເຫລົ້າ
15 ທ່ານເວົ້າຕໍ່ນາງວ່າ, "ຈົ່ງຍຸດຕິການເມົາເຫລົ້າ ແລະຢັບຢັ້ງສະຕິໄວ້ເທີນ"
16 ນາງຕອບຂຶ້ນວ່າ, "ບໍ່ແມ່ນດອກ ຂ້ານ້ອຍບໍ່ໄດ້ເມົາເຫລົ້າ ແລະບໍ່ໄດ້ດື່ມເຫລົ້າ ແຕ່ຂ້ານ້ອຍໝົດຄວາມຫວັງ ຂ້ານ້ອຍຈຶ່ງມາອ້ອນວອນລະບາຍຄວາມໂສກເສົ້າຂອງຂ້ານ້ອຍອອກໃຫ້ພຣະຜູ້ເປັນເຈົ້າຟັງ
17 ຂໍທ່ານຢ່າຄິດວ່າ ຂ້ານ້ອຍເປັນຍິງທີ່ບໍ່ມີຄຸນຄ່າເລີຍ ຂ້ານ້ອຍອ້ອນວອນຢູ່ຢ່າງນີ້ກໍເພາະວ່າ ຂ້ານ້ອຍຕົກຢູ່ໃນຄວາມຍາກລຳບາກ ແລະຄວາມທຸກເສົ້າໂສກໝອງໃຈ"
18 ເອລີເວົ້າວ່າ, "ຈົ່ງໄປເປັນສຸກເທີນ ຂໍພຣະເຈົ້າຂອງອິສຣາເອນປະທານພອນຕາມທີ່ເຈົ້າໄດ້ຮ້ອງຂໍຕໍ່ພຣະອົງ"
19 ນາງຕອບວ່າ, "ຂໍທ່ານຈົ່ງຄິດເມດຕາປານີຂ້ານ້ອຍເລື້ອຍໆເທີນ" ແລ້ວນາງກໍຈາກໄປ ຕໍ່ຈາກນັ້ນມາ ນາງຈຶ່ງກິນເຂົ້າ ແລະຄວາມໂສກເສົ້າກໍຫຸເລົາລົງ

**ຊາມູເອນເກີດ ແລະຖືກອຸທິດຖວາຍຕົວ**

20 ເຊົ້າວັນໃໝ່ມາ ເອນການາພ້ອມທັງຄອບຄົວກໍພາກັນໄປນະມັສການພຣະຜູ້ເປັນເຈົ້າແຕ່ເຊົ້າໆ ແລ້ວກໍພາກັນກັບຄືນມາຍັງເມືອງຣາມາ ເມື່ອເອນການາໄດ້ສົມສູ່ຢູ່ກັບນາງຮັນນາຜູ້ເປັນເມັຍ ພຣະຜູ້ເປັນເຈົ້າກໍຊົງຕອບສນອງຄຳອ້ອນວອນຂອງນາງ
21 ດັ່ງນັ້ນ ນາງຈຶ່ງຖືພາ ແລະເກີດບຸດຊາຍຜູ້ນຶ່ງ ນາງຕັ້ງຊື່ບຸດນັ້ນວ່າ ຊາມູເອນ ເພາະວ່ານາງໄດ້ຂໍເດັກຄົນນີ້ມາຈາກພຣະຜູ້ເປັນເຈົ້າ
22 ຕໍ່ມາ ເອນການາແລະຄອບຄົວກໍພາກັນໄປເມືອງຊີໂລ ເພື່ອຂຶ້ນໄປຖວາຍເຄື່ອງບູຊາປະຈຳປີ ແລະຖວາຍເຄື່ອງບູຊາພິເສດແກ່ພຣະຜູ້ເປັນເຈົ້າຕາມທີ່ໄດ້ສັນຍາໄວ້
23 ແຕ່ຮັນນາບໍ່ໄດ້ໄປນຳ ນາງຈຶ່ງໄດ້ເວົ້າຕໍ່ຜົວຂອງຕົນວ່າ, "ຖ້າເດັກນ້ອຍນີ້ຢ່ານົມຍາມໃດ ຂ້ອຍຈະເອົາເຂົາໄປພຣະວິຫານຂອງພຣະເຈົ້າ ຊຶ່ງເປັນບ່ອນທີ່ເຂົາຈະຢູ່ຕລອດຊົ່ວຊີວິດຂອງເຂົາ"
24 ເອນການາກໍຕອບວ່າ, "ຈົ່ງເຮັດຕາມທີ່ເຈົ້າຄິດວ່າດີ ແລະຢູ່ໃນເຮືອນຫລັງນີ້ຈົນກວ່າລູກຢ່ານົມ ຂໍພຣະຜູ້ເປັນເຈົ້າຊົງບັນດານໃຫ້ຄຳສັນຍາຂອງເຈົ້ານີ້ກາຍເປັນຈິງ" ດັ່ງນັ້ນ ນາງຮັນນາຈຶ່ງຢູ່ເຮືອນລ້ຽງລູກຂອງນາງຕໍ່ໄປ
25 ຕໍ່ມາ ຫລັງຈາກເດັກນ້ອຍຢ່ານົມແລ້ວ ນາງຈຶ່ງຕຽມເອົາງົວເຖິກອາຍຸສາມຂວບ ແປ້ງນຶ່ງກະບອງ ແລະເຫລົ້າອະງຸ່ນນຶ່ງຖົງໜັງແລ້ວນາງພາບຸດທີ່ຍັງນ້ອຍໆຢູ່ມາຍັງພຣະວິຫານຂອງພຣະຜູ້ເປັນເຈົ້າທີ່ເມືອງຊີໂລ
26 ແລ້ວເຂົາກໍຂ້າງົວເຖິກຕົວນັ້ນ ແລະນຳເອົາເດັກນ້ອຍນັ້ນມາຫາເອລີ
27 ຮັນນາເວົ້າຕໍ່ອາລີວ່າ, "ຂໍໂທດທ່ານ ທ່ານຈື່ຂ້ານ້ອຍໄດ້ບໍ່ ຂ້ານ້ອຍຄືຜູ້ຍິງທີ່ທ່ານເຄີຍເຫັນ ຢືນອ້ອນວອນຕໍ່ພຣະຜູ້ເປັນເຈົ້າຢູ່ທີ່ນີ້
28 ຂ້ານ້ອຍໄດ້ທູນຂໍລູກຈາກພຣະອົງ ແລະພຣະອົງກໍຊົງປະທານໃຫ້ຕາມທີ່ຂ້ານ້ອຍໄດ້ທູນຂໍ
29 ດັ່ງນັ້ນ ຂ້ານ້ອຍຈຶ່ງຂໍອຸທິດຖວາຍເດັກນີ້ໃຫ້ແກ່ພຣະຜູ້ເປັນເຈົ້າຂໍໃຫ້ເຂົາເປັນຂອງພຣະອົງຕລອດຊົ່ວຊີວິດຂອງເຂົາເທີນ" ແລ້ວເຂົາກໍພາກັນຂາບໄຫວ້ນະມັສການພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ

Hannah’s Prayer

(ລກ 1:46-55)

1 ນາງຮັນນາໄດ້ອ້ອນວອນວ່າ, “ພຣະຜູ້ເປັນເຈົ້າຊົງທຳໃຫ້ຈິດໃຈຂ້າພຣະອົງເຕັມໄປດ້ວຍຄວາມມ່ວນຊື່ນ ຂ້າພ
ຣະອົງມີຄວາມສຸກໃຈຍ້ອນສິ່ງທີ່ພຣະອົງຊົງກະທຳ ຂ້າພຣະອົງຫົວທ້າທາຍໃສ່ສັດຕຣູຂອງຂ້າພຣະອົງ ຂ້າພຣະ
ອົງເຕັມໄປດ້ວຍຄວາມມ່ວນຊື່ນ ເພາະພຣະເຈົ້າຊົງຊ່ອຍເຫລືອຂ້າພຣະອົງ
2 ບໍ່ມີຜູ້ໃດບໍຣິສຸດດັ່ງພຣະຜູ້ເປັນເຈົ້າ ບໍ່ມີພຣະຜູ້ຄຸ້ມຄອງອົງໃດເຫມືອນພຣະເຈົ້າຂອງພວກຂ້າພຣະອົງ
3 ສຽງໂອ້ອວດຂອງເຈົ້ານັ້ນ ຈົ່ງມິດ ຄຳເວົ້າທີ່ຈອງຫອງຈົ່ງມິດເສັຽ ເພາະພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າທີ່ຮູ້
ແຈ້ງເຫັນຈິງ ພຣະອົງຊົງຕັດສິນການກະທຳທຸກຢ່າງຂອງມະນຸດ
4 ຄັນທະນູຂອງທະຫານຜູ້ເກັ່ງກ້າໄດ້ຫັກ ແຕ່ຜູ້ທີ່ອ່ອນແອກໍມີແຮງຂຶ້ນ
5 ຜູ້ທີ່ເຄີຍຮັ່ງມີເປັນດີກໍອອກທ່ຽວຮັບຈ້າງຫາກິນ ແຕ່ຜູ້ທີ່ຫິວກໍບໍ່ຫິວອີກຕໍ່ໄປ ເມັຽທີ່ບໍ່ເຄີຍມີບຸດກໍຈະມີບຸດໄດ້
ເຈັດຄົນ ແຕ່ແມ່ທີ່ມີບຸດຫລາຍກໍບໍ່ມີບຸດຕໍ່ໄປ
6 ພຣະຜູ້ເປັນເຈົ້າຊົງເອົາຊີວິດ ແລະໃຫ້ມີຊີວິດໃຫມ່ ພຣະອົງຊົງສົ່ງມະນຸດໄປສູ່ພິພົບຄົນຕາຍ ແລະນຳເຂົາກັບ
ຄືນມາອີກ
7 ພຣະອົງຊົງທຳໃຫ້ມະນຸດທຸກຍາກ ຫລືຮັ່ງມີຂຶ້ນ ພຣະອົງຊົງກະທຳໃຫ້ພວກເຂົາຕົກຕໍ່າ ຫລືມີກຽດ
8 ພຣະອົງຊົງຊຸກຍູ້ຄົນຈົນອອກຈາກຄວາມທຸກ ແລະຄວາມຂັດສົນ ພຣະອົງຊົງທຳໃຫ້ເຂົາເປັນເພື່ອນກັບເຈົ້າ
ນາຍ ແລະໃຫ້ເຂົານັ່ງຢູ່ບ່ອນທີ່ມີກຽດ ຮາກຖານຂອງແຜ່ນດິນໂລກຂຶ້ນຢູ່ກັບພຣະຜູ້ເປັນເຈົ້າ ພຣະອົງຊົງສ້າງ
ໂລກເທິງຮາກຖານນັ້ນ
9 ພຣະອົງຊົງຄຸ້ມຄອງການເປັນຢູ່ຂອງໄພ່ພົນທີ່ສັດຊື່ຂອງພຣະອົງ ແຕ່ວ່າຄົນຊົ່ວຮ້າຍກໍດັບສາບສູນໄປ ເພາະວ່າ
ມະນຸດບໍ່ມີຜົນສຳເຣັດໃນຊີວິດຍ້ອນກຳລັງຂອງຕົນເອງ
10 ສັດຕຣູຂອງພຣະຜູ້ເປັນເຈົ້າຈະຖືກທຳລາຍ ພຣະອົງຈະຊົງແຜດສຽງຈາກຟ້າສວັນຕໍ່ສູ້ເຂົາ ພຣະຜູ້ເປັນເຈົ້າຈະ
ຕັດສິນຄົນທົ່ວທັງໂລກ ພຣະອົງຈະປະທານອຳນາດໃຫ້ກະສັດນັ້ນໄດ້ຮັບໄຊຊະນະ

**ລູກຊາຍຂອງເອລີ**

Eli’s Wicked Sons

11 ແລ້ວເອນການາກໍກັບຄືນເມືອເຮືອນທີ່ເມືອງຣາມາທາອິມ ແຕ່ວ່າບຸດຊາຍນ້ອຍນັ້ນໄດ້ຢູ່ຮັບໃຊ້ພຣະຜູ້ເປັນເຈົ້າ
ນຳປະໂຣຫິດເອລີທີ່ເມືອງຊີໂລ
12 ຝ່າຍບຸດຊາຍທັງສອງຂອງເອລີເປັນຄົນຂີ້ໂກງ ເພາະເຂົາບໍ່ນັບຖືພຣະຜູ້ເປັນເຈົ້າ
13 ແລະທຳຜິດຕໍ່ລະບຽບທີ່ໃຫ້ປະໂຣຫິດມີສິດຂໍສ່ວນນຶ່ງຂອງເຄື່ອງຖວາຍ ເຂົາໄດ້ເຮັດດັ່ງນີ້ຄື ເມື່ອຜູ້ໃດຜູ້ນຶ່ງຂ້າ
ສັດຖວາຍບູຊາ ໃນຂນະທີ່ເຂົາກຳລັງຕົ້ມຊີ້ນຖວາຍຢູ່ນັ້ນ
14 ຄົນໃຊ້ຂອງປະໂຣຫິດກໍຖືເຫລັກສາມງ່າມເຂົ້າມາ ເອົາເຫລັກນັ້ນສັກລົງໄປໃນກະທະ ຫລືຫມໍ້ຫູ ຫລືຫມໍ້ທະນົນ
ຫລືຫມໍ້ທຳມະດາ ຖ້າວ່າເຫລັກນັ້ນສຽບໄດ້ຫຍັງຂຶ້ນມາ ສິ່ງນັ້ນຕ້ອງເປັນຂອງປະໂຣຫິດ ເຂົາທຳຢ່າງນັ້ນກັບອິສ
ຣາເອນທຸກຄົນທີ່ມາຖວາຍເຄື່ອງບູຊາທີ່ເມືອງຊີໂລ
15 ນອກຈາກນັ້ນ ກ່ອນທີ່ຈະເອົາໄຂມັນຂຶ້ນມາເຜົາຄົນໃຊ້ຂອງປະໂຣຫິດຕ້ອງມາເວົ້າຕໍ່ຜູ້ທີ່ຖວາຍນັ້ນວ່າ, “ເອົາ
ຊີ້ນດິບຕ່ອນນຶ່ງມາໃຫ້ປະໂຣຫິດແດ່ ເພາະທ່ານຢາກເອົາໄປປີ້ງ ທ່ານບໍ່ຢາກກິນຊີ້ນຕົ້ມ”
16 ຖ້າຊາຍຄົນນັ້ນຕອບວ່າ, “ຂໍໃຫ້ເອົາໄຂມັນນີ້ເຜົາສາກ່ອນ ແລ້ວຈຶ່ງເອົາຕາມທີ່ເຈົ້າຕ້ອງການ” ຄົນໃຊ້ຂອງປະ
ໂຣຫິດກໍເວົ້າວ່າ, “ບໍ່ ເອົາໃຫ້ຂ້ອຍດຽວນີ້ສາ ຖ້າວ່າເຈົ້າບໍ່ໃຫ້ໂດຍດີ ຂ້ອຍກໍຈະໃຊ້ກຳລັງ”
17 ດັ່ງນັ້ນແຫລະ ຄວາມບາບຂອງຄົນຫນຸ່ມທັງສອງຈຶ່ງໃຫຍ່ຫລວງທີ່ສຸດໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ
ເພາະວ່າເຂົາສະແດງການຫມິ່ນປມາດເຄື່ອງຖວາຍບູຊາແດ່ພຣະຜູ້ເປັນເຈົ້າ

## ຊາມູເອນທີ່ເມືອງຊີໂລ

The Child Samuel at Shiloh

18 ເດັກຊາຍຊາມູເອນໄດ້ຮັບໃຊ້ພຣະຜູ້ເປັນເຈົ້າ ຕໍ່ມາເຫມືອນດັ່ງປະໂຣຫິດ ເຂົາໄດ້ນຸ່ງເຄື່ອງສະງ່າງາມ
19 ທຸກໆປີໃດ ແມ່ຂອງຊາມູເອນຕ້ອງຫຍິບເສື້ອຍ່າມຕົວນ້ອຍໆມາໃຫ້ເຂົາ ໃນເວລາທີ່ນາງແລະຜົວໄປຖວາຍ
ເຄື່ອງບູຊາປະຈຳປີ
20 ແລ້ວເອລີກໍອວຍພອນໃຫ້ແກ່ເອນການາກັບເມັຽຂອງເຂົາ ພ້ອມກັບເວົ້າຕໍ່ເອນການາວ່າ, “ຂໍໃຫ້ພຣະຜູ້ເປັນເຈົ້າ
ຊົງປະທານລູກໃຫ້ແກ່ເຈົ້າກັບເມັຽຜູ້ນີ້ອີກ ເພື່ອທົດແທນຜູ້ທີ່ເຈົ້າໄດ້ຖວາຍໃຫ້ເປັນຂອງພຣະອົງໄປແລ້ວ” ແລ້ວ
ເຂົາກໍພາກັນກັບບ້ານ
21 ຕໍ່ມາພຣະຜູ້ເປັນເຈົ້າໄດ້ອວຍພອນໃຫ້ນາງຮັນນາ ນາງມີບຸດຊາຍຕື່ມອີກສາມຄົນ ແລະບຸດສາວສອງຄົນ ສ່ວນ
ເດັກຊາຍຊາມູເອນນັ້ນກໍເຕີບໃຫຍ່ຂຶ້ນໃນການຮັບໃຊ້ພຣະຜູ້ເປັນເຈົ້າ

Prophecy against Eli’s Household

22 ດຽວນີ້ ເອລີໄດ້ເຖົ້າແກ່ຫລາຍແລ້ວ ທ່ານໄດ້ຍິນຫລາຍເຣື່ອງທີ່ບຸດຊາຍຂອງທ່ານເຮັດຕໍ່ອິສຣາເອນ ເປັນຕົ້ນ
ເຂົາໄດ້ເປັນຊູ້ກັບຍິງທີ່ມາບົວລະບັດຮັບໃຊ້ຢູ່ຕໍ່ຫນ້າຫໍເຕັນສັກສິດ
23 ດັ່ງນັ້ນ ທ່ານຈຶ່ງເວົ້າຕໍ່ເຂົາວ່າ, “ເປັນຫຍັງພວກເຈົ້າຈຶ່ງເຮັດສິ່ງເຫລົ່ານີ້ ຫລາຍຄົນໄດ້ບອກຂ້ອຍກ່ຽວກັບພຶດຕິ
ການອັນຊົ່ວຊາມຂອງພວກເຈົ້າ
24 ລູກເອີຍ ຈົ່ງເຊົາເຮັດການນີ້ສາຖ້ອນ ໄພ່ພົນຂອງພຣະຜູ້ເປັນເຈົ້າໄດ້ເວົ້າກ່ຽວກັບເຣື່ອງບໍ່ດີນີ້ເລື້ອຍໆ
25 ຖ້າວ່າຜູ້ນຶ່ງທຳຜິດຕໍ່ຄົນອື່ນ ພຣະເຈົ້າຊົງປ້ອງກັນເຂົາໄວ້ ແຕ່ວ່າ ເມື່ອຜູ້ນຶ່ງທຳຜິດຕໍ່ສູ້ພຣະເຈົ້າ ແມ່ນໃຜຈະສາ
ມາດປ້ອງກັນເຂົາໄວ້ໄດ້” ແຕ່ເຂົາທັງສອງບໍ່ໄດ້ຟັງຄວາມບິດາ ເພາະວ່າພຣະຜູ້ເປັນເຈົ້າຊົງຕັດສິນພຣະທັຍ
ແລ້ວວ່າຈະປະຫານຊີວິດຂອງພວກເຂົາ
26 ເດັກຊາຍຊາມູເອນໄດ້ໃຫຍ່ເຕີບໂຕຂຶ້ນ ພຣະຜູ້ເປັນເຈົ້າ ແລະມະນຸດກໍພໍໃຈນຳເຂົາເລື້ອຍໆມາ
27 ມີຜູ້ປະກາດພຣະທັມຜູ້ນຶ່ງໄດ້ມາຫາອາລີ ແລະບອກວ່າ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້, “ຄາວເມື່ອອາໂຣນບັນ
ພະບຸຣຸດຂອງທ່ານພ້ອມທັງຄອບຄົວໄດ້ເປັນທາດຂອງຟາຣາໂອ ກະສັດແຫ່ງປະເທດເອຢິບນັ້ນເຮົາໄດ້ປາກົດ
ໃຫ້ທ່ານເຫັນຖ້າມກາງຕະກູນອິສຣາເອນ
28 ເຮົາໄດ້ເລືອກເອົາແຕ່ຄອບຄົວຂອງທ່ານໃຫ້ເປັນປະໂຣຫິດບົວຣະບັດເຮົາ ເພື່ອເຮັດວຽກກ່ຽວກັບການຖວາຍບູ
ຊາຄື ການເຜົາເຄື່ອງຫອມ ແລະນຳເອົາຫີບສັກສິດມາຕໍ່ຫນ້າ ຝ່າຍເຮົາກໍໃຫ້ເຂົາມີສິດເອົາສ່ວນນຶ່ງຂອງເຄື່ອງ
ບູຊາທີ່ເຜົາຢູ່ເທິງແທ່ນບູຊານັ້ນ
29 ແລ້ວເປັນຫຍັງເຈົ້າຈຶ່ງໂລບມາກໃນເຄື່ອງບູຊາ ແລະເຄື່ອງຖວາຍຕາມຄຳສັ່ງຂອງເຮົາ ແລະໃຫ້ກຽດແກ່ບຸດ
ຊາຍທັງສອງຂອງເຈົ້າເຫນືອເຮົາ ແລະກະທຳໃຫ້ຕົວຂອງເຈົ້າທັງຫລາຍອ້ວນພີ ດ້ວຍສ່ວນທີ່ດີທີ່ສຸດຈາກຂອງ
ຖວາຍທຸກຢ່າງຈາກອິສຣາເອນຊົນຊາດຂອງເຮົາ”
30 ເຮົາ ພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນເຄີຍສັນຍາມາກ່ອນແລ້ວວ່າ ຄອບຄົວຂອງເຈົ້າ ແລະຜູ້ທີ່ຢູ່ໃນ
ເຊື້ອສາຍດຽວກັນກັບເຈົ້າຕ້ອງເປັນປະໂຣຫິດຮັບໃຊ້ເຮົາຕລອດເວລາ ແຕ່ດຽວນີ້ ເຮົາຂໍເວົ້າວ່າ ຂໍໃຫ້ການນັ້ນ
ຫ່າງໄກຈາກເຮົາ ເພາະວ່າເຮົາຈະໃຫ້ກຽດແກ່ຜູ້ທີ່ໃຫ້ກຽດເຮົາ ເຮົາຈະຫມິ່ນປມາດຕໍ່ຜູ້ທີ່ຫມິ່ນປມາດເຮົາ
31 ເບິ່ງແມ່ໍ, ວາຣະນັ້ນຈະມາເຖິງຢູ່ແລ້ວ ເມື່ອເຮົາຈະຕັດແຂນຂອງເຈົ້າອອກ ແລະຕັດແຂນຂອງເຊື້ອສາຍບິດາ
ຂອງເຈົ້າອອກ ເພື່ອວ່າບໍ່ໃຫ້ມີຜູ້ໃດໃນຄອບຄົວນັ້ນມີອາຍຸຢູ່ຕໍ່ໄປຈົນເຖິງເຖົ້າແກ່
32 ເຈົ້າຈະຕົກທຸກຍາກລຳບາກ ແລະຈະອິດສາອິສຣາເອນ ທີ່ໄດ້ຮັບຄວາມພອນທຸກຢ່າງ ແຕ່ວ່າບໍ່ມີຜູ້ໃດໃນຄອບຄົວຂອງເຈົ້າ
ມີຊີວິດຢູ່ຕໍ່ໄປຈົນເຖິງເຖົ້າແກ່

33 ແຕ່ເຮົາຍັງຈະໃຫ້ຜູ້ນຶ່ງໃນເຊື້ອສາຍຂອງເຈົ້າມີຊີວິດຢູ່ອີກ ທ່ານຈະເປັນປະໂຣຫິດຮັບໃຊ້ເຮົາ ແຕ່ທ່ານຈະກາຍເປັນຄົນຕາບອດ ແລະສູນເສັຽຄວາມຫວັງທຸກຢ່າງ ຝ່າຍເຊື້ອສາຍຄົນອື່ນໆຂອງເຈົ້າຈະຕາຍຢ່າງທາຣຸນ

34 ໃນເມື່ອບຸດຊາຍທັງສອງຂອງເຈົ້າຄື ໂຮບນີ ແລະຟີເນຮັສ ຕາຍໄປໃນມື້ດຽວກັນນັ້ນແຫລະ ດ້ວຍເຫດນີ້ ຈະສະແດງໃຫ້ເຈົ້າເຫັນວ່າ ສິ່ງທີ່ເຮົາໄດ້ເວົ້ານີ້ເປັນຄວາມຈິງ

35 ເຮົາຈະເລືອກເອົາປະໂຣຫິດທີ່ຊື່ສັດຕໍ່ເຮົາ ແລະຈະໃຫ້ທ່ານເຮັດທຸກສິ່ງທີ່ເຮົາຕ້ອງການ ເຮົາຈະໃຫ້ທ່ານມີເຊື້ອສາຍເປັນຜູ້ຮັບໃຊ້ຕລອດໄປ ຕໍ່ຫນ້າຜູ້ທີ່ເຮົາໄດ້ເລືອກໄວ້ນັ້ນ

36 ບໍ່ວ່າໃຜກໍຕາມໃນເຊື້ອສາຍຂອງເຈົ້າທີ່ມີຊີວິດຢູ່ຕໍ່ໄປຈະມາຂາບໄຫວ້ເຂົາຂໍເງິນ ແລະເຂົ້າຈີ່ກ້ອນນຶ່ງ ແລະຈະກ່າວວ່າ, "ຂໍທ່ານກະຣຸນາຕັ້ງຂ້າພະເຈົ້າໄວ້ໃນຕຳແຫນ່ງປະໂຣຫິດອີກເທື່ອນຶ່ງເຖີດ ເພື່ອຂ້າພະເຈົ້າຈະໄດ້ຮັບປະທານອາຫານຕື່ມອີກຫນ້ອຍນຶ່ງ"

## 3 ພຣະຜູ້ເປັນເຈົ້າຊົງປາກົດຕໍ່ຊາມູເອນ

Samuel's Calling and Prophetic Activity

1 ເດັກຊາຍຊາມູເອນໄດ້ຮັບໃຊ້ພຣະຜູ້ເປັນເຈົ້າພາຍໃຕ້ການນຳພາຂອງເອລີ ໃນເວລາທີ່ຮັບໃຊ້ຢູ່ນັ້ນ ກໍບໍ່ຄ່ອຍມີຖ້ອຍຄຳຈາກພຣະຜູ້ເປັນເຈົ້າປານໃດ ແລະດົນໆກໍຄ່ອຍມີການນິມິດຄັ້ງນຶ່ງ

2 ໃນຄືນນຶ່ງ ເອລີຊຶ່ງເປັນຄົນຕາບໍ່ດີຍ້ອນຄວາມຊະຣາ ໄດ້ນອນຢູ່ທີ່ຫ້ອງສ່ວນຕົວຂອງທ່ານ

3 ສ່ວນຊາມູເອນໄດ້ນອນຢູ່ໃນພຣະວິຫານບ່ອນທີ່ມີຫີບຄຳສັນຍາຂອງພຣະເຈົ້າ ແລະຕະກຽງກໍໄຕ້ຢູ່

4 ໃນຂນະທີ່ນອນຢູ່ນັ້ນ ພຣະຜູ້ເປັນເຈົ້າໄດ້ເອີ້ນຊາມູເອນ ແລະທ່ານກໍຂານຕອບວ່າ, "ໂດຍ ຂ້ານ້ອຍ"

5 ແລ້ວທ່ານກໍແລ່ນໄປເວົ້າຕໍ່ເອລີວ່າ, "ທ່ານເອີ້ນຂ້ານ້ອຍບໍ ຂ້ານ້ອຍຢູ່ນີ້ແລ້ວ" ແຕ່ເອລີຕອບວ່າ, "ຂ້ອຍບໍ່ໄດ້ເອີ້ນເຈົ້າ ຈົ່ງກັບຄືນໄປນອນສາ" ຊາມູເອນກໍກັບຄືນໄປນອນ

6 ພຣະຜູ້ເປັນເຈົ້າຊົງເອີ້ນຊາມູເອນຄັ້ງທີສອງ ເດັກຊາຍຄົນນີ້ກໍລຸກຂຶ້ນອີກ ແລະໄປເວົ້າຕໍ່ເອລີວ່າ, "ທ່ານເອີ້ນຂ້ານ້ອຍບໍ  ຂ້ານ້ອຍຢູ່ນີ້ແລ້ວ" ແຕ່ເອລີຕອບວ່າ, "ລູກເອີຍ ພໍ່ບໍ່ໄດ້ເອີ້ນເຈົ້າດອກຈົ່ງກັບຄືນໄປນອນສາ"

7 ຊາມູເອນກໍຍັງບໍ່ທັນຮູ້ຈັກພຣະຜູ້ເປັນເຈົ້າ ເພາະວ່າພຣະອົງຍັງບໍ່ເຄີຍເວົ້າກັບລາວມາກ່ອນ

8 ພຣະຜູ້ເປັນເຈົ້າເອີ້ນຊາມູເອນອີກເປັນຄັ້ງທີສາມ ລາວກໍລຸກຂຶ້ນອີກ ແລະໄປຖາມເອລີວ່າ, "ທ່ານເອີ້ນຂ້ານ້ອຍບໍ  ຂ້ານ້ອຍຢູ່ນີ້ແລ້ວ" ແລ້ວເອລີກໍເຂົ້າໃຈວ່າ ແມ່ນພຣະຜູ້ເປັນເຈົ້າເປັນຜູ້ຊົງເອີ້ນເດັກຊາຍນີ້

9 ດັ່ງນັ້ນ ທ່ານຈຶ່ງເວົ້າຕໍ່ຊາມູເອນວ່າ, "ຈົ່ງກັບຄືນໄປນອນສາ ແລະຖ້າວ່າທ່ານເອີ້ນເຈົ້າອີກໃຫ້ເຈົ້າເວົ້າວ່າ "ຜູ້ຮັບໃຊ້ຂອງພຣະອົງກຳລັງຟັງຢູ່ ຂໍພຣະອົງຊົງຮັບສັ່ງເທີ້ນ" ແລ້ວຊາມູເອນກໍກັບຄືນໄປນອນ

10 ຕໍ່ມາອີກ ພຣະຜູ້ເປັນເຈົ້າໄດ້ມາເອີ້ນຢູ່ບ່ອນນັ້ນຄືແຕ່ກ່ອນວ່າ, "ຊາມູເອນ ຊາມູເອນ"  ຊາມູເອນກໍຕອບຂຶ້ນວ່າ, "ຜູ້ຮັບໃຊ້ຂອງພຣະອົງກຳລັງຟັງຢູ່ ຂໍພຣະອົງຊົງຮັບສັ່ງເທີ້ນ"

11 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ເຂົາວ່າ, "ເຮົາຈະທຳສິ່ງທີ່ຫນ້າຢ້ານຫລາຍຕໍ່ອິສຣາເອນ ຖ້າທຸກຄົນໄດ້ຍິນເຣື່ອງນີ້ແລ້ວ ຈະຕ້ອງຢ້ານກົວທີ່ສຸດ

12 ໃນວັນນັ້ນ ເຮົາຈະທຳຕາມຄຳເວົ້າທັງຫມົດຂອງເຮົາທີ່ໄດ້ກ່າວໄວ້ຕໍ່ຄອບຄົວເອລີ

13 ເຮົາໄດ້ບອກເຂົາແລ້ວວ່າ ເຮົາຈະລົງໂທດຄອບຄົວຂອງເຂົາຕລອດໄປ ເພາະວ່າບຸດຊາຍທັງສອງຂອງເຂົາໄດ້ຢຽບຫຍາມພຣະເຈົ້າ ເຂົາບໍ່ໄດ້ຫ້າມປາມ

14 ດ້ວຍເຫດນີ້ ເຮົາຈຶ່ງເວົ້າຢ່າງຫນັກແຫນ້ນຕໍ່ຄອບຄົວຂອງເອລີວ່າ ບໍ່ມີການບູຊາ ຫລືການຖວາຍໃດໆທີ່ຈະສາມາດທຳໃຫ້ເຂົາພົ້ນຈາກຄວາມຜິດອັນຮ້າຍແຮງນີ້ໄດ້"

15 ຊາມູເອນນອນຫລັບໄປຈົນເຖິງມື້ເຊົ້າ ແລ້ວເຂົາໄດ້ລຸກຂຶ້ນໄປໄຂປະຕູວິຫານ ແຕ່ຊາມູເອນບໍ່ກ້າບອກນິມິດນີ້ແກ່ເອລີ

16 ເອລີໄດ້ເອີ້ນຊາມູເອນແລະກ່າວວ່າ, "ລູກເອີຍ"  ຊາມູເອນຕອບວ່າ, "ໂດຍ ຂ້ານ້ອຍ"

17 ແລ້ວເອລີຈຶ່ງຖາມຂຶ້ນວ່າ, “ພຣະຜູ້ເປັນເຈົ້າໄດ້ບອກເຈົ້າວ່າຢ່າງໃດ ຢ່າປິດບັງພໍ່ເລີຍ ຖ້າເຈົ້າບໍ່ບອກພໍ່ໃນສິ່ງທີ່
ພຣະອົງຊົງກ່າວແກ່ເຈົ້ານັ້ນ ພຣະເຈົ້າຈະລົງໂທດເຈົ້າຢ່າງຮ້າຍແຮງທີ່ສຸດ”
18 ດັ່ງນັ້ນ ຊາມູເອນຈຶ່ງບອກທ່ານທຸກຢ່າງໂດຍບໍ່ໄດ້ປິດບັງຫຍັງຫມົດ ແລ້ວເອລີຈຶ່ງເວົ້າວ່າ, “ພຣະອົງເປັນພຣະຜູ້
ເປັນເຈົ້າ ໃຫ້ພຣະອົງກະທຳທຸກຢ່າງຕາມນ້ຳພຣະທັຍຂອງພຣະອົງເທີນ”
19 ໃນຂນະທີ່ຊາມູເອນໃຫຍ່ເຕີບໂຕຂຶ້ນນັ້ນ ພຣະຜູ້ເປັນເຈົ້າກໍຊົງສະຖິດຢູ່ນຳເຂົາ ແລະຊົງທຳໃຫ້ທຸກສິ່ງທີ່ຊາມູ
ເອນໄດ້ເວົ້າອອກມານັ້ນໃຫ້ເປັນຄວາມຈິງ
20 ດັ່ງນັ້ນ ອິສຣາເອນທຸກຄົນແຕ່ເຫນືອຕລອດໃຕ້ ຈຶ່ງຮູ້ຈັກວ່າ ຊາມູເອນແມ່ນເປັນຜູ້ປະກາດພຣະທັມຂອງພຣະຜູ້
ເປັນເຈົ້າແທ້
21 ແລ້ວພຣະຜູ້ເປັນເຈົ້າໄດ້ຊົງປາກົດອີກທີ່ເມືອງຊີໂລ ເພາະພຣະຜູ້ເປັນເຈົ້າຊົງສຳແດງພຣະອົງແກ່ຊາມູເອນທີ່
ເມືອງຊີໂລ ໂດຍພຣະດຳຣັດຂອງພຣະຜູ້ເປັນເຈົ້າ ແລະຖ້ອຍຄຳຂອງຊາມູເອນມາເຖິງຄົນອິສຣາເອນທັງປວງ

## 4 ສັດຕຣູຍຶດເອົາຫີບຄຳສັນຍາ

The Ark of God Captured

1 ໃນເວລານັ້ນ ຊາວອິສຣາເອນໄດ້ອອກຮົບເສິກກັບຊາວຟີລິສຕິນ ຊາວອິສຣາເອນໄດ້ຕັ້ງຄ້າຍຢູ່ໃນເມືອງ ເອ
ເບນເອເຊີ ສ່ວນຊາວຟີລິສຕິນໄດ້ຕັ້ງຄ້າຍຢູ່ທີ່ເມືອງອາເຟັກ
2 ຊາວຟີລິສຕິນໄດ້ຕຽມສູ້ຮົບ ເຂົາໄດ້ຕໍ່ສູ້ຢ່າງດຸເດືອດຈົນຕີຊະນະຊາວອິສຣາເອນໄດ້ ໂດຍໄດ້ຂ້າເຂົາຕາຍໃນສ
ນາມຮົບປະມານສີ່ພັນຄົນ
3 ເມື່ອພວກທີ່ເຫລືອຕາຍໄດ້ກັບຄືນຄ້າຍພັກ ຜູ້ນຳຊາວອິສຣາເອນຈຶ່ງເວົ້າຂຶ້ນວ່າ, “ວັນນີ້ ເປັນຫຍັງພຣະຜູ້ເປັນ
ເຈົ້າຈຶ່ງໃຫ້ຊາວຟີລິສຕິນຊະນະພວກເຮົາ ຈົ່ງໄປເອົາຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າມາຈາກເມືອງຊີໂລ
ເພື່ອວ່າພຣະອົງຈະໄດ້ຢູ່ກັບພວກເຮົາ ແລະຊ່ອຍພວກເຮົາໃຫ້ພົ້ນຈາກເງື້ອມມືຂອງສັດຕຣູ
4 ດັ່ງນັ້ນ ເຂົາຈຶ່ງສົ່ງໄປເມືອງຊີໂລ ເພື່ອນຳຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າແຫ່ງຈັກກະວານ ຜູ້ຊົງປະທັບຢູ່ເທິງ
ພຣະທີ່ນັ່ງລະຫວ່າງກາງເຊຣູບິມນັ້ນມາ ຝ່າຍໂຮບນີ ແລະຟີເນຮັສບຸດຊາຍທັງສອງຂອງເອລີກໍມາພ້ອມຫີບຄຳ
ສັນຍາຂອງພຣະເຈົ້ານັ້ນ
5 ເມື່ອຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າມາຮອດ ອິສຣາເອນກໍຮ້ອງສຽງດັງສນັ່ນຂຶ້ນຈົນແຜ່ນດິນສັ່ນສະເທືອນ
6 ເມື່ອຊາວຟີລິສຕິນໄດ້ຍິນສຽງດັງສະຫນັ່ນຫວັ່ນໄຫວນັ້ນ ຈຶ່ງເວົ້າຂຶ້ນວ່າ, “ຈົ່ງຟັງສຽງຮ້ອງໃນຄ້າຍຂອງຊາວເຮັບ
ເຣີແມ ມັນແມ່ນຫຍັງແທ້ ແຕ່ເມື່ອເຂົາໄດ້ຮູ້ວ່າຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າໄດ້ມາຮອດຄ້າຍພັກຊາວ
ເຮັບເຣີແລ້ວ
7 ເຂົາກໍພາກັນຢ້ານ ແລະເວົ້າວ່າ, “ພຣະເຈົ້າໄດ້ມາຊ່ອຍໃນຄ້າຍພັກຂອງພວກເຂົາແລ້ວ ບັດນີ້ພວກເຮົາຈະຕ້ອງ
ເສັຽໄຊແຫລະ ເພາະພວກເຮົາບໍ່ເຄີຍພົບເຫັນແບບນີ້ມາກ່ອນເລີຍ
8 ແມ່ນໃຜຈະສາມາດຊ່ອຍພວກເຮົາໃຫ້ພົ້ນຈາກອຳນາດຂອງພຣະເຈົ້າອົງນີ້ໄດ້ ແມ່ນພຣະເຈົ້າອົງນີ້ແຫລະ ທີ່
ໄດ້ຂ້າຊາວເອຢິບດ້ວຍພັຍວິບັດນາໆຊະນິດຢູ່ໃນຖິ່ນກັນດານ
9 ຊາວຟີລິສຕິນທັງຫລາຍເອີຍ ຈົ່ງເຂັ້ມແຂງເທີນ ຈົ່ງຕໍ່ສູ້ຢ່າງລູກຜູ້ຊາຍ ຫລືວ່າພວກເຮົາຈະເປັນທາດຂອງຊາວ
ເຮັບເຣີ ດັ່ງທີ່ພວກເຂົາເຄີຍເປັນທາດຂອງພວກເຮົາ ດັ່ງນັ້ນຈົ່ງຕໍ່ສູ້ຢ່າງຜູ້ຊາຍເທີນ”
10 ຝ່າຍຊາວຟີລິສຕິນກໍຕໍ່ສູ້ຢ່າງພິລະອາດຫານ ອິສຣາເອນຈຶ່ງຝ່າຍແພ້ ແລະແຕກຫນີເມືອບ້ານເມືອງຂອງຕົນ
ທະຫານອິສຣາເອນໄດ້ຖືກຂ້າຕາຍສາມສິບພັນຄົນ ຊຶ່ງເປັນການເສັຽຊັຍຄັ້ງຍິ່ງໃຫຍ່
11 ສ່ວນຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າກໍຖືກຍຶດເອົາໄປ ໂຮບນີ ແລະຟີເນຮັສ ບຸດຊາຍທັງສອງຂອງເອລີກໍຖືກ
ຂ້າຕາຍ

### ເອລີເສັຽຊີວິດ

Death of Eli

12 ໃນວັນດຽວກັນນັ້ນ ມີຊາຍຕະກູນເບັນຢາມີນຄົນນຶ່ງໄດ້ແລ່ນມາແຕ່ສນາມຮົບ ມາເມືອງຊີໂລດ້ວຍຄວາມໂສກ
ເສົ້າ ເຂົາໄດ້ຈີກເສື້ອ ແລະເອົາຂີ້ດິນໂຮຍໃສ່ຫົວ
13 ຊາຍຄົນນັ້ນມາໃນເມືອງເພື່ອບອກຂ່າວ ເມື່ອທຸກຄົນໄດ້ຍິນກໍຮ້ອງໄຫ້ດ້ວຍຄວາມເສັຽໃຈ ສ່ວນ  ເອລີທີ່ກຳລັງ
ນັ່ງຄອຍຖ້າຢູ່ໃກ້ຫົນທາງພ້ອມທັງຄິດເປັນຫ່ວງນຳຫີບຄຳສັນຍາຂອງພຣະເຈົ້າ
14 ເມື່ອທ່ານໄດ້ຍິນສຽງອຶກກະທຶກນຶກນອງຈຶ່ງຖາມຂຶ້ນວ່າ, “ແມ່ນສຽງຫຍັງ”  ຊາຍຄົນນັ້ນກໍຟ້າວແລ່ນມາບອກ
ຂ່າວແກ່ເອລີ
15 ໃນຂນະນີ້ເອລີມີອາຍຸໄດ້ເກົ້າສິບແປດປີ ແລະຕາກໍບອດຫມົດ
16 ຊາຍຄົນນັ້ນຈຶ່ງເວົ້າວ່າ, “ວັນນີ້ຂ້າພະເຈົ້າຫນີມາຈາກສນາມຮົບ ແລະໄດ້ແລ່ນມາບ່ອນນີ້” ເອລີຈຶ່ງຖາມ
ເຂົາວ່າ, “ລູກເອີຍ ມີເຣື່ອງຫຍັງເກີດຂຶ້ນ”
17 ຄົນນຳຂ່າວຜູ້ນັ້ນຈຶ່ງຕອບວ່າ, “ຊາວຟີລິສຕິນໄດ້ໄລ່ຊາວອິສຣາເອນແຕກພ່າຍຫນີໄປ ມັນເປັນການຜ່າຍແພ້
ຢ່າງຫນ້າຢ້ານທີ່ສຸດສຳລັບພວກເຮົາ ຢູ່ໃນເຫດການນັ້ນ ໂຮບນີ ແລະຟີເນຮັສ ລູກທັງສອງຂອງທ່ານກໍຖືກຂ້າ
ດ້ວຍ ແລະຫີບຄຳສັນຍາຂອງພຣະເຈົ້າກໍຖືກຍຶດໄປ”
18 ສ່ວນເອລີຊຶ່ງນັ່ງຢູ່ໃກ້ປະຕູວິຫານ ພໍຊາຍຄົນນັ້ນເວົ້າເຖິງຫີບຄຳສັນຍາ ທ່ານກໍຫງາຍຫລັງລົງຈົນຄໍຫັກຕາຍ
ເພາະວ່າທ່ານເປັນຄົນເຖົ້າ ແລະຕຸ້ຍ ເອລີເປັນຜູ້ປົກຄອງພວກອິສຣາເອນເປັນເວລາສີ່ສິບປີ

### ເມັຽຟີເນຮັສເສັຽຊີວິດ

19 ລູກໄພ້ຂອງເອລີ ຜູ້ເປັນເມັຽຂອງຟີເນຮັສ ຊຶ່ງກຳລັງຖືພາ ແລະໃກ້ຈະຄອດ ເມື່ອນາງໄດ້ຍິນຂ່າວວ່າຫີບຄຳສັນ
ຍາຂອງ    ພຣະເຈົ້າຖືກຍຶດ ແລະພໍ່ປູ່ກັບຜົວຂອງຕົນກໍເສັຽຊີວິດແລ້ວ ໃນທັນໃດນັ້ນ ດ້ວຍຄວາມເສັຽໃຈນາງກໍ
ເຈັບທ້ອງ ແລະຄອດບຸດອອກມາ
20 ນາງກຳລັງຈະສິ້ນໃຈຕາຍ ແຕ່ພວກຜູ້ຍິງທີ່ພວມຊິດຊ່ອຍນາງນັ້ນໄດ້ເວົ້າວ່າ, “ເຈົ້າໄດ້ລູກຊາຍໃດ໋ ຈົ່ງເຮັດໃຈ
ໃຫ້ເຂັ້ມແຂງເອົາໄວ້” ແຕ່ນາງບໍ່ໄດ້ຟັງ ຫລືຕອບຢ່າງໃດຫມົດ
21 ນາງໄດ້ໃສ່ຊື່ເດັກນັ້ນວ່າ ອີຄາໂບດ ຊຶ່ງແປວ່າ “ຣັສມີຂອງພຣະເຈົ້າໄດ້ຈາກອິສຣາເອນໄປແລ້ວ”  ຊຶ່ງຫມາຍ
ເຖິງຫີບຄຳສັນຍາຖືກຍຶດໄປ ແລະພໍ່ປູ່ກັບຜົວຂອງນາງກໍເສັຽຊີວິດ
22 ນາງໄດ້ກ່າວວ່າ, “ຣັສມີຂອງພຣະເຈົ້າໄດ້ຈາກພວກອິສຣາເອນໄປແລ້ວ ເພາະວ່າ ຫີບຄຳສັນຍາຂອງພຣະເຈົ້າ
ກໍໄດ້ຖືກຍຶດໄປ”

## 5 ຫີບຄຳສັນຍາໃນແຜ່ນດິນຂອງຟີລິສຕິນ

The Philistines and the Ark

1 ເມື່ອຊາວຟີລິສຕິນໄດ້ຍຶດຫີບຄຳສັນຍາຂອງພຣະເຈົ້າໄປນັ້ນ ພວກເຂົານຳໄປຈາກເອເບນເອເຊີເຖິງເມືອງອັສ
ໂດດ
2 ຊາວຟີລິສຕິນກໍນຳເອົາຫີບຄຳສັນຍາຂອງພຣະເຈົ້າເຂົ້າໄປໄວ້ໃນໂບດຂອງພຣະດາໂກນ ແລະວາງໄວ້ຂ້າງພ
ຣະດາໂກນ
3 ເມື່ອປະຊາຊົນຊາວອັສໂດດຕື່ນເຊົ້າໃນວັນຮຸ່ງຂຶ້ນ ເບິ່ງແມ, ພຣະດາໂກນໄດ້ລົ້ມຫນ້າຄວ່ຳລົງມາຍັງພື້ນດິນຕໍ່
ຫນ້າຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າ ເຂົາທັງຫລາຍຈຶ່ງຍົກພຣະດາໂກນຂຶ້ນຕັ້ງໄວ້ໃນທີ່ເດີມ

4 ແຕ່ເມື່ອເຂົາທັງຫລາຍຕື່ນເຊົ້າໃນວັນຮຸ່ງຂຶ້ນ ເບິ່ງແມ, ພຣະດາໂກນກໍລົ້ມຫນ້າຄວ່ຳລົງມາຍັງພື້ນດິນຕໍ່ຫນ້າຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າ ສຽນຂອງພຣະດາໂກນ ແລະມືທັງສອງກໍຫັກອອກຢູ່ທີ່ປະຕູ ເຫລືອຢູ່ແຕ່ລຳຕົວພຣະດາໂກນ

5 ເພາະເຫດນີ້ປະໂຣຫິດຂອງພຣະດາໂກນ ແລະຜູ້ທີ່ເຂົ້າໄປໃນໂບດຂອງພຣະດາໂກນຈຶ່ງບໍ່ຢຽບປະຕູໂບດພຣະດາໂກນທີ່ເມືອງອັສໂດດຈົນເຖິງທຸກວັນນີ້

6 ພຣະຫັດຂອງພຣະຜູ້ເປັນເຈົ້າຢູ່ເຫນືອປະຊາຊົນອັສໂດດຢ່າງຫນັກ ພຣະອົງຊົງກະທຳໃຫ້ເຂົາຢ້ານກົວ ແລະຊົງລົງໂທດເຂົາດ້ວຍຕຸ່ມຝີ ທັງຊາວອັສໂດດ ແລະເຂດແດນຂອງຊາວເມືອງນັ້ນ

7 ແລະເມື່ອຊາວເມືອງອັສໂດດເຫັນດັ່ງນັ້ນ ເຂົາທັງຫລາຍກ່າວວ່າ, “ຢ່າໃຫ້ຫີບຄຳສັນຍາຂອງພຣະເຈົ້າຂອງອິສຣາເອນຢູ່ກັບເຮົາເລີຍ ເພາະວ່າພຣະຫັດຂອງພຣະຢູ່ເຫນືອເຮົາ ແລະເຫນືອພຣະດາໂກນພຣະຂອງເຮົາຢ່າງຫນັກ”

8 ເຂົາຈຶ່ງໃຊ້ຄົນໄປເອີ້ນປະຊຸມເຈົ້ານາຍທັງຫມົດຂອງຟີລິສຕິນ ແລະກ່າວວ່າ, “ ເຮົາຈະທຳຢ່າງໃດກັບຫີບຄຳສັນຍາຂອງ ພຣະເຈົ້າຂອງອິສຣາເອນ” ເຂົາທັງຫລາຍຕອບວ່າ, “ໃຫ້ເຮົານຳຫີບຄຳສັນຍາຂອງພຣະເຈົ້າຂອງອິສຣາເອນອ້ອມໄປທາງເມືອງກາດ” ເພາະສະນັ້ນເຂົາຈຶ່ງນຳຫີບແຫ່ງພຣະເຈົ້າຂອງອິສຣາເອນໄປທີ່ນັ້ນ

9 ແຕ່ເມື່ອເຂົາທັງຫລາຍນຳຫີບອ້ອມໄປເມືອງກາດນັ້ນແລ້ວ ພຣະຫັດຂອງພຣະຜູ້ເປັນເຈົ້າກໍຕໍ່ສູ້ເມືອງນັ້ນທຳໃຫ້ເກີດຄວາມວຸ້ນວາຍຢ່າງຫນັກ ແລະຊົງຕໍ່ສູ້ຊາວເມືອງນັ້ນທັງເດັກແລະຜູ້ໃຫຍ່ ຄືໃຫ້ເກີດຕຸ່ມຝີຂຶ້ນທີ່ຕົວເຂົາທັງຫລາຍ

10 ເຂົາຈຶ່ງສົ່ງຫີບແຫ່ງພຣະເຈົ້າໄປຍັງເມືອງເອກໂຣນ ແລະຢູ່ມາເມື່ອຫີບແຫ່ງພຣະເຈົ້າມາເຖິງເມືອງເອກໂຣນຊາວເມືອງເອກໂຣນຮ້ອງວ່າ, “ເຂົາໄດ້ນຳຫີບແຫ່ງພຣະເຈົ້າຂອງອິສຣາເອນມາໃຫ້ເຮົາ ເພື່ອຈະຂ້າເຮົາແລະປະຊາຊົນຂອງເຮົາເສັຽ”

11 ເພາະສະນັ້ນ ເຂົາຈຶ່ງສົ່ງຄົນໄປເອີ້ນປະຊຸມເຈົ້ານາຍທັງຫມົດຂອງຄົນຟີລິສຕິນ ແລະກ່າວວ່າ, “ຈົ່ງສົ່ງຫີບແຫ່ງພຣະເຈົ້າຂອງອິສຣາເອນໄປເສັຽໃຫ້ຫີບນັ້ນກັບໄປຍັງທີ່ເດີມ ເພື່ອຫີບນັ້ນຈະບໍ່ໄດ້ຂ້າເຮົາ ຫລືປະຊາຊົນຂອງເຮົາເສັຽ” ເພາະວ່າມີຄວາມວຸ້ນວາຍຢ່າງຫນ້າຢ້ານຕາຍແຜ່ໄປທົ່ວປະເທດນັ້ນ ພຣະຫັດຂອງພຣະເຈົ້າກໍຢູ່ທີ່ນັ້ນຢ່າງຫນັກ

12 ຄົນທີ່ບໍ່ຕາຍກໍເປັນຕຸ່ມຝີ ແລະສຽງຮ້ອງຂອງຊາວເມືອງນັ້ນກໍຂຶ້ນໄປຍັງຟ້າສວັນ

## 6 ຫີບຄຳສັນຍາຖືກສົ່ງກັບຄືນ

The Ark Returned to Israel

1 ຫີບແຫ່ງພຣະເຈົ້າຢູ່ໃນຖິ່ນຄົນຟີລິສຕິນເຈັດເດືອນ

2 ພວກຟີລິສຕິນກໍເຊີນພວກປະໂຣຫິດ ແລະພວກໂຫນມາກ່າວວ່າ, “ເຮົາຈະເຮັດຢ່າງໃດກັບຫີບແຫ່ງພຣະເຈົ້າດີຂໍບອກເຮົາວ່າຈະສົ່ງຫີບໄປຍັງທີ່ເດີມ ພວກເຮົາຄວນສົ່ງຫຍັງໄປພ້ອມແດ່”

3 ເຂົາທັງຫລາຍຕອບວ່າ, “ຖ້າທ່ານທັງຫລາຍຈະສົ່ງຫີບແຫ່ງພຣະເຈົ້າຂອງອິສຣາເອນໄປ ກໍຢ່າສົ່ງໄປລ້າໆ ເຖິງຢ່າງໃດກໍຂໍສົ່ງເຄື່ອງບູຊາໄຖ່ຄວາມຜິດໄປດ້ວຍ ແລ້ວທ່ານທັງຫລາຍຈະຫາຍໂຣກ ແລະທ່ານທັງຫລາຍຈະຮູ້ດ້ວຍວ່າເຫດໃດ

ພຣະຫັດນີ້ຈຶ່ງບໍ່ຫັນໄປເສັຽຈາກທ່ານ”

4 ແລະເຂົາກ່າວວ່າ, “ພວກເຮົາຈະສົ່ງຂອງຖວາຍຢ່າງໃດໄປໃຫ້ພຣະອົງ” ເຂົາທັງຫລາຍຕອບວ່າ, “ຈົ່ງເຮັດຕຸ່ມຝີເປັນຄຳຫ້າກ້ອນ ແລະຫນູເປັນຄຳຫ້າໂຕ ຕາມຈຳນວນເຈົ້ານາຍແຫ່ງຊາວຟີລິສຕິນ ເພາະວ່າໂຣກຢ່າງດຽວກັນນັ້ນຕິດຕໍ່ທ່ານທັງຫລາຍແລະເຈົ້ານາຍດ້ວຍ

5 ເພາະສະນັ້ນ ທ່ານຕ້ອງທຳຮູບຝີຂອງທ່ານ ແລະຮູບໜູຂອງທ່ານຊຶ່ງທຳລາຍແຜ່ນດິນ ແລະທ່ານທັງຫລາຍຈົ່ງ
ຖວາຍ ພຣະກຽດແດ່ພຣະເຈົ້າຂອງອິສຣາເອນ ບາງທີພຣະອົງຈະຊົງຜ່ອນເບົາພຣະຫັດຂອງພຣະອົງຈາກ
ທ່ານທັງຫລາຍ ທັງຈາກພຣະຂອງທ່ານ ແລະແຜ່ນດິນຂອງທ່ານ
6 ເປັນຫຍັງທ່ານຈຶ່ງທຳໃຫ້ຈິດໃຈຂອງທ່ານແຂງກະດ້າງໄປ ຢ່າງທີ່ຊາວເອຢິບ ແລະຟາຣາໂອໄດ້ກະທຳຈິດໃຈ
ຂອງເຂົາໃຫ້ແຂງກະດ້າງນັ້ນ ເມື່ອພຣະອົງຊົງກະທຳເຫດການສູ້ເຂົາທັງຫລາຍແລ້ວ ເຂົາທັງຫລາຍກໍຕ້ອງປ່ອຍ
ໃຫ້ປະຊາຊົນໄປບໍ່ແມ່ນຫລື ແລ້ວເຂົາທັງຫລາຍກໍຈາກໄປ
7 ບັດນີ້ ຈົ່ງຕຽມກວຽນໃຫມ່ຄັນນຶ່ງມາຫຽມເຂົ້າກັນກັບແມ່ງົວຄູ່ນຶ່ງຊຶ່ງຍັງບໍ່ເຄີຍເຂົ້າຫຽມແອກເລີຍ ຈົ່ງເອົາແມ່ງົວ
ມາຫຽມກວຽນແລ້ວພາກລູກໆຂອງມັນກັບເມືອບ້ານເສັຽໃຫ້ພົ້ນຈາກມັນ
8 ຈົ່ງເອົາຫີບແຫ່ງພຣະເຈົ້າມາວາງໄວ້ເທິງກວຽນ ແລະວາງເຄື່ອງທອງຄຳ ຊຶ່ງທ່ານທັງຫລາຍຖວາຍໃຫ້ພຣະອົງ
ເປັນເຄື່ອງບູຊາໄຖ່ຄວາມຜິດໄວ້ໃນຫີບຂ້າງໆແລ້ວກໍປ່ອຍໃຫ້ມັນໄປ
9 ແລະຊອມເບິ່ງ ຖ້າໄປຕາມທາງເຖິງແຜ່ນດິນຂອງມັນເອງ ຄືທາງໄປເມືອງເບັດເຊເມສ ພຣະອົງກໍເປັນຜູ້ຊົງໃຫ້
ເກີດອັນຕະຣາຍຢ່າງໃຫຍ່ຫລວງນີ້ແກ່ເຮົາ ຖ້າບໍ່ເຊັ່ນນັ້ນ ເຮົາຈະໄດ້ຮູ້ວ່າບໍ່ແມ່ນພຣະຫັດຂອງພຣະອົງທີ່ກະທຳ
ຕໍ່ເຮົາ ເປັນເຄາະກັມທີ່ບັງເອີນເກີດຂຶ້ນແກ່ເຮົາເອງ"
10 ຄົນເຫລົ່ານັ້ນກໍກະທຳຕາມນຳເອົາແມ່ງົວຄູ່ນຶ່ງຫຽມເຂົ້າກັບກວຽນ ແລ້ວຂັງລູກໆຂອງມັນໄວ້ທີ່ບ້ານ
11 ແລະເຂົາກໍວາງຫີບແຫ່ງພຣະເຈົ້າໄວ້ເທິງກວຽນພ້ອມກັບຫີບໜູຄຳ ແລະຮູບຝີຂອງເຂົາ
12 ແມ່ງົວກໍເດີນໄປຕາມທາງທີ່ໄປເມືອງເບັດເຊເມສ ໄປຕາມທາງຫລວງ ທັງເດີນທັງຮ້ອງບໍ່ລ້ຽວຂວາຫລືລ້ຽວ
ຊ້າຍ ແລະບັນດາເຈົ້ານາຍແຫ່ງຊາວຟີລິສຕິນກໍຕາມມັນໄປຈົນເຖິງຊາຍແດນເມືອງເບັດເຊເມສ
13 ເມື່ອຊາວເມືອງເບັດເຊເມສກຳລັງກ່ຽວເຂົ້າສາລີຢູ່ທີ່ຮ່ອມພູ ແລະເມື່ອເຂົາເງີຍໜ້າຂຶ້ນແລະເຫັນຫີບ ເຂົາກໍຊື່ນ
ຊົມຍິນດີທີ່ໄດ້ເຫັນ
14 ກວຽນນັ້ນໄດ້ເຂົ້າມາໃນນາຂອງໂຢຊວຍຊາວເບັດເຊເມສ ແລະຢຸດຢູ່ທີ່ນັ້ນ ມີຫີນໃຫຍ່ກ້ອນນຶ່ງຢູ່ທີ່ນັ້ນ ເຂົາຈຶ່ງ
ຜ່າໄມ້ກວຽນເປັນຟືນ ແລະເອົາແມ່ງົວເປັນເຄື່ອງເຜົາບູຊາຖວາຍແດ່ພຣະຜູ້ເປັນເຈົ້າ
15 ຊາວເລວີກໍເຊີນຫີບຄຳສັນຍາແຫ່ງພຣະຜູ້ເປັນເຈົ້າລົງ ແລະຫີບທີ່ຢູ່ຂ້າງໆຊຶ່ງມີເຄື່ອງທອງຄຳ ວາງໄວ້ເທິງກ້ອນ
ຫີນໃຫຍ່ນັ້ນ ແລະຊາວເບັດເຊເມສກໍຖວາຍເຄື່ອງສັຕບູຊາແດ່ພຣະຜູ້ເປັນເຈົ້າໃນວັນນັ້ນ
16 ເມື່ອເຈົ້ານາຍທັງຫ້າຂອງຊາວຟີລິສຕິນໄດ້ເຫັນແລ້ວເຂົາກໍກັບໄປຍັງເມືອງເອັກໂຣນໃນວັນນັ້ນ
17 ຕໍ່ໄປນີ້ເປັນຮູບຝີທອງຄຳຊຶ່ງຊາວຟີລິສຕິນຖວາຍເປັນເຄື່ອງບູຊາໄຖ່ຄວາມຜິດຖວາຍແດ່ພຣະຜູ້ເປັນເຈົ້າ ຮູບ
ນຶ່ງສຳລັບເມືອງອັສໂດດ ເມືອງກາຊາຮູບນຶ່ງ ເມືອງອັສເກໂລນຮູບນຶ່ງ ເມືອງກາດຮູບນຶ່ງ ເມືອງເອກໂຣນຮູບນຶ່ງ
18 ຮູບໜູທອງຄຳກໍເຊັ່ນດຽວກັນ ຕາມຈຳນວນເມືອງຂອງຟີລິສຕິນທີ່ເປັນເມືອງຂອງເຈົ້ານາຍທັງຫ້າ ທັງເມືອງທີ່
ມີປ້ອມປ້ອງກັນ ແລະຊົນນະບົດທີ່ບໍ່ມີກຳແພງເມືອງ ຫີນກ້ອນໃຫຍ່ຊຶ່ງເຂົາວາງຫີບຂອງພຣະຜູ້ເປັນເຈົ້າລົງໄວ້
ນັ້ນກໍຍັງເປັນພຍານຢູ່ຈົນເຖິງທຸກວັນນີ້ທີ່ໃນທົ່ງນາຂອງໂຢຊວຍຊາວເບັດເຊເມສ

The Ark at Kiriath-jearim

19 ພຣະອົງຈຶ່ງຊົງປະຫານຊາວເບັດເຊເມສ ເພາະວ່າເຂົາທັງຫລາຍໄດ້ສ່ອງເບິ່ງຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າ
ພຣະອົງໄດ້ຊົງປະຫານເຈັດສິບຄົນ ແລະປະຊາຊົນກໍໄວ້ທຸກ ເພາະວ່າພຣະຜູ້ເປັນເຈົ້າຊົງປະຫານປະຊາຊົນ
ເສັຽເປັນຈຳນວນມາກໃນຖ້າມກາງພວກເຂົາ
20 ແລ້ວຊາວເບັດເຊເມສຈຶ່ງກ່າວວ່າ, "ຜູ້ໃດສາມາດຢືນຢູ່ຕໍ່ພຣະຜູ້ເປັນເຈົ້າ ພຣະເຈົ້າບໍຣິສຸດອົງນີ້ໄດ້ ພຣະອົງຈະ
ສະເດັດໄປຈາກເຮົາໄປຫາຜູ້ໃດດີ"
21 ດັ່ງນັ້ນເຂົາຈຶ່ງສົ່ງສານໄປຍັງຊາວເມືອງກີຣິອາດເຢອາຣິມກ່າວວ່າ, "ຄົນຟີລິສຕິນໄດ້ຄືນຫີບຄຳສັນຍາຂອງພ
ຣະຜູ້ເປັນເຈົ້າມາແລ້ວ ຂໍລົງມາເຊີນຫີບຂຶ້ນໄປຢູ່ກັບທ່ານເຖີດ"

# 7

Chapter 7

1 ຊາວເມືອງເກຣີອາດເຢອາຣີມໄດ້ມາເຊີນຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າຂຶ້ນໄປເຖິງເຮືອນຂອງອາບີນາ
ດາບຢູ່ເທິງເນີນພູ ແລະເຂົາທັງຫລາຍກໍຊຳຣະເອເລອາຊາບຸດຊາຍຂອງເຂົາໃຫ້ເປັນຜູ້ຮັບຫນ້າທີ່ເບິ່ງແຍງຫີບ
ຄຳສັນຍາຂອງພຣະຜູ້ເປັນເຈົ້ານີ້
2 ນັບຕັ້ງແຕ່ວັນທີ່ຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າໄດ້ຖືກຮັກສາໄວ້ຢູ່ທີ່ເມືອງກີຣີອາດເຢອາຣີມ ເປັນເວລາດົນ
ນານເຖິງຊາວປີ ຊາວອິສຣາເອນທຸກຄົນໄດ້ຮ້ອງຄ່ຳຄວນຂໍຄວາມຊ່ວຍເຫລືອຈາກພຣະຜູ້ເປັນເຈົ້າ

**ຊາມູເອນປົກຄອງປະເທດອິສຣາເອນ**

Samuel as Judge

3 ຊາມູເອນຈຶ່ງເວົ້າຕໍ່ອິສຣາເອນວ່າ, “ຖ້າພວກເຈົ້າຈະກັບຄືນມາຫາພຣະຜູ້ເປັນເຈົ້າດ້ວຍຄວາມເຕັມໃຈ ພວກ
ເຈົ້າຕ້ອງກຳຈັດພຣະຕ່າງໆຂອງຊາວຕ່າງດ້າວ ແລະຮູບພຣະອັຊຕາຣ໌ເຕສນັ້ນເສັຽ ແລ້ວຈຶ່ງອຸທິດຕົນຖວາຍແດ່
ພຣະຜູ້ເປັນເຈົ້າ ແລະນະມັສການແຕ່ພຣະອົງເທົ່ານັ້ນ ພຣະອົງຈະຊ່ອຍຊີວິດພວກເຈົ້າໃຫ້ພົ້ນຈາກອຳນາດ
ຂອງຊາວຟີລິສຕິນ”
4 ດັ່ງນັ້ນ ອິສຣາເອນຈຶ່ງທຳລາຍຮູບພຣະບາອານ ແລະພຣະອັຊຕາຣ໌ເຕສຂອງເຂົາ ແລ້ວໄດ້ນະມັສການແຕ່ພຣະ
ຜູ້ເປັນເຈົ້າເທົ່ານັ້ນ
5 ແລ້ວຊາມູເອນກໍບອກຊາວອິສຣາເອນທຸກຄົນວ່າ, “ຂໍໃຫ້ພວກເຈົ້າທຸກຄົນໄປໂຮມກັນຢູ່ທີ່ເມືອງມິສປາ ແລະຢູ່
ບ່ອນນັ້ນ ຂ້າພະເຈົ້າຈະອ້ອນວອນຂໍພຣະຜູ້ເປັນເຈົ້າສຳລັບພວກເຈົ້າ”
6 ດັ່ງນັ້ນ ພວກເຂົາທຸກຄົນຈຶ່ງໄປໂຮມກັນຢູ່ທີ່ເມືອງມິສປາ ເຂົາໄດ້ຕັກເອົານ້ຳ ແລະຖອກຖວາຍແກ່ພຣະຜູ້ເປັນ
ເຈົ້າ ແລະຖືສິນອົດອາຫານຕລອດມື້ ເຂົາເວົ້າວ່າ, “ພວກຂ້າພຣະອົງໄດ້ທຳຜິດຕໍ່ພຣະຜູ້ເປັນເຈົ້າແລ້ວ” ສ່ວນ
ຊາມູເອນກໍຢູ່ທີ່ເມືອງມິສປາ ແລະປົກຄອງຊາວອິສຣາເອນ
7 ເມື່ອຊາວຟີລິສຕິນໄດ້ຍິນຂ່າວວ່າຊາວອິສຣາເອນທ້ອນໂຮມກັນຢູ່ທີ່ເມືອງມິສປາ ຫົວຫນ້າຊາວຟີລິສຕິນຫ້າ
ຄົນພ້ອມທັງທະຫານຈຳນວນນຶ່ງກໍຕຽມອອກໄປໂຈມຕີກັບເຂົາ ເມື່ອຊາວອິສຣາເອນໄດ້ຍິນຂ່າວເຣື່ອງນີ້ກໍພາ
ກັນຢ້ານກົວ
8 ແລະເວົ້າຕໍ່ຊາມູເອນວ່າ, “ຈົ່ງອ້ອນວອນຫາພຣະຜູ້ເປັນເຈົ້າຂອງພວກເຮົາ ເພື່ອພຣະອົງຈະຊ່ອຍພວກເຮົາໃຫ້
ພົ້ນຈາກການໂຈມຕີຂອງຊາວຟີລິສຕິນ”
9 ຊາມູເອນໄດ້ຂ້າແກະນ້ອຍ ແລະເຜົາຫມົດທັງໂຕຖວາຍແກ່ພຣະຜູ້ເປັນເຈົ້າ ທ່ານໄດ້ອ້ອນວອນຂໍພຣະຜູ້ເປັນ
ເຈົ້າໃຫ້ຊ່ອຍເຫລືອຊາວອິສຣາເອນ ແລະພຣະຜູ້ເປັນເຈົ້າກໍຊົງຕອບຄຳອ້ອນວອນຂອງທ່ານ
10 ໃນຂນະທີ່ ຊາມູເອນກຳລັງຖວາຍເຄື່ອງບູຊານັ້ນ ຊາວຟີລິສຕິນກໍເຄື່ອນທັບເຂົ້າມາໂຈມຕີ ແຕ່ພຣະຜູ້ເປັນເຈົ້າ
ຊົງທຳໃຫ້ເຂົາໄດ້ຍິນສຽງຟ້າຮ້ອງອັນຫນ້າຢ້ານ ເຂົາຈຶ່ງສັບສົນອົນລະວົນ ແລະຜ່າຍຫນີໄປ
11 ຝ່າຍຊາວອິສຣາເອນກໍຍົກຂະບວນອອກມາຈາກເມືອງມິສປາໄລ່ຕິດຕາມຊາວຟີລິສຕິນ ແລະຂ້າຟັນເຂົາໄປ
ຈົນຮອດເມືອງເບັດກາຣ໌
12 ແລ້ວຊາມູເອນຈຶ່ງເອົາກ້ອນສີລາກ້ອນນຶ່ງຕັ້ງຂຶ້ນຢູ່ລະຫວ່າງເມືອງມິສປາ ແລະເມືອງເຢຊານາ ແລ້ວເວົ້າວ່າ,
“ພຣະຜູ້ເປັນເຈົ້າຊົງຊ່ອຍເຫລືອພວກຂ້າພຣະອົງມາຈົນເຖິງບ່ອນນີ້” ດັ່ງນັ້ນທ່ານຈຶ່ງໃສ່ຊື່ກ້ອນສີລານັ້ນວ່າ “ເອ
ເບນເອເຊີ “ (ກ້ອນຫີນຊ່ອຍເຫລືອ)

13 ຊາວຟີລິສຕິນໄດ້ພ່າຍແພ້ ແລະພຣະຜູ້ເປັນເຈົ້າກໍບໍ່ໃຫ້ເຂົາບຸກຣຸກເຂດແດນຂອງຊາວອິສຣາເອນອີກ ໃນເວລາທີ່ຊາມູເອນຍັງມີຊີວິດຢູ່
14 ທຸກໆຫົວເມືອງຕັ້ງແຕ່ເມືອງເອກໂຣນຈົນຮອດເມືອງກາດ ບ່ອນທີ່ຟີລິສຕິນຍຶດເອົາໄປນັ້ນ ກໍໄດ້ກັບຄືນມາເປັນຂອງຊາວອິສຣາເອນ ແລະຊາວອິສຣາເອນທຸກຄົນກໍໄດ້ເຂດແດນຂອງເຂົາຄືນຫມົດ ແລ້ວຄວາມສງົບສຸກຈຶ່ງເກີດມີຂຶ້ນລະຫວ່າງຊາວອິສຣາເອນ ແລະຊາວການາອານ
15 ຊາມູເອນໄດ້ປົກຄອງຊາວອິສຣາເອນຕລອດຊົ່ວຊີວິດຂອງທ່ານ
16 ທຸກໆປີທ່ານຕ້ອງໄປເມືອງເບັດເອນ ເມືອງກິນການ ແລະເມືອງມິສປາ ແລະທ່ານມີຫນ້າທີ່ປົກຄອງໃນເມືອງເຫລົ່ານີ້
17 ແລ້ວທ່ານກໍໄດ້ກັບຄືນເມືອເຮືອນຂອງທ່ານທີ່ເມືອງຣາມາ ໃນເມືອງນີ້ ທ່ານເປັນຜູ້ປົກຄອງເຊັ່ນດຽວກັນ ຢູ່ໃນເມືອງຣາມານີ້ ທ່ານໄດ້ສ້າງແທ່ນບູຊາຖວາຍແກ່ພຣະຜູ້ເປັນເຈົ້າ

## 8 ປະຊາຊົນຮ້ອງຂໍເອົາເຈົ້າຊີວິດ

Israel Demands a King

1 ເມື່ອຊາມູເອນເຖົ້າແກ່ແລ້ວ ທ່ານໃຫ້ບຸດຊາຍຂອງທ່ານປົກຄອງປະເທດອິສຣາເອນແທນ
2 ຜູ້ອ້າຍຊື່ວ່າ ໂຢເອນ ແລະຜູ້ນ້ອງຊື່ວ່າ ອາບີຢາ ເຂົາທັງສອງປົກຄອງທີ່ເມືອງເບເອີເຊບາ
3 ແຕ່ວ່າເຂົາບໍ່ປະພຶດຕາມແບບຢ່າງຂອງບິດາ ເຂົາສົນໃຈແຕ່ນຳເຣື່ອງເງິນຄຳເທົ່ານັ້ນ ເຂົາຮັບເອົາສິນບົນ ແລະບໍ່ໄດ້ຕັດສິນຄວາມຢ່າງສັດຊື່
4 ແລ້ວພວກເຈົ້ານາຍອິສຣາເອນທຸກຄົນກໍປະຊຸມກັນ ແລ້ວພາກັນໄປຫາຊາມູເອນທີ່ເມືອງຣາມາ
5 ແລະເວົ້າຕໍ່ທ່ານວ່າ, "ທ່ານເອີຍ ທ່ານກໍເຖົ້າແກ່ຫລາຍແລ້ວ ລູກຊາຍຂອງທ່ານບໍ່ໄດ້ປະພຶດຕາມແບບຢ່າງຂອງທ່ານເລີຍ ສະນັ້ນຂໍທ່ານຈົ່ງແຕ່ງຕັ້ງເຈົ້າຊີວິດໃຫ້ເປັນຜູ້ປົກຄອງພວກຂ້າພະເຈົ້າເຫມືອນດັ່ງປະເທດອື່ນໆທີ່ເຂົາປົກຄອງກັນ
6 ຊາມູເອນໄດ້ເສັຽໃຈໃນເຣື່ອງທີ່ພວກເຂົາໄດ້ຮ້ອງຂໍເອົາເຈົ້າຊີວິດ ດັ່ງນັ້ນທ່ານຈຶ່ງອ້ອນວອນຫາພຣະຜູ້ເປັນເຈົ້າ
7 ແລະພຣະຜູ້ເປັນເຈົ້າກໍຊົງກ່າວວ່າ, "ຈົ່ງຟັງທຸກສິ່ງທີ່ປະຊາຊົນເວົ້າຕໍ່ເຈົ້າ ເຂົາບໍ່ໄດ້ປະຖິ້ມເຈົ້າ ແຕ່ໄດ້ປະຖິ້ມເຮົາຕ່າງຫາກ ໂດຍບໍ່ຍອມໃຫ້ເຮົາເປັນເຈົ້າຊີວິດຂອງເຂົາຕໍ່ໄປ
8 ນັບຕັ້ງແຕ່ເຮົາໄດ້ນຳເຂົາອອກມາຈາກເອຢິບ ເຂົາໄດ້ຫ່າງເຫີນຈາກເຮົາ ແລະໄປນະມັສການພຣະອື່ນ ດຽວນີ້ເຂົາກຳລັງປະພຶດຕໍ່ເຈົ້າດັ່ງທີ່ເຂົາເຄີຍໄດ້ປະພຶດຢູ່ເລື້ອຍໆຕໍ່ເຮົາ
9 ສະນັ້ນ ຈົ່ງທຳຕາມທີ່ເຂົາຂໍ ແຕ່ຈົ່ງຕັກເຕືອນເຂົາຢ່າງຫນັກແຫນ້ນ ແລະອະທິບາຍໃຫ້ເຂົາຮູ້ວ່າ ເຈົ້າຊີວິດເຫລົ່ານັ້ນຈະປົກຄອງເຂົາຢ່າງໃດ"
10 ຊາມູເອນຈຶ່ງບອກທຸກໆສິ່ງແກ່ປະຊາຊົນທີ່ຢາກມີເຈົ້າຊີວິດນັ້ນ ຕາມທີ່ພຣະຜູ້ເປັນເຈົ້າຊົງບອກໄວ້ກັບທ່ານ
11 ຊາມູເອນເວົ້າວ່າ, "ເຈົ້າຊີວິດຂອງພວກເຈົ້າຈະປົກຄອງພວກເຈົ້າດັ່ງນີ້ ພຣະອົງຈະເອົາລູກຊາຍຂອງພວກເຈົ້າໄປເປັນທະຫານ ບາງຄົນຈະຂັບຣົດຮົບ ບາງຄົນຈະເປັນທະຫານມ້າ ແລະເປັນທະຫານຫນ່ວຍກ້າຕາຍ
12 ພຣະອົງຈະແຕ່ງຕັ້ງເອົາບາງຄົນໃຫ້ເປັນນາຍພັນ ບາງຄົນເປັນນາຍຮ້ອຍ ລູກຊາຍຂອງພວກເຈົ້າຈະຕ້ອງໄຖນາໃຫ້ພຣະອົງ ກ່ຽວເຂົ້າ ແລະເຮັດອາວຸດ ແລະເຄື່ອງຮົບປະຈຳຣົດຮົບຂອງພຣະອົງດ້ວຍ
13 ສ່ວນລູກສາວຂອງພວກເຈົ້າຈະຕ້ອງແຕ່ງນ້ຳຫອມ ເຮັດວຽກເປັນແມ່ຄົວ ແລະເປັນຜູ້ເຮັດຂະຫນົມ
14 ພຣະອົງຈະເອົາທີ່ງນາທີ່ດີທີ່ສຸດ ເອົາສວນອະງຸ່ນພ້ອມທັງສວນຫມາກກອກເທດຂອງພວກເຈົ້າໃຫ້ແກ່ພວກຂ້າຣາຊການຂອງພຣະອົງ

15 ພຣະອົງຈະທັກເອົານຶ່ງສ່ວນສິບຂອງເຂົ້າ ແລະຫມາກອະງຸ່ນຂອງເຈົ້າໃຫ້ແກ່ນາຍທະຫານ ແລະບັນດາຂ້າຣາຊ
ການອື່ນໆຂອງພຣະອົງ
16 ພຣະອົງຈະເອົາພວກຄົນໃຊ້ກັບຝູງງົວທີ່ງາມ ແລະຝູງລໍຂອງພວກເຈົ້າມາໃຊ້ເຮັດວຽກສໍາລັບພຣະອົງ
17 ພຣະອົງຈະທັກເອົານຶ່ງສ່ວນສິບຂອງຝູງສັດຂອງພວກເຈົ້າ ພວກເຈົ້າຈະເປັນທາດຂອງພຣະອົງ
18 ເມື່ອເວລານັ້ນມາເຖິງ ພວກເຈົ້າຈະຄວນຄາງຢ່າງແສນສາຫັດຍ້ອນເຈົ້າຊີວິດທີ່ພວກເຈົ້າເລືອກເອົາເອງນັ້ນ
ແຕ່ພຣະຜູ້ເປັນເຈົ້າຈະບໍ່ຟັງຄໍາຮ້ອງຄາງຂອງພວກເຈົ້າ"
19 ຝ່າຍປະຊາຊົນບໍ່ໄດ້ຟັງຄວາມຊາມູເອນ ພວກເຂົາກັບຕອບວ່າ, "ບໍ່ ພວກຂ້າພະເຈົ້າຕ້ອງການເຈົ້າຊີວິດ
20 ເພື່ອວ່າພວກຂ້າພະເຈົ້າຈະເປັນເຫມືອນຊົນຊາດອື່ນ ແລະເພື່ອວ່າເຈົ້າຊີວິດຂອງພວກຂ້າພະເຈົ້າຈະປົກຄອງ
ພວກຂ້າພະເຈົ້າເອງ
21 ແລະຈະຊົງນໍາຫນ້າພວກຂ້າພະເຈົ້າອອກໄປຕີເສິກ" ຊາມູເອນໄດ້ຟັງເລື່ອງຕ່າງໆທີ່ເຂົາເວົ້າມາແລ້ວກໍນໍາເອົາ
ເລື່ອງນີ້ທູນຕໍ່ພຣະຜູ້ເປັນເຈົ້າ
22 ພຣະຜູ້ເປັນເຈົ້າຊົງຕອບວ່າ, "ຈົ່ງທໍາໃນສິ່ງທີ່ເຂົາຕ້ອງການ ແລະແຕ່ງຕັ້ງເຈົ້າຊີວິດໃຫ້ພວກເຂົາ" ແລ້ວຊາມູ
ເອນຈຶ່ງບອກໃຫ້ຊາວອິສຣາເອນທຸກຄົນກັບຄືນເມືອບ້ານ

## 9 ຊາອູນໄປພົບຊາມູເອນ

Saul Chosen to Be King

1 ຍັງມີຊາຍຄົນນຶ່ງຈາກຕະກູນເບັນຢາມິນຊື່ວ່າ ກີເຊ ເປັນບຸດຂອງອາບີເອນ ອາບີເອນເປັນບຸດຂອງ ເຊໂຣຣ໌
ຫລານຂອງເບໂກຣາດ ແລະເຫລັນຂອງອາຟີອາ ຊາວເຜົ່າເບັນຢາມິນ ຄີສເປັນຄົນຮັ່ງມີ ແລະມີຊື່ສຽງ
2 ທ່ານມີບຸດຊາຍຊື່ວ່າ ຊາອູນ ຊາອູນເປັນຊາຍຫນຸ່ມທີ່ສະງ່າງາມ ໃນອິສຣາເອນບໍ່ມີໃຜສູງ ແລະງາມ
ເຫນືອກວ່າທ່ານ
3 ຄັ້ງນຶ່ງ ລໍຂອງຄີສໄດ້ເສັຽ ທ່ານຈຶ່ງເວົ້າຕໍ່ຊາອູນວ່າ, "ຈົ່ງໄປຊອກຫາລໍ ແລະນໍາເອົາຄົນໃຊ້ຜູ້ນຶ່ງໄປນໍາ"
4 ເຂົາໄດ້ຜ່ານພູດອຍເອຟຣາອິມ ແລະເຂດແດນຊາລີຊາແຕ່ກໍບໍ່ພົບ ດັ່ງນັ້ນ ເຂົາຈຶ່ງຜ່ານໄປທີ່ທາງເຂດແດນຊາ
ອາລິມແຕ່ກໍບໍ່ພົບອີກ ແລ້ວພວກເຂົາຈຶ່ງຜ່ານໄປທາງເຂດແດນເບັນຢາມິນແຕ່ກໍບໍ່ພົບອີກເຫມືອນກັນ
5 ເມື່ອເຂົາເຂົ້າມາເຖິງເຂດແດນຊູຟ ຊາອູນຈຶ່ງເວົ້າຕໍ່ຄົນໃຊ້ວ່າ, "ເຮົາພາກັນກັບບ້ານເທາະ ບາງທີພໍ່ຂ້ອຍອາດ
ເຊົາຄິດເປັນຫ່ວງນໍາລໍແລ້ວ ແຕ່ທ່ານອາດເປັນຫ່ວງນໍາພວກເຮົາຫລາຍກວ່າ"
6 ຄົນໃຊ້ຕອບວ່າ, "ຖ້າກ່ອນ ໃນເມືອງນີ້ຍັງມີຄົນຂອງພຣະເຈົ້າຢູ່ຄົນນຶ່ງ ຊຶ່ງເປັນຄົນທີ່ຫນ້າເຄົາຣົບ ແລະນັບຖືທີ່
ສຸດ ເພາະວ່າທຸກສິ່ງທີ່ທ່ານເວົ້ານັ້ນເປັນຄວາມຈິງ ໃຫ້ພວກເຮົາພາກັນໄປຫາທ່ານເທີນ ບາງທີທ່ານ
ອາດບອກບ່ອນລໍຢູ່ ແລະພວກເຮົາກໍຈະພົບມັນໄດ້"
7 ຊາອູນຖາມຂຶ້ນວ່າ, "ຖ້າພວກເຮົາໄປຫາທ່ານ ເຮົາຈະມີຫຍັງໃຫ້ທ່ານ ເຂົ້າກໍບໍ່ມີເຫລືອຢູ່ໃນຖົງເລີຍ ແລະພວກ
ເຮົາກໍບໍ່ມີຫຍັງຈັກແນວເລີຍທີ່ຈະເອົາໃຫ້ທ່ານ ພວກເຮົາຈະເຮັດຢ່າງໃດ"
8 ຄົນໃຊ້ຕອບວ່າ, "ຂ້ານ້ອຍມີເງິນຫລຽນນຶ່ງພໍທີ່ຈະໃຫ້ທ່ານໄດ້ຢູ່ ແລະທ່ານກໍຈະບອກບ່ອນທີ່ພວກເຮົາຈະພົບລໍ
ນັ້ນວ່າຢູ່ໃສ"
9 (ໃນອິສຣາເອນສມັຍເດີມ ເມື່ອຄົນໃດຈະໄປທູນຖາມພຣະເຈົ້າ ເຂົາກ່າວວ່າ, "ມາເຖີດ ໃຫ້ເຮົາໄປຫາຜູ້ທໍານ
ວາຍກັນ" ເພາະຜູ້ທີ່ຢູ່ໃນສມັຍນີ້ເຮົາເອີ້ນວ່າ ຜູ້ປະກາດພຣະທັມ ໃນສມັຍເດີມເຂົາເອີ້ນວ່າຜູ້ທໍານວາຍ)
10 ຊາອູນເວົ້າອີກວ່າ, "ເປັນຄວາມຄິດທີ່ດີ ພວກເຮົາພາກັນໄປເທາະ" ດັ່ງນັ້ນ ເຂົາຈຶ່ງໄປຍັງເມືອງບ່ອນທີ່ຄົນຂອງ
ພຣະເຈົ້າຢູ່

11 ຂນະທີ່ເຂົາກຳລັງຂຶ້ນເທິງພູດອຍເພື່ອເຂົ້າໄປໃນເມືອງ ເຂົາໄດ້ພົບຍິງສາວບາງຄົນອອກມາຕັກນ້ຳ ເຂົາຈຶ່ງຖາມຍິງສາວນັ້ນວ່າ, "ຫມໍທຳນວາຍຢູ່ບໍ່"
12 ຍິງສາວຈຶ່ງຕອບວ່າ, "ແມ່ນແລ້ວທ່ານຢູ່ນີ້ ທ່ານຫາກໍອອກໄປກ່ອນທີ່ພວກທ່ານຈະມາເຖິງນີ້ ຈົ່ງພາກັນຟ້າວຕາມໄປ ດຽວນີ້ທ່ານກຳລັງເຂົ້າໄປໃນເມືອງ ເພາະວ່າມື້ນີ້ປະຊາຊົນກຳລັງໄປຖວາຍເຄື່ອງບູຊາທີ່ແທ່ນບູຊາເທິງພູ
13 ພໍທ່ານທັງສອງເຂົ້າໄປເຖິງໃນເມືອງ ທ່ານທັງສອງຈະພົບ ກ່ອນທີ່ຜູ້ທຳນວາຍຈະຂຶ້ນໄປກິນເຂົ້າຢູ່ເທິງພູ ເພາະວ່າປະຊາຊົນຈະບໍ່ກິນຈົນກວ່າທ່ານຈະມາເຖິງ ເພາະທ່ານຈະຕ້ອງມາອວຍພອນແກ່ເຄື່ອງສັດບູຊາ ພາຍຫລັງຜູ້ທີ່ໄດ້ຮັບເຊີນມາຈຶ່ງຈະກິນໄດ້ ດຽວນີ້ຈົ່ງຂຶ້ນໄປບ່ອນນັ້ນ ແລະພວກທ່ານຈະໄດ້ພົບທັນທີ
14 ດັ່ງນັ້ນ ເຂົາກໍພາກັນໄປໃນເມືອງ ເມື່ອກຳລັງຍ່າງໄປນັ້ນ ເຂົາໄດ້ເຫັນຊາມູເອນກຳລັງຍ່າງອອກມາ ເພື່ອໄປບ່ອນນະມັສການ
15 ກ່ອນວັນທີ່ຊາອູນໄດ້ມາຮອດ ພຣະຜູ້ເປັນເຈົ້າຊົງບອກຊາມູເອນໄວ້ແລ້ວວ່າ
16 ມື້ອື່ນປະມານເວລາດຽວກັນນີ້ ເຮົາຈະສົ່ງຄົນຜູ້ນຶ່ງຈາກຕະກູນເບັນຢາມິນມາຫາເຈົ້າ ຈົ່ງເອົານ້ຳມັນຊະໂລມຫົດສົງເຂົາໃຫ້ເປັນເຈົ້າຊີວິດໄພ່ພົນອິສຣາເອນຂອງເຮົາ ແລະເຂົາຈະຊ່ອຍໄພ່ພົນຂອງເຮົາໃຫ້ພົ້ນຈາກຊາວຟີລິສຕິນ ເພາະເຮົາໄດ້ເຫັນຄວາມທຸກທໍຣະມານຂອງໄພ່ພົນຂອງເຮົາ ແລະໄດ້ຍິນສຽງຮ້ອງໄຫ້ຂໍຄວາມຊ່ອຍເຫລືອຈາກເຂົາ"
17 ເມື່ອຊາມູເອນເຫັນຊາອູນ ພຣະຜູ້ເປັນເຈົ້າຈຶ່ງເວົ້າຕໍ່ທ່ານວ່າ, "ຄົນນີ້ແລ້ວທີ່ເຮົາໄດ້ບອກໄວ້ກັບເຈົ້າ ເຂົາຈະປົກຄອງໄພ່ພົນຂອງເຮົາ"
18 ແລ້ວຊາອູນກໍເຂົ້າໄປຫາຊາມູເອນຢູ່ໃກ້ປະຕູເມືອງ ແລະຖາມວ່າ, "ຂໍບອກຂ້າພະເຈົ້າແດ່ວ່າ ບ້ານຫມໍທຳນວາຍຢູ່ໃສ"
19 ຊາມູເອນກໍຕອບວ່າ, "ຂ້າພະເຈົ້ານີ້ແຫລະ ເປັນຫມໍທຳນວາຍ ຈົ່ງອອກໄປບ່ອນນະມັສການກ່ອນຂ້າພະເຈົ້າເດີ ວັນນີ້ ທ່ານຕ້ອງກິນເຂົ້າກັບຂ້າພະເຈົ້າ ມື້ອື່ນເຊົ້າ ຂ້າພະເຈົ້າຈະຕອບຄຳຖາມທຸກຢ່າງຂອງທ່ານ ແລ້ວຈະສົ່ງທ່ານກັບຄືນເມືອ
20 ສຳລັບລໍທີ່ໄດ້ເສັຽໄປໃນສາມວັນແລ້ວນັ້ນ ຢ່າຄິດເສັຽໃຈນຳມັນ ເພາະວ່າເຂົາໄດ້ພົບມັນແລ້ວ ແຕ່ວ່າຜູ້ທີ່ຊາວອິສຣາເອນຕ້ອງການຫລາຍທີ່ສຸດນັ້ນແມ່ນທ່ານເອງ ແລະຄອບຄົວພໍ່ແມ່ຂອງທ່ານ"
21 ຊາອູນຕອບວ່າ, "ຂ້າພະເຈົ້າຢູ່ໃນຕະກູນເບັນຢາມິນ ຊຶ່ງເປັນຕະກູນນ້ອຍທີ່ສຸດໃນອິສຣາເອນ ແລະໃນຕະກູນນັ້ນຄອບຄົວຂອງຂ້າພະເຈົ້າກໍມີຄວາມສຳຄັນນ້ອຍກວ່າຫມູ່ ແຕ່ເປັນຫຍັງທ່ານຈຶ່ງເວົ້າແບບນີ້ກັບຂ້າພະເຈົ້າ"
22 ແລ້ວຊາມູເອນກໍພາຊາອູນພ້ອມທັງຄົນໃຊ້ຂອງເຂົາເຂົ້າໄປໃນຫ້ອງໃຫຍ່ຫ້ອງນຶ່ງ ແລະໃຫ້ເຂົານັ່ງຢູ່ທາງສົ້ນໂຕະບ່ອນທີ່ມີແຂກຖືກເຊີນມານັ່ງຢູ່ກ່ອນແລ້ວປະມານສາມສິບຄົນ
23 ຊາມູເອນເວົ້າຕໍ່ຄົນຄົວກິນວ່າ, "ຈົ່ງເອົາຕ່ອນຊີ້ນທີ່ຂ້ອຍບອກໃຫ້ເອົາໄວ້ຕ່າງຫາກນັ້ນມາ"
24 ຜູ້ຄົວກິນກໍເອົາຕ່ອນຂາ ແລະຕ່ອນຊີ້ນທີ່ດີທີ່ສຸດໄປວາງໄວ້ຕໍ່ຫນ້າຊາມູເອນ ແລ້ວຊາມູເອນໄດ້ເວົ້າວ່າ, "ນີ້ແມ່ນສ່ວນທີ່ເອົາໄວ້ໃຫ້ທ່ານ ເຊີນກິນເທີນ ມັນເປັນສ່ວນທີ່ເອົາໄວ້ໃຫ້ທ່ານກິນໃນເວລານີ້ ພ້ອມກັບທຸກຄົນທີ່ຖືກເຊີນມາ"
25 ໃນວັນນັ້ນ ຊາອູນໄດ້ກິນເຂົ້າຮ່ວມກັບຊາມູເອນ ເມື່ອເຂົາລົງຈາກບ່ອນນະມັສການມາ ແລະກັບເຂົ້າໄປໃນເມືອງກໍມີຄົນຈັດບ່ອນໃຫ້ຊາອູນຢູ່ເທິງຫລັງຄາພຽງ ແລະເຂົາກໍນອນຢູ່ທີ່ນັ້ນ
26 ຕື່ນເຊົ້າມາ ຊາມູເອນກໍຮ້ອງໃສ່ຊາມູເອນຢູ່ເທິງຫລັງຄານັ້ນວ່າ, "ຕື່ນແມ່, ຂ້າພະເຈົ້າຈະສົ່ງທ່ານກັບຄືນເມືອ" ຊາອູນລຸກຂຶ້ນ ແລະມຸ່ງຫນ້າອອກໄປສູ່ຖຫນົນໃຫຍ່ພ້ອມກັບຊາມູເອນ

**ຊາມູເອນເອົານ້ຳມັນຊະໂລມຫົດສົງຊາອູນໃຫ້ເປັນກະສັດ**

Samuel Anoints Saul

27 ເມື່ອເຂົາມາຮອດເຂດແດນເມືອງ ຊາມູເອນຈຶ່ງເວົ້າຕໍ່ຊາອູນວ່າ, “ຈົ່ງບອກໃຫ້ຄົນຂອງເຈົ້າໄປກ່ອນ” ຄົນໃຊ້ກໍ
ເດີນທາງໄປກ່ອນ ຊາມູເອນຈຶ່ງເວົ້າຕໍ່ໄປວ່າ, “ຢຸດຢູ່ນີ້ຈັກໜ່ອຍກ່ອນເທາະ ແລ້ວຂ້າພະເຈົ້າຈະບອກວ່າ ພຣະ
ຜູ້ເປັນເຈົ້າໄດ້ກ່າວກັບຂ້າພະເຈົ້າຢ່າງໃດ”

## 10

Chapter 10

1 ແລ້ວຊາມູເອນກໍເອົາເຕົ້ານໍ້າມັນໝາກກອກອອກມາຖອກລົງໃສ່ຫົວຂອງຊາອູນ ແລະຈູບຊາອູນແລ້ວເວົ້າວ່າ,
“ພຣະຜູ້ເປັນເຈົ້າຊົງເອົານໍ້າມັນຊະໂລມຫົດສົງທ່ານໄວ້ໃຫ້ເປັນເຈົ້ານາຍເໜືອໄພ່ພົນຂອງພຣະອົງ ທ່ານຈະ
ປົກຄອງໄພ່ພົນຂອງ
ພຣະອົງ ແລະຊ່ອຍເຂົາໃຫ້ພົ້ນຈາກສັດຕຣູຂອງເຂົາ ການທີ່ພຣະຜູ້ເປັນເຈົ້າຊົງເລືອກເອົາເຈົ້າເປັນເຈົ້າຊີວິດໄພ່
ພົນຂອງ ພຣະອົງ ຈະພິສູດໃຫ້ເຫັນໄດ້ດັ່ງນີ້
2 ວັນນີ້ ເມື່ອທ່ານຈາກຂ້າພະເຈົ້າໄປແລ້ວ ທ່ານຈະພົບຊາຍສອງຄົນໃກ້ຂຸມຝັງສົບຂອງຣາເຊັນເມືອງເຊນຊາໃນ
ເຂດແດນເບັນຢາມິນ ເຂົາຈະບອກທ່ານວ່າ ລໍທີ່ເຈົ້າກຳລັງຊອກຫານັ້ນເຫັນແລ້ວ ແລະພໍ່ຂອງທ່ານບໍ່ໄດ້ເປັນ
ທຸກກັງວົນຢ່າງໃດກ່ຽວກັບລໍ ແຕ່ວ່າຄິດເປັນຫ່ວງນຳທ່ານ ແລະຖາມສເມີວ່າ “ຂ້ອຍຈະເຮັດຢ່າງໃດກ່ຽວເຣື່ອງ
ລູກຊາຍຂອງຂ້ອຍ?”
3 ແລ້ວທ່ານຈະໄປຈາກທີ່ນັ້ນຈົນຮອດຕົ້ນໄມ້ສັກສິດທີ່ຕາໂບຣ໌ ຢູ່ທີ່ນັ້ນ ເຈົ້າຈະພົບຊາຍສາມຄົນຊຶ່ງກຳລັງໄປ
ຖວາຍເຄື່ອງບູຊາແກ່ພຣະເຈົ້າທີ່ເມືອງເບັດເອນ ຜູ້ນຶ່ງໃນຈຳນວນພວກເຂົານັ້ນຈູງແບ້ນ້ອຍສາມໂຕ ແລະອີກຜູ້
ນຶ່ງມີເຂົ້າຈີ່ສາມກ້ອນ ສ່ວນຜູ້ທີ່ສາມມີຖົງນໍ້າອະງຸ່ນ
4 ເຂົາທັງຫລາຍຈະຄຳນັບທ່ານ ແລະເອົາເຂົ້າຈີ່ສອງກ້ອນໃຫ້ທ່ານ ແລ້ວທ່ານກໍຈະຍອມຮັບເອົາ
5 ຕໍ່ຈາກນັ້ນ ທ່ານກໍຈະໄປເຖິງພູຂອງພຣະເຈົ້າທີ່ເມືອງກິເບອາດເອໂລຮິມ ໃນເມືອງນີ້ມີຄ້າຍພັກຂອງຊາວຟີລິສ
ຕິນ ທີ່ປາກປະຕູເຂົ້າເມືອງ ທ່ານຈະພົບກຸ່ມຜູ້ປະກາດພຣະທັມໝູ່ນຶ່ງກຳລັງລົງມາຈາກແທ່ນບູຊາເທິງພູ ຖື
ພິນໃຫຍ່ ຕີກອງ ແລະ
ເປົ່າຂຸ່ຍ ເຂົາຈະຟ້ອນ ແລະໂຮ່ຮ້ອງດ້ວຍສຽງອັນດັງ
6 ແລ້ວພຣະວິນຍານຂອງພຣະເຈົ້າຈະເຂົ້າສະຖິດຢູ່ໃນຕົວທ່ານ ທ່ານຈະເຂົ້າຮ່ວມໃນການທຳນວາຍ ແລະປ່ຽນ
ເປັນຄົນຜູ້ໃໝ່
7 ເມື່ອມີເຣື່ອງຢ່າງນີ້ຈົ່ງທຳຕາມທີ່ພຣະເຈົ້າຊົງນຳພາໃຫ້ທຳ
8 ທ່ານຈະໄປເມືອງກິນການກ່ອນຂ້າພະເຈົ້າ ແລະຂ້າພະເຈົ້າຈະໄປພົບທ່ານຢູ່ທີ່ນັ້ນ ເພື່ອຈະຖວາຍເຄື່ອງເຜົາບູ
ຊາ ແລະຖວາຍເພື່ອຄວາມສາມັກຄີ ຈົ່ງຄອຍຖ້າຢູ່ທີ່ນັ້ນເຈັດວັນຈົນກວ່າຂ້າພະເຈົ້າຈະມາບອກທ່ານວ່າຈະ
ທຳຢ່າງໃດ”

### Saul Prophesies

9 ເມື່ອຊາອູນໜີຈາກຊາມູເອນໄປ ພຣະເຈົ້າກໍຊົງປະທານຈິດໃຈອີກຢ່າງນຶ່ງແກ່ທ່ານ ແລະທຸກສິ່ງທີ່ຊາມູເອນໄດ້
ບອກໄວ້ກັບທ່ານກໍໄດ້ບັງເກີດຂຶ້ນ
10 ໃນວັນນັ້ນ ເມື່ອຊາອູນແລະຄົນໃຊ້ມາຮອດເມືອງກິເບອາ ກໍມີກຸ່ມຜູ້ປະກາດພຣະທັມມາພົບກັບທ່ານ ພຣະວິນ
ຍານຂອງພຣະເຈົ້າກໍຊົງເຂົ້າສະຖິດຢູ່ກັບທ່ານ ແລະນຳທ່ານໄປຮ່ວມໃນການທຳນວາຍຂອງພວກເຂົາ

11 ຜູ້ທີ່ເຄີຍເຫັນທ່ານມາກ່ອນ ເມື່ອໄດ້ເຫັນທ່ານກຳລັງທຳຢ່າງນັ້ນຈຶ່ງຖາມກັນວ່າ, "ມີຫຍັງເກີດຂຶ້ນກັບລູກຊາຍ
ຂອງກີເຊ ຊາອູນໄດ້ກາຍເປັນຜູ້ປະກາດພຣະທັມແລ້ວບໍ່"
12 ຊາຍຜູ້ນຶ່ງທີ່ຢູ່ທີ່ນັ້ນກໍຖາມຂຶ້ນວ່າ, "ຄົນອື່ນເດເປັນຢ່າງໃດ ແລະພໍ່ຂອງເຂົາແມ່ນໃຜ" ດັ່ງນັ້ນ ຄຳເວົ້າຈຶ່ງກ່າວ
ກັນມາວ່າ "ຊາອູນໄດ້ກາຍເປັນຜູ້ປະກາດພຣະທັມໄປແລ້ວບໍ່"
13 ເມື່ອຊາອູນໄດ້ທຳນວາຍສິ້ນສຸດແລ້ວ ທ່ານກໍໄປທີ່ແທ່ນບູຊາຢູ່ເທິງພູນ້ອຍ
14 ລຸງຂອງຊາອູນໄດ້ຖາມທ່ານກັບຄົນໃຊ້ວ່າ, "ພວກເຈົ້າໄປຢູ່ໃສ" ຊາອູນຕອບວ່າ, "ໄປຊອກຫາລໍ ເມື່ອເຮົາບໍ່ພົບ
ມັນ ເຮົາກໍໄດ້ພາກັນໄປຫາຊາມູເອນ"
15 ລຸງຂອງຊາອູນໄດ້ຖາມອີກວ່າ, "ທ່ານບອກຫຍັງແດ່ແກ່ພວກເຈົ້າ?"
16 ຊາອູນຕອບວ່າ, "ທ່ານບອກເຮົາວ່າ ສັດນັ້ນໄດ້ພົບແລ້ວ" ແຕ່ເຣື່ອງທີ່ຊາມູເອນບອກວ່າທ່ານຈະໄດ້ເປັນເຈົ້າຊີ
ວິດນັ້ນ ທ່ານບໍ່ໄດ້ບອກລຸງຂອງທ່ານເລີຍ

**ຊາອູນຖືກປະກາດເປັນເຈົ້າຊີວິດ**

Saul Proclaimed King

17 ຊາມູເອນໄດ້ເອີ້ນປະຊາຊົນໄປເຝົ້າພຣະຜູ້ເປັນເຈົ້າທີ່ເມືອງມິສປາ
18 ທ່ານເວົ້າຕໍ່ພວກເຂົາວ່າ, "ພຣະຜູ້ເປັນເຈົ້າຂອງອິສຣາເອນຊົງກ່າວວ່າ "ເຮົາໄດ້ພາພວກເຈົ້າອອກຈາກເອຢິບ
ແລະຊ່ອຍພວກເຈົ້າໃຫ້ພົ້ນຈາກຊາວເອຢິບ ແລະຊົນຊາດອື່ນໆທີ່ຂົ່ມເຫັງພວກເຈົ້າ
19 ເຮົາເປັນພຣະຜູ້ເປັນເຈົ້າຊຶ່ງເປັນຜູ້ທີ່ຊ່ອຍພວກເຈົ້າໃຫ້ພົ້ນຈາກຄວາມທຸກຍາກລຳບາກ ແລະຄວາມຫຍຸ້ງຍາກ
ທຸກໆຢ່າງ ແຕ່ວ່າ ວັນນີ້ພວກເຈົ້າໄດ້ປະຖິ້ມເຮົາ ແລະຮ້ອງຂໍໃຫ້ເຮົາແຕ່ງຕັ້ງເຈົ້າຊີວິດໃຫ້ແກ່ພວກເຈົ້າ ເອົາລະ
ໃຫ້ພວກເຈົ້າທ້ອນໂຮມກັນເປັນຕະກູນ ແລະເປັນພວກຕໍ່ໜ້າເຮົາ"
20 ແລ້ວຊາມູເອນກໍນຳເອົາຕົວແທນແຕ່ລະຕະກູນເຂົ້າມາຈົກສລາກ ພຣະຜູ້ເປັນເຈົ້າຈຶ່ງຊົງເລືອກເອົາຕະກູນເບັນ
ຢາມິນ
21 ຕໍ່ມາ ຊາມູເອນໄດ້ເອົາຄອບຄົວໃນຕະກູນເບັນຢາມິນເຂົ້າມາ ຈຶ່ງໄດ້ເລືອກຖືກຄອບຄົວຂອງ ມາຕຣີ ຕໍ່ໄປກໍນຳ
ເອົາພວກຜູ້ຊາຍໃນຄອບຄົວ ມາຕຣີເຂົ້າມາ ຈຶ່ງໄດ້ເລືອກຖືກ ຊາອູນລູກຊາຍຂອງກີເຊ ເຂົາຈຶ່ງຊອກຫາຊາ
ອູນແຕ່ກໍບໍ່ພົບ
22 ເຂົາຈຶ່ງທູນຖາມພຣະຜູ້ເປັນເຈົ້າວ່າ, "ຊາຍຄົນນັ້ນມານີ້ແລ້ວບໍ່" ພຣະຜູ້ເປັນເຈົ້າຊົງຕອບວ່າ, "ມາແລ້ວ ເຂົາກຳ
ລັງລີ້ຢູ່ທາງຫລັງເຄື່ອງຂອງ"
23 ດັ່ງນັ້ນ ເຂົາທັງຫລາຍຈຶ່ງແລ່ນໄປນຳເອົາຊາອູນມາຈາກທີ່ນັ້ນ ໃນເວລາທີ່ເຂົາຢູ່ຖ້າມກາງປະຊາຊົນນັ້ນ ເຂົາ
ກໍສູງກວ່າປະຊາຊົນທຸກຄົນຈາກບ່າຂຶ້ນໄປ
24 ຊາມູເອນຈຶ່ງກ່າວແກ່ປະຊາຊົນທັງປວງວ່າ, "ນີ້ຄືຊາຍທີ່ພຣະຜູ້ເປັນເຈົ້າຊົງເລືອກໄວ້ ໃນຖ້າມກາງເຮົາບໍ່ມີຜູ້ໃດ
ຄືທ່ານ" ປະຊາຊົນທຸກຄົນກໍຮ້ອງສຽງດັງຂຶ້ນວ່າ, "ຂໍພຣະຣາຊາ ຈົ່ງຊົງພຣະຈະເຣີນ"
25 ຕໍ່ມາ ຊາມູເອນກໍໄດ້ອະທິບາຍເຖິງຄວາມຈິງ ແລະໜ້າທີ່ຂອງເຈົ້າຊີວິດໃຫ້ປະຊາຊົນຟັງ ແລະຂຽນໄວ້ໃນ
ສມຸດທີ່ກອງໄວ້ໃນບ່ອນສັກສິດ ແລ້ວທ່ານກໍໃຫ້ທຸກຄົນກັບເມືອເຮືອນ
26 ສ່ວນຊາອູນກໍກັບຄືນເມືອເຮືອນທີ່ເມືອງກິເບອາເໝືອນກັນ ມີບາງຄົນທີ່ເປັນນັກຮົບຊຶ່ງໄດ້ຮັບການບັນດົນໃຈ
ຈາກພຣະຜູ້ເປັນເຈົ້າກໍໄປນຳຊາອູນ
27 ແຕ່ກໍມີຄົນທີ່ຂາດຄວາມນຶກຄິດໄດ້ເວົ້າວ່າ, "ຄົນນີ້ຈະຊ່ອຍພວກເຮົາໄດ້ແນວໃດກັນ" ເຂົາໄດ້ໝິ່ນປມາດຊາ
ອູນ ແລະບໍ່ຍອມຖວາຍຂອງຂວັນແກ່ທ່ານ

## 11 ຊາອູນຜາບແພ້ຊາວອັມໂມນ

Saul Defeats the Ammonites

1 ເດືອນຕໍ່ມາ ນາຮັສ ຊາວອັມໂມນໄດ້ໄປໂຈມຕີເມືອງຢາເບສກີເລອາດ ທະຫານຂອງທ່ານໄດ້ອ້ອມເມືອງໄວ້ ຊາວເມືອງຢາເບສຈຶ່ງເວົ້າຕໍ່ ນາຮັສວ່າ, “ຂໍພຣະອົງຊົງສັນຍາກັບພວກຂ້າພະເຈົ້າເສັຽກ່ອນວ່າ ຈະບໍ່ຍຶດເອົາເມືອງນີ້ ແລ້ວພວກຂ້າພະເຈົ້າຈຶ່ງຈະຍອມຮັບໃຊ້ພຣະອົງ”

2 ແຕ່ນາຮັສໄດ້ຕອບວ່າ, “ເຮົາຂໍສັນຍາແບບນີ້ກັບພວກເຈົ້າ ຄືເຮົາຈະເຈາະໜ່ວຍຕາເບື້ອງຂວາຂອງທຸກຄົນອອກ ເພື່ອໃຫ້ຊາວອິສຣາເອນທຸກຄົນເສັຽກຽດ

3 ພວກຜູ້ນຳຂອງຢາເບສກໍເວົ້າວ່າ,” ຂໍອະນຸຍາດໃຫ້ພວກຂ້າພະເຈົ້າສົ່ງຄົນນຳຂ່າວອອກໄປທົ່ວທັງເຂດແດນອິສຣາເອນ ພາຍໃນເຈັດວັນເສັຽກ່ອນ ຖ້າວ່າບໍ່ມີຜູ້ໃດຊ່ອຍເຫລືອພວກຂ້າພະເຈົ້າແລ້ວ ພວກຂ້າພະເຈົ້າຈຶ່ງຈະຍອມຈຳນົນຕໍ່ພວກທ່ານ”

4 ຝ່າຍຄົນນຳຂ່າວກໍໄດ້ມາຮອດເມືອງກິເບອາບ່ອນທີ່ຊາອູນຢູ່ ພໍເມື່ອເຂົາບອກຂ່າວນັ້ນ ປະຊາຊົນກໍຮ້ອງໄຫ້ດ້ວຍຄວາມຂົມຂື່ນ

5 ສ່ວນຊາອູນກໍກຳລັງຈູງງົວມາແຕ່ນາ ທ່ານຈຶ່ງຖາມວ່າ, “ມີຫຍັງເກີດຂຶ້ນ ເປັນຫຍັງທຸກໆຄົນຈຶ່ງພາກັນຮ້ອງໄຫ້” ພວກເຂົາກໍໄດ້ບອກເຣື່ອງທີ່ຜູ້ນຳຂ່າວຈາກຢາເບສໄດ້ຣາຍງານມານັ້ນສູ່ທ່ານຟັງ

6 ເມື່ອຊາອູນໄດ້ຍິນດັ່ງນັ້ນ ພຣະວິນຍານຂອງພຣະເຈົ້າກໍໄດ້ເຂົ້າສະຖິດຢູ່ກັບຊາອູນ ແລ້ວທ່ານກໍເກີດໃຈຮ້າຍຂຶ້ນ

7 ທ່ານໄດ້ເອົາງົວມາຂ້າສອງຕົວ ແລະປາດເປັນຕ່ອນ ແລ້ວເອົາໃຫ້ຜູ້ນຳຂ່າວມານັ້ນຖືໄປທົ່ວທັງເຂດແດນອິສຣາເອນ ພ້ອມທັງບອກວ່າ, “ຖ້າຜູ້ໃດບໍ່ຕິດຕາມຊາອູນ ແລະຊາມູເອນເຂົ້າສູ່ສະໜາມຮົບ ງົວຂອງຜູ້ນັ້ນຈະຕ້ອງຖືກຂ້າຢ່າງນີ້” ຊາວ
ອິສຣາເອນໄດ້ຢ້ານກົວຕໍ່ການທີ່ພຣະຜູ້ເປັນເຈົ້າຈະຊົງກະທຳເຂົາທັງຫລາຍຈຶ່ງມາດ້ວຍຄວາມນຶກຄິດແບບດຽວກັນ

8 ຊາອູນກໍພາພວກເຂົາໂຮມກັນຢູ່ທີ່ເບເຊກ ຊຶ່ງມີຊາວອິສຣາເອນສາມແສນຄົນ ແລະຊາວຢູດາອີກສາມສິບພັນຄົນ

9 ເຂົາບອກຜູ້ນຳຂ່າວມາຈາກຢາເບສກີເລອາດວ່າ, “ຈົ່ງບອກປະຊາຊົນຂອງພວກເຈົ້າວ່າ, “ມື້ອື່ນຕອນທ່ຽງພວກຂ້າພະເຈົ້າຈະໄປຊ່ອຍພວກເຂົາໃຫ້ພົ້ນໄພ” ເມື່ອພວກຢາເບສໄດ້ຮັບຂ່າວ ເຂົາຈຶ່ງພາກັນຊົມຊື່ນຍິນດີ

10 ດັ່ງນັ້ນຊາວຢາເບສຈຶ່ງວ່າ, “ມື້ອື່ນພວກຂ້າພະເຈົ້າຈະຍອມຈຳນົນຕົວຕໍ່ທ່ານ ທ່ານຈົ່ງກະທຳກັບພວກຂ້າພະເຈົ້າໄດ້ຕາມຄວາມຕ້ອງການ“

11 ເຊົ້າວັນໃໝ່ມາແຕ່ເດິກໆ ຊາອູນກໍແບ່ງທະຫານຂອງຕົນອອກເປັນສາມໝວດ ແລ້ວພວກເຂົາໄດ້ມຸ່ງໜ້າໄປໂຈມຕີຊາວອັມໂມນທີ່ຄ້າຍພັກ ເຂົາສູ້ຮົບກັນຈົນຮອດເວລາທ່ຽງ ແລ້ວທະຫານຂອງຊາອູນໄດ້ຂ້າສັດຕຣູຕາຍຢ່າງຫລວງຫລາຍ ຝ່າຍພວກທີ່ຍັງເຫລືອກໍແຕກກະຈັດກະຈາຍໄປ ແລະແລ່ນປົບໜີເອົາຕົວລອດ

12 ແລ້ວຊາວອິສຣາເອນຈຶ່ງເວົ້າຕໍ່ຊາອູນວ່າ, “ໃຜເວົ້າວ່າຊາອູນບໍ່ແມ່ນເຈົ້າຊີວິດຂອງພວກເຮົານັ້ນ ຈົ່ງຈັບຕົວອອກມາຫາພວກເຮົາແລ້ວ ພວກເຮົາຈະຂ້າພວກເຂົາຖິ້ມ”

13 ແຕ່ຊາອູນເວົ້າວ່າ, “ວັນນີ້ ຈະບໍ່ມີຜູ້ໃດຖືກປະຫານຊີວິດ ເພາະວ່າແມ່ນວັນທີ່ພຣະຜູ້ເປັນເຈົ້າໄດ້ຊ່ອຍຊາວອິສຣາເອນໃຫ້ພົ້ນໄພ”

14 ແລ້ວຊາມູເອນກໍເວົ້າກັບປະຊາຊົນວ່າ, “ໃຫ້ພວກເຮົາທຸກຄົນໄປເມືອງກິນການ ແລະປະກາດແຕ່ງຕັ້ງຊາອູນໃຫ້ເປັນເຈົ້າຊີວິດຂອງພວກເຮົາຢູ່ທີ່ນັ້ນອີກ”

15 ດັ່ງນັ້ນ ພວກເຂົາທັງຫມົດຈຶ່ງໄປເມືອງກິນການ ແລະປະກາດແຕ່ງຕັ້ງໃຫ້ ຊາອູນເປັນເຈົ້າຊີວິດຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະໄດ້ຖວາຍເຄື່ອງບູຊາ ເພື່ອຄວາມສາມັກຄີ ຊາອູນພ້ອມທັງປະຊາຊົນທຸກຄົນກໍພາກັນສເລີມສລອງກັນຢ່າງມ່ວນຊື່ນ

## 12 ຄຳປາໄສຂອງຊາມູເອນ

Samuel’s Farewell Address

1 ຊາມູເອນເວົ້າຕໍ່ຊາວອິສຣາເອນວ່າ, “ຂ້າພະເຈົ້າໄດ້ເຮັດໃນສິ່ງທີ່ພວກທ່ານຮ້ອງຂໍ ຂ້າພະເຈົ້າໄດ້ແຕ່ງຕັ້ງເຈົ້າຊີວິດປົກຄອງພວກທ່ານແລ້ວ

2 ດຽວນີ້ ພວກທ່ານກໍມີຊາອູນເປັນຜູ້ນຳ ສຳລັບຂ້າພະເຈົ້າເອງກໍເປັນຄົນເຖົ້າແກ່ ແລະຜົມຫງອກແລ້ວ ລູກຊາຍທັງຫມົດຂອງຂ້າພະເຈົ້າກໍຢູ່ກັບພວກທ່ານ ຂ້າພະເຈົ້າໄດ້ເປັນຜູ້ນຳພວກທ່ານມາຕັ້ງແຕ່ຫນຸ່ມນ້ອຍຈົນເຖິງດຽວນີ້

3 ຂ້າພະເຈົ້າກໍຢູ່ທີ່ນີ້ແລ້ວ ຖ້າວ່າຂ້າພະເຈົ້າໄດ້ກະທຳຜິດສິ່ງໃດ ພວກທ່ານຈົ່ງຟ້ອງຮ້ອງຂ້າພະເຈົ້າຕໍ່ພຣະຜູ້ເປັນເຈົ້າ ແລະຕໍ່ເຈົ້າຊີວິດທີ່ພຣະອົງຊົງເລືອກໄວ້ນັ້ນໄດ້ ຂ້າພະເຈົ້າໄດ້ເອົາງົວ ແລະລໍທ່ານບໍ ຂ້າພະເຈົ້າໄດ້ສໍ້ໂກງກົດຂີ່ຂົ່ມເຫັງໃຜແດ່ ຂ້າພະເຈົ້າໄດ້ຮັບສິນຈ້າງຮາງວັນຈາກຜູ້ໃດບໍ ຖ້າວ່າຂ້າພະເຈົ້າໄດ້ເຮັດສິ່ງນຶ່ງສິ່ງໃດໃນສິ່ງທີ່ກ່າວມານີ້ ຂ້າພະເຈົ້າຍິນດີສົ່ງຄືນທຸກຢ່າງໃນສິ່ງທີ່ຂ້າພະເຈົ້າໄດ້ກະທຳມານັ້ນ”

4 ປະຊາຊົນໄດ້ຕອບວ່າ, “ທ່ານບໍ່ໄດ້ສໍ້ໂກງ ຫລືຂົ່ມເຫັງພວກຂ້າພະເຈົ້າແຕ່ຢ່າງໃດດອກ ແລະທ່ານກໍບໍ່ໄດ້ຮັບເອົາສິ່ງນຶ່ງສິ່ງໃດຈາກໃຜຫມົດ”

5 ຊາມູເອນໄດ້ເວົ້າຕໍ່ໄປວ່າ, “ວັນນີ້ ພຣະຜູ້ເປັນເຈົ້າພ້ອມເຈົ້າຊີວິດທີ່ພຣະອົງຊົງເລືອກເອົານັ້ນກໍເປັນພຍານຫລັກຖານຕໍ່ຫນ້າພວກທ່ານວ່າ ພວກທ່ານບໍ່ໄດ້ພົບຄວາມຜິດສິ່ງໃດຫມົດໃນຕົວຂ້າພະເຈົ້າ” ພວກເຂົາໄດ້ພາກັນຕອບວ່າ, “ພຣະຜູ້ເປັນເຈົ້າຊົງເປັນພຍານຂອງພວກຂ້າພະເຈົ້າ”

6 ຊາມູເອນເວົ້າຕໍ່ໄປອີກວ່າ, “ພຣະຜູ້ເປັນເຈົ້າຊົງເປັນຜູ້ທີ່ໄດ້ເລືອກເອົາໂມເຊ ແລະອາໂຣນ ແລະຊົງພາພວກປູ່ຍ່າຕາຍາຍຂອງພວກທ່ານອອກມາຈາກເອຢິບ

7 ແລະດຽວນີ້ ຈົ່ງຢືນຢູ່ໃນບ່ອນທີ່ພວກທ່ານຢືນຢູ່ນັ້ນ ຂ້າພະເຈົ້າຈະຟ້ອງຮ້ອງພວກທ່ານຕໍ່ພຣະຜູ້ເປັນເຈົ້າ ເພື່ອເຕືອນພວກທ່ານເຖິງການຍິ່ງໃຫຍ່ທີ່ພຣະຜູ້ເປັນເຈົ້າຊົງກະທຳເພື່ອຊ່ວຍເຫລືອພວກທ່ານ ແລະປູ່ຍ່າຕາຍາຍຂອງພວກທ່ານໃຫ້ພົ້ນໄພ

8 ເມື່ອຢາໂຄບ ແລະຄອບຄົວຂອງທ່ານໄປໃນເອຢິບ ຊາວເອຢິບກໍໄດ້ຂົ່ມເຫັງພວກເຂົາ ຝ່າຍປູ່ຍ່າຕາຍາຍຂອງພວກທ່ານໄດ້ຮ້ອງຂໍຄວາມຊ່ວຍເຫລືອຈາກພຣະຜູ້ເປັນເຈົ້າ ພຣະອົງກໍຊົງໃຊ້ໂມເຊ ແລະອາໂຣນນຳພວກເຂົາອອກຫນີຈາກເອຢິບ ແລະໃຫ້ພວກເຂົາມາຕັ້ງຫລັກຖານຢູ່ໃນທີ່ນີ້

9 ແຕ່ວ່າ ພວກເຂົາໄດ້ລືມພຣະຜູ້ເປັນເຈົ້າ ພຣະອົງຈຶ່ງຊົງໃຫ້ຊີເຊຣາແມ່ທັບຂອງຢາບິນແຫ່ງເມືອງຮາໄຊຣ໌ມາສູ້ຮົບກັບພວກເຂົາ ແລະໄດ້ໄຊຊະນະ ຕໍ່ມາຊາວຟີລິສຕິນກໍໄດ້ມາສູ້ຮົບກັບພວກເຂົາ ແລະຕໍ່ມາອີກເຈົ້າຊີວິດໂມອາບກໍມາສູ້ຮົບ ແລະຊະ ນະພວກເຂົາ

10 ພວກເຂົາໄດ້ຮ້ອງຂໍຄວາມຊ່ວຍເຫລືອຕໍ່ພຣະຜູ້ເປັນເຈົ້າ “ພວກຂ້າພຣະອົງໄດ້ເຮັດບາບ ເພາະວ່າພວກຂ້າພຣະອົງໄດ້ຫັນຫນີຈາກພຣະອົງຊຶ່ງເປັນພຣະຜູ້ເປັນເຈົ້າ ພວກຂ້າພຣະອົງໄດ້ນະມັສການພຣະບາອານ ແລະພຣະອັຊຕາຣ໌ເຕສ ຂໍພຣະອົງຊົງຊ່ວຍຊີວິດພວກຂ້າພຣະອົງໃຫ້ພົ້ນຈາກສັດຕຣູ ແລະພວກຂ້າພຣະອົງຈະກັບມານະມັສການພຣະອົງ

11 ແລ້ວພຣະຜູ້ເປັນເຈົ້າກໍຊົງສົ່ງເຢຣູບບາອານ ບາຣາກ ເຢັບທາ ແລະຊາມູເອນ ໃຫ້ເປັນຜູ້ຊ່ອຍຊີວິດຂອງພວກທ່ານໃຫ້ພົ້ນຈາກສັດຕຣູ ພວກທ່ານຈຶ່ງໄດ້ຢູ່ຢ່າງປອດພັຍ

12 ແຕ່ພວກທ່ານເຫັນວ່າເຈົ້າຊີວິດນາຮັສຂອງຊາວອັມໂມນໄດ້ມາຕໍ່ສູ້ພວກທ່ານ ພວກທ່ານກໍປະຖິ້ມພຣະຜູ້ເປັນເຈົ້າທີ່ເປັນເຈົ້າຊີວິດຂອງພວກທ່ານ ແລະເວົ້າກັບຂ້າພະເຈົ້າວ່າ, "ພວກຂ້າພະເຈົ້າຢາກໄດ້ເຈົ້າຊີວິດມາປົກຄອງພວກຂ້າພະເຈົ້າ"

13 ນີ້ເດ່ ເຈົ້າຊີວິດທີ່ພວກທ່ານຢາກໄດ້ໂດຍຮ້ອງຂໍນຳພຣະຜູ້ເປັນເຈົ້າ ແລະພຣະອົງກໍຊົງປະທານໃຫ້ແກ່ພວກທ່ານແລ້ວ

14 ຖ້າພວກທ່ານຢ້ານຢຳພຣະຜູ້ເປັນເຈົ້າຂອງພວກທ່ານ ຈົ່ງຮັບໃຊ້ພຣະອົງ ເຊື່ອຟັງຄຳສັ່ງຂອງພຣະອົງ ຖ້າພວກທ່ານ ແລະເຈົ້າຊີວິດຂອງພວກທ່ານຕິດຕາມພຣະອົງໄປ ພວກທ່ານກໍຈະຈະເຣີນຮຸ່ງເຮືອງ

15 ຖ້າພວກທ່ານບໍ່ຟັງພຣະຜູ້ເປັນເຈົ້າ ແລະບໍ່ເຊື່ອພຣະດຳຣັດຂອງພຣະອົງ ພຣະອົງຈະຕໍ່ສູ້ພວກທ່ານ ແລະເຈົ້າຊີວິດຂອງພວກທ່ານດ້ວຍ

16 ດັ່ງນັ້ນ ຈົ່ງພາກັນຢືນຢູ່ໃນບ່ອນທີ່ພວກທ່ານຢູ່ນັ້ນ ແລະພວກທ່ານຈະເຫັນການຍິ່ງໃຫຍ່ທີ່ພຣະຜູ້ເປັນເຈົ້າຈະກະທຳ

17 ດຽວນີ້ເປັນຣະດູແລ້ງ ຂ້າພະເຈົ້າຈະອ້ອນວອນຂໍໃຫ້ພຣະຜູ້ເປັນເຈົ້າສົ່ງສຽງຟ້າຮ້ອງ ແລະຝົນຕົກລົງມາ ເມື່ອພວກທ່ານເຫັນເປັນຢ່າງນັ້ນ ທ່ານຈະຮູ້ໄດ້ວ່າ ເວລາທີ່ພວກທ່ານໄດ້ຮ້ອງຂໍເອົາເຈົ້າຊີວິດຈາກພຣະອົງ ພວກທ່ານໄດ້ກະທຳຄວາມຜິດອັນຍິ່ງໃຫຍ່ຕໍ່ພຣະຜູ້ເປັນເຈົ້າ

18 ແລ້ວຊາມູເອນໄດ້ອ້ອນວອນ ໃນວັນດຽວກັນນັ້ນ ພຣະຜູ້ເປັນເຈົ້າກໍຊົງສົ່ງສຽງຟ້າຮ້ອງ ແລະຝົນຕົກລົງມາ ປະຊາຊົນທຸກຄົນຈຶ່ງຢ້ານກົວຊາມູເອນ ແລະພຣະຜູ້ເປັນເຈົ້າ

19 ພວກເຂົາໄດ້ເວົ້າຕໍ່ຊາມູເອນວ່າ, "ທ່ານເອີຍ ຂໍໄດ້ໂຜດກະຣຸນາອ້ອນວອນພຣະຜູ້ເປັນເຈົ້າຂອງທ່ານສຳລັບພວກຂ້າພະເຈົ້າແດ່ ເພື່ອວ່າພວກຂ້າພະເຈົ້າຈະບໍ່ຕາຍ ນອກຈາກຄວາມຜິດຢ່າງອື່ນຂອງພວກຂ້າພະເຈົ້າແລ້ວ ພວກຂ້າພະເຈົ້າກໍໄດ້ເຮັດຜິດໂດຍການຮ້ອງຂໍເອົາເຈົ້າຊີວິດ"

20 ຊາມູເອນຕອບວ່າ, "ຢ່າຢ້ານກົວເລີຍ ພວກທ່ານໄດ້ເຮັດການຊົ່ວມາແລ້ວກໍຈິງຢູ່ ແຕ່ຈົ່ງຢ່າຫັນຫນີຈາກພຣະຜູ້ເປັນເຈົ້າໄປອີກ ຈົ່ງຮັບໃຊ້ພຣະອົງໃຫ້ສຸດອົກສຸດໃຈຂອງທ່ານ

21 ຢ່າຫັນຫນີໄປຕິດຕາມສິ່ງອະນິຈັງຊຶ່ງບໍ່ເປັນປໂຍດ ເພາະວ່າພວກມັນຊ່ອຍເຫລືອໃຫ້ພວກທ່ານພົ້ນພັຍບໍ່ໄດ້ ເພາະເປັນສິ່ງອະນິຈັງ

22 ພຣະອົງຈະບໍ່ຊົງປະປ່ອຍພວກທ່ານໄປ ດ້ວຍພຣະນາມອັນຍິ່ງໃຫຍ່ຂອງພຣະອົງ ພຣະອົງຈະຊົງຕັດສິນພຣະທັຍເອົາພວກທ່ານເປັນໄພ່ພົນຂອງພຣະອົງ

23 ສ່ວນຂ້າພະເຈົ້າຈະບໍ່ເຊົາອ້ອນວອນສຳລັບພວກທ່ານ ເພາະການເຊົາອ້ອນວອນເປັນການຜິດຕໍ່ພຣະຜູ້ເປັນເຈົ້າ ແຕ່ຂ້າພະເຈົ້າຈະສັ່ງສອນໃຫ້ພວກທ່ານເຮັດໃນສິ່ງທີ່ດີ ແລະສິ່ງທີ່ຖືກຕ້ອງ

24 ຈົ່ງຢ້ານຢຳພຣະຜູ້ເປັນເຈົ້າ ແລະຮັບໃຊ້ພຣະອົງດ້ວຍຄວາມສັດຊື່ ແລະສຸດອົກສຸດໃຈ ຈົ່ງລະນຶກເຖິງການງານອັນຍິ່ງໃຫຍ່ທີ່ພຣະອົງຊົງກະທຳສຳລັບພວກທ່ານ

25 ແຕ່ວ່າຖ້າພວກທ່ານຍັງດຳເນີນການທຳຜິດຢູ່ອີກ ພວກທ່ານ ແລະເຈົ້າຊີວິດຂອງພວກທ່ານຈະຖືກທຳລາຍ

## 13 ເສິກສົງຄາມຕໍ່ສູ້ຟີລິສຕິນ

Saul's Unlawful Sacrifice

1 ເມື່ອຊາອູນຂຶ້ນຄອງຣາຊສົມບັດນັ້ນມີ ອາຍຸສາມສິບປີ ແລະເມື່ອພຣະອົງຊົງປົກຄອງ ອິສຣາເອນສີ່ສິບສອງປີ

2 ຊາອູນໄດ້ເລືອກເອົາຊາວອິສຣາເອນສາມພັນຄົນໄປຢູ່ກັບຕົນ ແລະສົ່ງພວກອື່ນກັບຄືນເມືອບ້ານ ທ່ານແບ່ງ
ເອົາສອງພັນຄົນໄປບ້ານມິກມັສ ແລະໄປເທິງພູດອຍທີ່ເມືອງເບັດເອນກັບທ່ານ ສ່ວນພັນຄົນກໍໃຫ້ໄປກັບໂຢນາ
ທານ ບຸດຊາຍຂອງຕົນທີ່ເມືອງກິເບອາ ໃນເຂດແດນຂອງຕະກູນເບັນຢາມິນ
3 ໂຢນາທານ ໄດ້ຂ້າຜູ້ບັນຊາການຟີລິສຕິນໃນເມືອງເກບາ ແລະຊາວຟີລິສຕິນກໍໄດ້ຍິນຂ່າວນີ້ ແລະເວົ້າວ່າ,
"ຊາວເຮັບເຣີໄດ້ຕຽມທຳເສິກ ສ່ວນຊາອູນກໍສົ່ງຜູ້ນຳຂ່າວເປົ່າແກຜ່ານໄປທົ່ວທັງປະເທດ
4 ເມື່ອອິສຣາເອນໄດ້ຍິນຂ່າວວ່າຊາອູນໄດ້ຂ້ານາຍທະຫານຟີລິສຕິນ ແລະຮູ້ວ່າຊາວຟີລິສຕິນກໍກຽດຊັງພວກຕົນ
ເຂົາຈຶ່ງຕອບຄຳຮຽກຮ້ອງ ແລະເຂົ້າໄປສົມທົບກັບຊາອູນທີ່ເມືອງກິນການ
5 ຊາວຟີລິສຕິນໄດ້ທ້ອນໂຮມກຳລັງມາສ຺ູ້ຮົບກັບຊາວອິສຣາເອນ ພວກເຂົາມີຣົດຮົບສາມສິບພັນຄັນ ແລະທະ
ຫານມ້າຫົກພັນຄົນ ແລະມີທະຫານຫລວງຫລາຍເຫມືອນດັ່ງເມັດດິນຊາຍຢູ່ຝັ່ງທະເລ ພວກເຂົາພາກັນໄປທີ່
ມິກມັສ ທາງທິດຕາເວັນອອກຂອງເບັດອາເວນ ແລະຕັ້ງຄ້າຍພັກຢູ່ທີ່ນັ້ນ
6 ຝ່າຍອິສຣາເອນກໍຖືກບຸກຮຸກໂຈມຕີຢ່າງດຸເດືອດ ແລະຢູ່ໃນທ່າຈົນຕາແຈ ພວກເຂົາຈຶ່ງໄປລີ້ຢູ່ໃນຖໍ້າ ໃນໂກນ
ໃນລະຫວ່າງໂງ່ນຫີນ ໃນຂຸມ ແລະໃນສ້າງ
7 ຄົນອື່ນໆອີກກໍຂ້າມແມ່ນໍ້າຈໍແດນໄປໃນເຂດແດນເມືອງກາດ ແລະເມືອງກີເລອາດ ສ່ວນຊາອູນກໍຍັງຢູ່ໃນ
ເມືອງກິນການ ແລະປະຊາຊົນທີ່ຢູ່ນຳທ່ານກໍຕົກສະທ້ານຢ້ານກົວ
8 ຊາອູນໄດ້ຄອຍຖ້າຢູ່ເຈັດວັນຕາມຄຳແນະນຳຂອງຊາມູເອນ ແຕ່ວ່າຊາມູເອນບໍ່ໄດ້ມາເມືອງກິນການປະຊາຊົນ
ກໍຄ່ອຍຫນີຈາກຊາອູນ
9 ຊາອູນຈຶ່ງເວົ້າຕໍ່ພວກເຂົາວ່າ, "ຈົ່ງນຳເອົາເຄື່ອງເຜົາຖວາຍບູຊາ ແລະເຄື່ອງຖວາຍບູຊາເພື່ອຄວາມສາມັກຄີໃຫ້
ເຮົາ" ແລ້ວຊາອູນກໍຖວາຍເຄື່ອງບູຊານັ້ນ
10 ພໍເມື່ອຊາອູນເສັດພິທີແລ້ວ ຊາມູເອນກໍມາຮອດ ຊາອູນຈຶ່ງອອກໄປຕ້ອນຮັບຊາມູເອນ
11 ຊາມູເອນໄດ້ເວົ້າຂຶ້ນວ່າ, "ທ່ານກຳລັງເຮັດຫຍັງ" ຊາອູນຕອບວ່າ, "ເຮົາເຫັນວ່າ ປະຊາຊົນກຳລັງຈະຈາກເຮົາ
ໄປທ່ານເອງກໍບໍ່ມາຕາມທີ່ໄດ້ເວົ້າໄວ້ ແລະພວກຟີລິສຕິນກໍກຳລັງທ້ອນໂຮມກັນທີ່ບ້ານມິກມັສ
12 ເຮົາຈຶ່ງຄິດວ່າ ຊາວຟີລິສຕິນຈະມາໂຈມຕີເຮົາໃນເມືອງກິນການນີ້ ເຮົາຈຶ່ງຈຳເປັນຕ້ອງຖວາຍບູຊາເພື່ອຄວາມ
ກະຣຸນາຈາກພຣະເຈົ້າ"
13 ຊາມູເອນຕອບຂຶ້ນວ່າ, "ເປັນການໂງ່ຈ້າວທີ່ສຸດທີ່ເຮັດຢ່າງນີ້ ທ່ານບໍ່ໄດ້ຮັກສາພຣະບັນຊາແຫ່ງພຣະຜູ້ເປັນ
ເຈົ້າພຣະເຈົ້າຂອງທ່ານ ຊຶ່ງພຣະອົງຊົງບັນຊາທ່ານໄວ້ ເພາະພຣະຜູ້ເປັນເຈົ້າຈະໄດ້ຊົງສະຖາປະນາຣາຊອານາ
ຈັກຂອງທ່ານເຫນືອອິສຣາເອນເປັນນິດແລ້ວ
14 ແຕ່ບັດນີ້ຣາຊອານາຈັກຂອງທ່ານຈະບໍ່ຢັ້ງຍືນ ພຣະຜູ້ເປັນເຈົ້າຈະສົ່ງຊາຍຜູ້ນຶ່ງທີ່ພຣະອົງຊົງພໍພຣະທັຍ ແລະ
ຈະຊົງແຕ່ງຕັ້ງໃຫ້ເຂົາປົກຄອງໄພ່ພົນຂອງພຣະອົງ ເພາະທ່ານບໍ່ໄດ້ຮັກສາສິ່ງຊຶ່ງພຣະຜູ້ເປັນເຈົ້າຊົງບັນຊາໄວ້"
15 ສ່ວນຊາມູເອນໄດ້ຈາກເມືອງກິນການໄປ ປະຊາຊົນທີ່ຍັງເຫລືອຢູ່ກໍຕິດຕາມຊາອູນໄປພົບທະຫານຂອງທ່ານ
ພວກເຂົາໄປຈາກເມືອງກິນການຈົນຮອດເມືອງກິເບອາ ເຂດແດນເບັນຢາມິນ

Preparations for Battle

ຊາອູນກໍໄດ້ກວາດກາເບິ່ງທະຫານຂອງພຣະອົງຊຶ່ງມີປະມານຢູ່ຫົກຮ້ອຍຄົນ
16 ແລ້ວຊາອູນ ກັບໂຢນາທານບຸດຊາຍຂອງພຣະອົງ ແລະພວກທະຫານກໍພັກຢູ່ທີ່ເມືອງເກບາໃນເຂດແດນເບັນ
ຢາມິນ ສ່ວນຊາວຟີລິສຕິນກໍຕັ້ງຄ້າຍພັກຢູ່ທີ່ມິກມັສ
17 ຝ່າຍທະຫານຟີລິສຕິນໄດ້ມຸ່ງຫນ້າອອກຈາກຄ້າຍພັກຂອງພວກເຂົາຈັດເປັນສາມຫມວດ ເພື່ອໄປຫລອນໂຈມ
ຕີ ຫມວດທີນຶ່ງໄປທາງໂອຟຣາໃນເຂດແດນຊູອານ

18 ຫມວດທີສອງກໍໄປທາງເມືອງເບັດໂຮໂຣນ ແລະຫມວດທີສາມໄປທາງເຂດແດນກົງກັນຂ້າມກັບຮ່ອມພູເຊໂບ
ອີມ ແລະໄປຕາມຖິ່ນກັນດານ
19 ໃນເວລານັ້ນປະເທດອິສຣາເອນບໍ່ມີຊ່າງຕີເຫລັກ ເພາະວ່າຊາວຟີລິສຕິນຫ້າມບໍ່ໃຫ້ຊາວເຮັບເຣີຕີດາບ ຫລື
ຫອກ
20 ດັ່ງນັ້ນ ຊາວອິສຣາເອນຈຶ່ງຕ້ອງເອົາໄຖ ສຽມ ຂວານ ແລະກ່ຽວຂອງພວກເຂົາໄປໃຫ້ພວກຟີລິສຕິນຝົນໃຫ້
21 ສໍາລັບຄ່າຝົນຂວານ ແລະເຫລັກປະຕັກຕົກເປັນເງິນນຶ່ງຫລຽນ ແລະສອງຫລຽນເປັນຄ່າຝົນໄຖ ແລະສຽມ
22 ສະນັ້ນ ໃນວັນສູ້ຮົບມີແຕ່ຊາອູນ ແລະໂຢນາທານບຸດຊາຍຂອງພຣະອົງເທົ່ານັ້ນທີ່ມີດາບ ແລະຫອກ ສ່ວນ
ພວກທະຫານອິສຣາເອນບໍ່ມີຫຍັງເລີຍ
23 ຊາວຟີລິສຕິນກໍສົ່ງຫມວດທະຫານຂອງພວກເຂົາອອກໄປປ້ອງກັນຢູ່ທາງຜ່ານໄປທີ່ມິກມັສ

## 14 ຄວາມກ້າຫານຂອງໂຢນາທານ

Jonathan Surprises and Routs the  Philistines

1 ໃນວັນນຶ່ງ ໂຢນາທານໄດ້ເວົ້າກັບຊາຍຫນຸ່ມຜູ້ທີ່ຖືອາວຸດໃຫ້ຕົນວ່າ, “ພວກເຮົາຂ້າມໄປຫາຄ້າຍພັກຂອງພວກ
ຟີລິສຕິນເທາະ” ການໄປເທື່ອນີ້ໂຢນາທານບໍ່ໄດ້ບອກບິດາຂອງຕົນ
2 ກະສັດຊາອູນກໍຕັ້ງຄ້າຍພັກຢູ່ເຂດເມືອງກິເບອາໃຕ້ຕົ້ນຫມາກພິລາ ຊຶ່ງຢູ່ທີ່ບ້ານມິກໂຣນ ພຣະອົງມີທະຫານ
ປະມານຫົກຮ້ອຍຄົນ
3 ກັບອາຮີຢາ ບຸດຊາຍຂອງອາຮີຕູບ ອ້າຍຂອງອີຄາໂບດ ບຸດຊາຍຂອງຟີເນຮັສ ຜູ້ເປັນບຸດຊາຍຂອງເອລີ ປະໂຣ
ຫິດຂອງ   ພຣະຜູ້ເປັນເຈົ້າທີ່ເມືອງຊີໂລ ພວກເຂົາຖືເອໂຟຣດໄປ ຄົນເຫລົ່ານີ້ບໍ່ຮູ້ວ່າໂຢນາທານໄດ້ໄປກ່ອນ
ແລ້ວ
4 ທາງທີ່ໂຢນາທານຜ່ານຂ້າມໄປຫາຄ້າຍພັກຂອງພວກຟີລິສຕິນນັ້ນໄດ້ມີໂງ່ນຫີນໃຫຍ່ ແລະແຫລມຄົມຢູ່ສອງ
ໂງ່ນ ແຕ່ລະໂງ່ນໄດ້ຢູ່ແຕ່ລະຂ້າງຂອງທາງທີ່ຜ່ານໄປນັ້ນ ກ້ອນນຶ່ງຊື່ວ່າໂບເຊສ ແລະກ້ອນນຶ່ງຊື່ວ່າ ເຊເນ
5 ກ້ອນນຶ່ງຢູ່ທາງຂ້າງເບື້ອງເຫນືອຂອງທາງຜ່ານໄປຕໍ່ຫນ້າເມືອງມິກມັສ ອີກກ້ອນນຶ່ງຢູ່ທາງຂ້າງເບື້ອງໃຕ້ຕໍ່
ຫນ້າເມືອງເກບາ
6 ໂຢນາທານເວົ້າຕໍ່ຊາຍຫນຸ່ມນັ້ນວ່າ, “ໃຫ້ພວກເຮົາຂ້າມໄປຄ້າຍພັກຂອງຊາວຟີລິສຕິນທີ່ບໍ່ນັບຖືພຣະເຈົ້າ ບາງ
ທີພຣະຜູ້ເປັນເຈົ້າຈະຊົງຊ່ອຍເຫລືອພວກເຮົາ ຖ້າພຣະອົງຊົງຊ່ອຍເຫລືອກໍບໍ່ມີສິ່ງໃດຈະສາມາດຕ້ານທານໄດ້
ເຖິງພວກເຮົາມີຄົນຫນ້ອຍກໍຕາມ ພວກເຮົາກໍຈະມີໄຊຊະນະ”
7 ຊາຍຫນຸ່ມຈຶ່ງຕອບວ່າ, “ທ່ານຈະເຮັດຫຍັງ ຂ້າພະເຈົ້າກໍຍິນດີເຮັດນໍາ”
8 ໂຢນາທານເວົ້າວ່າ, “ດີລະ ພວກເຮົາຈະຂ້າມໄປໃຫ້ພວກມັນເຫັນພວກເຮົາ
9 ຖ້າພວກເຂົາເວົ້າວ່າຈະມາຕີພວກເຮົາ ພວກເຮົາກໍຈະຢູ່ທີ່ນີ້
10 ແຕ່ຖ້າພວກເຂົາເວົ້າທ້າທາຍໃຫ້ພວກເຮົາໄປຫາ ພວກເຮົາຈຶ່ງໄປເພາະວ່າຄໍາເວົ້າຢ່າງນັ້ນ ຖືກເປັນເຄື່ອງ
ຫມາຍວ່າພຣະຜູ້ເປັນເຈົ້າໄດ້ຊົງໃຫ້ພວກເຮົາຊະນະ”
11 ດັ່ງນັ້ນ ໂຢນາທານ ແລະຊາຍຫນຸ່ມນັ້ນ ຈຶ່ງເຮັດໃຫ້ພວກຟີລິສຕິນເຫັນ ແລະພວກເຂົາກໍໄດ້ເວົ້າວ່າ, “ເບິ່ງພຸ້ນ
ມີຊາວເຮັບເຣີບາງຄົນໄດ້ອອກມາຈາກບ່ອນລີ້ຊ່ອນ
12 ພວກທະຫານຟີລິສຕິນກໍຮ້ອງໃສ່ໂຢນາທານ ແລະຊາຍຫນຸ່ມນັ້ນວ່າ,” ຈົ່ງຂຶ້ນມາພີ້ ພວກຂ້າພະເຈົ້າມີເຣື່ອງຈະ
ບອກເຈົ້າ” ໂຢນາທານຈຶ່ງເວົ້າຕໍ່ຊາຍທີ່ມານໍາວ່າ, “ຕາມຂ້າພະເຈົ້າມາ ພຣະຜູ້ເປັນເຈົ້າໄດ້ຊົງປະທານໃຫ້ອິສ
ຣາເອນຊະນະພວກເຂົາແລ້ວ”

13 ໂຢນາທານໄດ້ປີນຂຶ້ນໄປ ຊາຍໜຸ່ມນັ້ນກໍຕິດຕາມທ່ານໄປ ໂຢນາທານໄດ້ຕໍ່ສູ້ຊາວຟີລິສຕິນ ແລະຕ່ອຍຕີ
ພວກເຂົາຕົກລົງ ແລ້ວຊາຍໜຸ່ມນັ້ນກໍຂ້າພວກເຂົາຖິ້ມ
14 ໃນການຕໍ່ສູ້ຄັ້ງທຳອິດ ໂຢນາທານ ແລະຊາຍໜຸ່ມນັ້ນໄດ້ຂ້າສັດຕຣູຕາຍໄປປະມານຊາວຄົນຢູ່ທີ່ນັ້ນ
15 ຊາວຟີລິສຕິນທຸກຄົນທີ່ຢູ່ໃນທົ່ງກໍຢ້ານກົວ ພວກກອງໂຈນ ແລະພວກທະຫານຕົກສະທ້ານຢ້ານກົວແຜ່ນດິນກໍ
ຫວັ່ນໄຫວ ແລະໄດ້ມີການຕົກໃຈຢ່າງຍິ່ງໃຫຍ່ເກີດຂຶ້ນ

**ພວກຟີລິສຕິນເສັຽໄຊ**

16 ທະຫານຂອງຊາອູນທີ່ເຝົ້າຍາມຢູ່ທີ່ເມືອງກິເບອາ ໃນເຂດແດນເບັນຢາມິນໄດ້ເຫັນພວກຟີລິສຕິນແລ່ນສັບສົນ
ໄປມາ
17 ຊາອູນຈຶ່ງເວົ້າກັບທະຫານຂອງທ່ານວ່າ, "ນັບເບິ່ງດູວ່າ ມີທະຫານຄົນໃດຫາຍໄປແດ່" ເມື່ອພວກເຂົານັບເບິ່ງ
ແລ້ວກໍເຫັນວ່າ ໂຢນາທານ ແລະຊາຍໜຸ່ມທີ່ຖືອາວຸດໃຫ້ນັ້ນໄດ້ຫາຍໄປ
18 ເມື່ອເປັນເຊັ່ນນີ້ ຊາອູນຈຶ່ງເວົ້າຕໍ່ປະໂຣຫິດອາຮີຢາວ່າ, "ຈົ່ງນຳເອົາຫີບຄຳສັນຍາອັນສັກສິດມານີ້ ເພື່ອທຳພິທີ
ຈົກສລາກຕໍ່ ພຣະພັກພຣະຜູ້ເປັນຈເຈົ້າ ເພາະວ່າໃນຄາວນັ້ນຫີບຄຳສັນຍານີ້ໄດ້ນຳໜ້າພວກອິສຣາເອນໄປ
19 ເມື່ອຊາອູນກຳລັງເວົ້າກັບປະໂຣຫິດຢູ່ນັ້ນ ການສັບສົນອົນລະວົນຢູ່ໃນຄ້າຍພັກຂອງພວກຟີລິສຕິນກໍຍິ່ງຮ້າຍ
ແຮງຂຶ້ນ ຊາອູນຈຶ່ງເວົ້າຕໍ່ປະໂຣຫິດວ່າ, "ບໍ່ຕ້ອງຈົກສລາກ"
20 ແລ້ວພຣະອົງກັບພວກທະຫານກໍມຸ່ງໜ້າເຂົ້າໄປໃນສນາມຮົບ ເພື່ອໂຈມຕີພວກຟີລິສຕິນທີ່ກຳລັງຕົກຢູ່ໃນ
ຄວາມສັບສົນອົນລະຫົນ ແລະຕໍ່ສູ້ຊຶ່ງກັນແລະກັນ
21 ພວກເຮັບເຣີທີ່ເຂົ້າຂ້າງຊາວຟີລິສຕິນມາແຕ່ກ່ອນ ແລະໄດ້ອາໄສຢູ່ໃນຄ້າຍພັກດຽວກັນກັບພວກເຂົາກໍປ່ຽນໃຈ
ມາຮ່ວມນຳຊາອູນ ແລະໂຢນາທານ
22 ເມື່ອອິສຣາເອນທີ່ໄດ້ລີ້ຢູ່ເທິງພູດອຍເອຟຣາອິມໄດ້ຍິນຂ່າວວ່າ ຊາວຟີລິສຕິນກຳລັງແລ່ນປົບໜີ ພວກເຂົາກໍ
ເຂົ້າມາຮ່ວມສົມທົບຕໍ່ສູ້ຊາວຟີລິສຕິນເໝືອນກັນ
23 ໃນວັນນັ້ນ ພຣະຜູ້ເປັນເຈົ້າຊົງຊ່ອຍຊາວອິສຣາເອນໃຫ້ພົ້ນໄພ ແລະພວກເຂົາໄດ້ໄລ່ຕີສັດຕຣູໄປເຖິງເມືອງ
ເບັດອາເວນ

**ໂຢນາທານລະເມີດຄຳສັນຍາ**

Saul's Rash Oath

24 ໃນວັນນັ້ນ ຊາວອິສຣາເອນໄດ້ອ່ອນແຮງຍ້ອນບໍ່ໄດ້ກິນເຂົ້າ ເພາະຊາອູນໄດ້ອອກຄຳສັ່ງເດັດຂາດວ່າ, " ໃນວັນ
ນີ້ຖ້າຜູ້ໃດກິນເຂົ້າກ່ອນຕາເວັນຕົກ ແລະກ່ອນຂ້າພະເຈົ້າໄດ້ແກ້ແຄ້ນສັດຕຣູຂອງຂ້າພະເຈົ້າ ຂໍໃຫ້ຄຳສາບແຊ່ງ
ຈົ່ງຕົກຖືກຜູ້ນັ້ນ" ດັ່ງນັ້ນ ຈຶ່ງບໍ່ມີຜູ້ໃດໄດ້ກິນຫຍັງຕລອດວັນ
25 ພວກເຂົາທັງໝົດໄດ້ເຂົ້າໄປໃນປ່າ ແລະໄດ້ພົບຮັງເຜິ້ງຢູ່ທຸກໆບ່ອນ
26 ແຕ່ບໍ່ມີໃຜກ້າເອົາມາກິນ ເພາະພວກເຂົາທຸກຄົນຢ້ານກົວຄຳສາບແຊ່ງຂອງຊາອູນ
27 ແຕ່ໂຢນາທານບໍ່ໄດ້ຍິນບິດາຂອງຕົນສາບແຊ່ງ ທ່ານຈຶ່ງເອົາໄມ້ເທົ້າແທງຮັງເຜິ້ງ ແລະເອົານໍ້າເຜິ້ງມາກິນ ໃນ
ທັນໃດນັ້ນ ທ່ານກໍຮູ້ສຶກມີແຮງຂຶ້ນກວ່າເກົ່າ
28 ແລ້ວທະຫານຄົນນຶ່ງກໍເວົ້າຂຶ້ນວ່າ, "ທຸກໆຄົນໄດ້ອ່ອນເພັຽຍ້ອນຫິວເຂົ້າ ເພາະສະເດັດພໍ່ຂອງທ່ານໄດ້ຂູ່ເຂັນ
ພວກເຂົາວ່າ ຖ້າຜູ້ໃດກິນເຂົ້າໃນວັນນີ້ຈະຖືກສາບແຊ່ງ"
29 ໂຢນາທານຕອບວ່າ, "ພໍ່ຂອງຂ້ອຍໄດ້ສ້າງຄວາມລຳບາກໃຫ້ແກ່ປະຊາຊົນ ແຕ່ເບິ່ງດູວ່າ ຂ້ອຍຮູ້ສຶກມີແຮງ
ຂຶ້ນກວ່າເກົ່າເມື່ອຂ້ອຍໄດ້ກິນນໍ້າເຜິ້ງ
30 ຖ້າວ່າວັນນີ້ ປະຊາຊົນຂອງພວກເຮົາໄດ້ກິນອາຫານທີ່ພວກເຮົາໄດ້ມາຈາກສັດຕຣູ ພວກເຂົາຄົງຈະມີແຮງຂ້າ
ຊາວຟີລິສຕິນໄດ້ຫລາຍຂຶ້ນ"

31 ໃນວັນນັ້ນ ພວກອິສຣາເອນໄດ້ຜາບແພ້ພວກຟີລິສຕິນຕັ້ງແຕ່ມິກມັສໄປເຖິງອັຍຢາໂລນ ພວກອິສຣາເອນໄດ້
ອ່ອນແຮງຍ້ອນບໍ່ໄດ້ກິນເຂົ້າ
32 ພວກເຂົາຈຶ່ງແລ່ນໄປເອົາສິ່ງທີ່ພວກເຂົາຍຶດມາໄດ້ຈາກສັດຕຣູ ຄືແກະ ແລະງົວມາຂ້າໃນບ່ອນນັ້ນ ແລ້ວກິນ
ຊີ້ນທີ່ຂ້າບໍ່ໄດ້ເອົາເລືອດອອກ
33 ຕໍ່ມາ ມີຄົນມາບອກຊາອູນວ່າ, “ຈົ່ງເບິ່ງແມ່, ພວກເຂົາໄດ້ກະທຳຜິດຕໍ່ພຣະຜູ້ເປັນເຈົ້າ ໂດຍກິນຊີ້ນທີ່ຂ້າບໍ່ໄດ້
ເອົາເລືອດອອກ” ຊາອູນຈຶ່ງຮ້ອງຂຶ້ນວ່າ, “ພວກເຈົ້າເປັນຄົນທໍຣະຍົດ ຈົ່ງກິ້ງກ້ອນຫີນໃຫຍ່ນັ້ນມາໃຫ້ເຮົາທີ່ນີ້ “
34 ແລ້ວພຣະອົງກໍອອກຄຳສັ່ງວ່າ, “ຈົ່ງໄປຫາພວກເຂົາ ແລະບອກໃຫ້ພວກເຂົາທຸກຄົນນຳເອົາງົວ ແລະແກະຂອງ
ພວກເຂົາມານີ້ ແລ້ວຂ້າສັດເຫລົ່ານັ້ນກິນຢູ່ທີ່ນີ້ ແຕ່ຢ່າທຳຜິດຕໍ່ພຣະຜູ້ເປັນເຈົ້າໂດຍກິນຊີ້ນທີ່ຂ້າບໍ່ໄດ້ເອົາ
ເລືອດອອກ” ໃນຄືນນັ້ນພວກເຂົາທຸກຄົນກໍນຳງົວຂອງເຂົາມາຂ້າຢູ່ທີ່ນັ້ນ
35 ຊາອູນໄດ້ສ້າງແທ່ນບູຊາຖວາຍແດ່ພຣະຜູ້ເປັນເຈົ້າ ຊຶ່ງເປັນການສ້າງຄັ້ງທຳອິດຂອງພຣະອົງ
36 ຊາອູນໄດ້ເວົ້າຕໍ່ທະຫານຂອງພຣະອົງວ່າ, “ໃຫ້ພວກເຮົາລົງໄປຕີ ໄປປຸ້ນ ແລະຂ້າພວກຟີລິສຕິນຕລອດຄືນ
ເທົ່າແຈ້ງ” ພວກເຂົາຕອບວ່າ, “ຈົ່ງທຳຕາມທີ່ພຣະອົງຄິດວ່າດີ” ແຕ່ປະໂຣຫິດເວົ້າຂຶ້ນວ່າ, “ ຂໍໃຫ້ພວກເຮົາທູນ
ຖາມພຣະເຈົ້າເສັຽກ່ອນ”
37 ດັ່ງນັ້ນ ຊາອູນຈຶ່ງທູນຖາມພຣະເຈົ້າວ່າ, “ຂ້າພຣະອົງຕ້ອງໄປສູ້ຮົບກັບພວກຟີລິສຕິນອີກບໍ ແລະພຣະອົງຈະຊົງ
ປະທານໄຊຊະນະໃຫ້ແກ່ຂ້າພຣະອົງບໍ ແຕ່ວ່າໃນວັນນັ້ນ ພຣະເຈົ້າບໍ່ໄດ້ຕອບພຣະອົງ
38 ຊາອູນຈຶ່ງເວົ້າຕໍ່ຜູ້ນຳປະຊາຊົນວ່າ, “ຈົ່ງພາກັນມານີ້ ແລະຊອກຖາມເບິ່ງວ່າ ວັນນີ້ມີການເຮັດຜິດຫຍັງແດ່
39 ເພາະວ່າພຣະເຈົ້າອົງຊົງມີຊີວິດຢູ່ ພຣະຜູ້ຊ່ອຍໃຫ້ພົ້ນຂອງອິສຣາເອນ ຖ້າໂຢນາທານລູກຊາຍຂອງເຮົາເປັນຜູ້
ນຶ່ງທີ່ເຮັດ ເຂົາຈະຕ້ອງຖືກຂ້າ” ແຕ່ວ່າບໍ່ມີຜູ້ໃດເວົ້າຫຍັງຫມົດ
40 ແລ້ວຊາອູນເວົ້າຕໍ່ພວກເຂົາວ່າ, “ພວກເຈົ້າທຸກຄົນຢືນຢູ່ທີ່ນັ້ນ ສ່ວນເຮົາ ແລະໂຢນາທານຈະຢືນຢູ່ທີ່ນີ້” ພວກ
ເຂົາຈຶ່ງຕອບວ່າ, “ຈົ່ງທຳຕາມທີ່ພຣະອົງຊົງຄິດວ່າດີ”
41 ຊາອູນທູນຕໍ່ພຣະຜູ້ເປັນເຈົ້າຂອງຊາວອິສຣາເອນວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ເປັນຫຍັງພຣະອົງຈຶ່ງບໍ່ຊົງຕອບ
ຂ້າພຣະອົງໃນວັນນີ້ ຂ້າແດ່ພຣະຜູ້ເປັນເຈົ້າຂອງຊາວອິສຣາເອນ ຂໍພຣະອົງຊົງຕອບຂ້າພຣະອົງໂດຍທາງ
ສລາກນີ້ຄື ຖ້າວ່າຄວາມຜິດເປັນຂອງໂຢນາທານ ລູກຊາຍຂອງຂ້າພຣະອົງ ຫລືຂອງຂ້າພຣະອົງເອງ ຂໍພຣະ
ອົງຊົງຕອບໂດຍອູຣິມ ແຕ່ຖ້າມັນຕົກຖືກພວກອິສຣາເອນໄພ່ພົນຂອງພຣະອົງ ຂໍພຣະອົງຊົງຕອບດ້ວຍທຸມມິມ
ແລ້ວສລາກກໍຕົກຖືກໂຢນາທານ ແລະຊາອູນ ແຕ່ຝ່າຍປະຊາຊົນລອດໄປ
42 ຊາອູນຈຶ່ງເວົ້າວ່າ, “ຂໍພຣະອົງຊົງຕັດສິນພຣະທັຍລະຫວ່າງຂ້າພຣະອົງ ແລະໂຢນາທານລູກຊາຍຂອງຂ້າພຣະ
ອົງເທີນ”
43 ແລ້ວສລາກກໍຕົກຖືກໂຢນາທານ ແລ້ວຊາອູນຈຶ່ງຖາມໂຢນາທານວ່າ, “ເຈົ້າເຮັດຫຍັງຜິດ” ໂຢນາທານຕອບ
ວ່າ, “ຂ້ານ້ອຍໄດ້ກິນນ້ຳເຜິ້ງພຽງຫນ້ອຍດຽວເທົ່ານັ້ນ ຂ້ານ້ອຍຢູ່ນີ້ແລ້ວ ແລະກໍພ້ອມທີ່ຈະຕາຍ”
44 ຊາອູນເວົ້າຕໍ່ເຂົາວ່າ, “ຖ້າຂ້ອຍບໍ່ຂ້າເຈົ້າ ຂໍພຣະອົງຊົງປະຫານຊີວິດຂ້ອຍເທີນ”
45 ແຕ່ປະຊາຊົນເວົ້າຕໍ່ຊາອູນວ່າ, “ຈະໃຫ້ ໂຢນາທານຜູ້ທີ່ຕີເອົາໄຊຊະນະອັນຍິ່ງໃຫຍ່ສຳລັບພວກອິສຣາເອນຖືກ
ຂ້າຕາຍຊັ້ນບໍ ບໍ່ໄດ້ດອກພວກຂ້າພະເຈົ້າຂໍສັນຍາຕໍ່ພຣະຜູ້ເປັນເຈົ້າຜູ້ຊົງມີຊີວິດຢູ່ວ່າ ແມ່ນແຕ່ຜົມຂອງທ່ານກໍ
ຈະບໍ່ສູນເສັຽໄປຈາກຫົວຂອງທ່ານ ສິ່ງທ່ານໄດ້ເຮັດໃນວັນນີ້ເປັນການເຮັດດ້ວຍຄວາມຊົດຊ່ອຍຂອງພຣະເຈົ້າ”
ດັ່ງນັ້ນປະຊາຊົນຈຶ່ງຊ່ອຍໂຢນາທານບໍ່ໃຫ້ຖືກຂ້າ
46 ຝ່າຍຊາອູນກໍເຊົາໄລ່ຕິດຕາມພວກຟີລິສຕິນ ພວກຟີລິສຕິນກໍກັບຄືນເມືອເຂດແດນຂອງພວກເຂົາ

**ຣາຊການ ແລະຄອບຄົວຂອງຊາອູນ**

Saul’s Continuing Wars

47 ໃນລະຍະທີ່ຊາອູນໄດ້ເປັນເຈົ້າຊີວິດຂອງຊາວອິສຣາເອນ ພຣະອົງໄດ້ສູ້ຮົບຕົບຕີກັບສັດຕຣູຂອງພຣະອົງທຸກໆ
ຄົນຄື ຊາວໂມອາບ ຊາວອັມໂມນ ຊາວເອໂດມ ເຈົ້າຊີວິດຂອງໂຊບາ ແລະພວກຟີລິສຕິນ ທຸກໆບ່ອນທີ່ທ່ານຕໍ່
ສູ້ກໍໄດ້ຮັບໄຊຊະນະ
48 ພຣະອົງຕໍ່ສູ້ຢ່າງກ້າຫານ ແລະໄດ້ໂຈມຕີພວກອາມາເລກ ພຣະອົງໄດ້ຊ່ອຍພວກອິສຣາເອນໃຫ້ພົ້ນຈາກການ
ໂຈມຕີຂອງພວກສັດຕຣູທຸກຢ່າງ
49 ບັນດາບຸດຊາຍຂອງຊາອູນມີຄື ໂຢນາທານ ອີສວີ ແລະມັນຄີຊູອາ ສ່ວນບຸດສາວທັງສອງຂອງພຣະອົງຄື ຄົນ
ທີ່ວປີຊື່ ເມຣັບ ແລະຜູ້ນ້ອຍຊື່ ມີຄານ
50 ມະເຫສີຂອງພຣະອົງຊື່ ອາຮີໂນອາມ ບຸດສາວຂອງອາຮີມາອັສ ສ່ວນຜູ້ບັງຄັບບັນຊາໃນກອງທັບຂອງພຣະອົງ
ຊື່ວ່າ ອັບເນີ ບຸດເນີລຸງຂອງຊາອູນ
51 ຄີສ ເປັນບິດາຂອງຊາອູນ ແລະເນີຜູ້ເປັນບິດາຂອງອັບເນີເປັນບຸດຂອງອາບີເອນ
ຕລອດເວລາທີ່ຊາອູນດຳຣົງຊີວິດຢູ່ນັ້ນ ພຣະອົງໄດ້ສູ້ຮົບກັບພວກຟີລິສຕິນຢ່າງດຸເດືອດ ເມື່ອພຣະອົງພົບຊາຍ
ຄົນໃດທີ່ແຂງແຮງ ແລະເຂັ້ມແຂງ ພຣະອົງກໍເອົາເຂົ້າມາຮັບໃຊ້ຢູ່ໃນກອງທັບຂອງພຣະອົງ

## 15 ເສິກສົງຄາມຕໍ່ສູ້ກັບຊາວອາມາເລກ

Saul Defeats the Amalekites but Spares Their King

1 ຕໍ່ມາ ຊາມູເອນໄດ້ເວົ້າຕໍ່ຊາອູນວ່າ, “ຂ້າພະເຈົ້າເປັນຜູ້ທີ່ພຣະຜູ້ເປັນເຈົ້າຊົງສັ່ງມາເອົານໍ້າມັນຊະໂລມຫົດສົງ
ທ່ານໃຫ້ເປັນເຈົ້າຊີວິດພວກອິສຣາເອນໄພ່ພົນຂອງພຣະອົງ ດຽວນີ້ ຈົ່ງຟັງເບິ່ງວ່າພຣະຜູ້ເປັນເຈົ້າອົງຊົງມີອຳ
ນາດຍິ່ງໃຫຍ່ກ່າວຢ່າງໃດ
2 ພຣະອົງຈະຊົງລົງໂທດຊາວອາມາເລກ ເພາະວ່າພວກເຂົາຕໍ່ຕ້ານຊາວອິສຣາເອນ ໃນເວລາທີ່ພວກເຂົາມາ
ຈາກເອຢິບ
3 ຈົ່ງໄປຕໍ່ສູ້ຊາວອາມາເລກ ແລະທຳລາຍທຸກໆຢ່າງທີ່ເຂົາມີ ຢ່າເມດຕາປານີເຂົາເລີຍ ຈົ່ງຂ້າຜູ້ຊາຍ ຜູ້ຍິງ ເດັກ
ນ້ອຍ ແລະເດັກອ່ອນທຸກໆຄົນ ພ້ອມງົວ ແກະ ອູດ ແລະລໍ”
4 ຊາອູນຈຶ່ງໄດ້ສັ່ງກອງທະຫານຂອງພຣະອົງເຂົ້າມາໂຮມກັນ ແລ້ວໄດ້ກວດກາເບິ່ງທີ່ເມືອງ ເຕລາອີມ ຊຶ່ງມີທະ
ຫານອິສຣາເອນຢູ່ສອງແສນຄົນ ແລະທະຫານຢູດາສິບພັນຄົນ
5 ຊາອູນພ້ອມທັງກອງທະຫານກໍໄປຍັງເມືອງອາມາເລກ ແລະຄອຍຖ້າດັກໂຈມຕີຢູ່ໃນຮ່ອມຫ້ວຍ
6 ພຣະອົງໄດ້ເຕືອນຊາວເກນີດວ່າ, “ຈົ່ງພາກັນຫນີຈາກຊາວອາມາເລກ ເພື່ອວ່າເຮົາຈະບໍ່ໄດ້ຂ້າພວກເຈົ້າພ້ອມ
ກັບພວກເຂົາ ເພາະວ່າພວກເຈົ້າໄດ້ເມດຕາຕໍ່ຊາວອິສຣາເອນເມື່ອພວກເຂົາມາຈາກເອຢິບ” ແລ້ວພວກເກນີດ
ກໍຫນີໄປ
7 ຊາອູນໄດ້ເຮັດໃຫ້ຊາວອາມາເລກເສັຽໄຊ ຕັ້ງແຕ່ຮາວີລາຈົນເຖິງຊູຣ໌ ຢູ່ທາງຕາເວັນອອກຂອງເອຢິບ
8 ພຣະອົງໄດ້ຂ້າປະຊາຊົນທັງຫມົດ ແຕ່ໄດ້ຈັບເອົາເຈົ້າຊີວິດອາກາກມາ
9 ຊາອູນ ແລະທະຫານຂອງພຣະອົງໄດ້ປ່ອຍໃຫ້ອາກາກມີຊີວິດຢູ່ ແລະບໍ່ໄດ້ຂ້າແກະ ງົວໂຕທີ່ງາມທີ່ສຸດ ພ້ອມ
ທັງລູກຂອງມັນ ຫລືທຳລາຍສິ່ງຂອງທີ່ມີຄຸນຄ່າເລີຍ ແຕ່ວ່າພວກເຂົາໄດ້ທຳລາຍທຸກໆສິ່ງທີ່ອັບປໂຍດ ແລະບໍ່
ມີຄຸນຄ່າ

Saul Rejected as King

10 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຊາມູເອນວ່າ,

11 “ເຮົາເສັຽໃຈຫລາຍທີ່ໄດ້ແຕ່ງຕັ້ງໃຫ້ຊາອູນເປັນເຈົ້າຊີວິດ ເຂົາໄດ້ຫັນຫນີຈາກເຮົາ ແລະບໍ່ໄດ້ເຊື່ອຟັງຄຳສັ່ງ
ຂອງເຮົາ” ຊາມູເອນກໍໃຈຮ້າຍ ທ່ານໄດ້ອ້ອນວອນຮ້ອງຂໍກັບພຣະຜູ້ເປັນເຈົ້າຕລອດທັງຄືນ ແລ້ວທ່ານໄດ້ອອກ
ໄປພົບຊາອູນແຕ່ເຊົ້າໆ
12 ແຕ່ໄດ້ຍິນຂ່າວວ່າຊາອູນໄດ້ໄປເມືອງການ໌ເມນ ບ່ອນທີ່ພຣະອົງກໍ່ສ້າງອະນຸສາວະລີໄວ້ສຳລັບພຣະອົງເອງ
ແລ້ວໄດ້ໄປເມືອງກິນການ
13 ຊາມູເອນໄດ້ໄປຫາຊາອູນ ເມື່ອຊາອູນເຫັນທ່ານກໍທຳຄວາມຄຳນັບ ແລະເວົ້າວ່າ, “ທ່ານຊາມູເອນເອີຍ ຂໍພຣະ
ຜູ້ເປັນເຈົ້າຊົງອວຍພອນທ່ານເທີນ ເຮົາໄດ້ເຊື່ອຟັງຄຳສັ່ງພຣະຜູ້ເປັນເຈົ້າແລ້ວ”
14 ຊາມູເອນຈຶ່ງຖາມວ່າ, “ເປັນຫຍັງຂ້າພະເຈົ້າຈຶ່ງໄດ້ຍິນສຽງຮ້ອງຂອງຝູງງົວ ແລະຂອງຝູງແກະ”
15 ຊາອູນຕອບວ່າ, “ທະຫານຂອງເຮົາໄດ້ເອົາສັດເຫລົ່ານັ້ນມາຈາກຊາວອາມາເລກ ພວກເຂົາໄດ້ເອົາຝູງແກະ
ຝູງງົວທີ່ດີໄວ້ ເພື່ອຖວາຍເປັນເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າຂອງທ່ານ ແລະສ່ວນທີ່ເຫລືອນັ້ນພວກເຮົາໄດ້ທຳ
ລາຍຖິ້ມຫມົດແລ້ວ”
16 ຊາມູເອນເວົ້າວ່າ, “ຢຸດກ່ອນ ຂ້າພະເຈົ້າຈະບອກພຣະອົງວ່າ ພຣະຜູ້ເປັນເຈົ້າຊົງກ່າວວ່າຢ່າງໃດກັບຂ້າພະເຈົ້າ
ໃນຄືນນີ້” ຊາອູນຈຶ່ງເວົ້າວ່າ, “ຂໍຈົ່ງບອກເຮົາດ້ວຍ”
17 ຊາມູເອນຕອບວ່າ, “ເຖິງແມ່ນວ່າ ພຣະອົງໄດ້ພິຈາຣະນາຕົວເອງວ່າບໍ່ມີຄວາມສຳຄັນ ແຕ່ພຣະອົງກໍເປັນຜູ້ນຳ
ຕະກູນອິສຣາເອນ ພຣະຜູ້ເປັນເຈົ້າຊົງເອົານ້ຳມັນຊະໂລມຫົດສົງພຣະອົງ ໃຫ້ເປັນເຈົ້າຊີວິດຂອງອິສຣາເອນ
18 ພຣະເຈົ້າໄດ້ຊົງສັ່ງພຣະອົງອອກໄປທຳລາຍພວກຄົນຊົ່ວຮ້າຍເຫລົ່ານີ້ໃນເມືອງອາມາເລກ ພຣະອົງຊົງບອກໃຫ້
ຕໍ່ສູ້ຈົນເຖິງໄດ້ຂ້າພວກເຂົາຖິ້ມຫມົດ
19 ແລ້ວເປັນຫຍັງພຣະອົງຈຶ່ງບໍ່ເຊື່ອຟັງພຣະຜູ້ເປັນເຈົ້າ ເປັນຫຍັງຈຶ່ງຍຶດເອົາສິ່ງຂອງເຫລົ່ານີ້ ແລະໄດ້ທຳໃນສິ່ງທີ່
ພຣະຜູ້ເປັນເຈົ້າບໍ່ຊົງພໍພຣະທັຍ”
20 ຊາອູນໄດ້ເວົ້າວ່າ, “ເຮົາໄດ້ເຊື່ອຟັງພຣະຜູ້ເປັນເຈົ້າ ໄດ້ອອກໄປທຳຕາມຄຳທີ່ພຣະອົງບອກຄື ເຮົາໄດ້ນຳເອົາ
ເຈົ້າຊີວິດອາກາກມາແລ້ວ ຂ້າຊາວອາມາເລກທຸກຄົນ
21 ແຕ່ວ່າ ທະຫານຂອງເຮົາບໍ່ໄດ້ຂ້າແກະ ງົວຕົວງາມທີ່ສຸດຊຶ່ງພວກເຂົາຍຶດເອົາມາໄດ້ ພວກເຂົາກັບນຳສັດເຫລົ່າ
ນັ້ນມາເມືອງກິນການ ເພື່ອເຜົາບູຊາແດ່ພຣະຜູ້ເປັນເຈົ້າຂອງທ່ານ”
22 ຊາມູເອນໄດ້ເວົ້າວ່າ, “ພຣະຜູ້ເປັນເຈົ້າຊົງຕ້ອງການຢາກໃຫ້ມະນຸດເຊື່ອຟັງ ຫລືຖວາຍບູຊາແດ່ພຣະອົງ ສິ່ງທີ່
ຖືກຄື ການເຊື່ອຟັງພຣະອົງດີກວ່າເອົາແກະຕົວງາມທີ່ສຸດມາຖວາຍເປັນເຄື່ອງບູຊາແດ່ພຣະອົງ
23 ການກະບົດຕໍ່ສູ້ພຣະອົງເປັນການຊົ່ວຮ້າຍເທົ່າກັບການໃຊ້ເວດມົນຄາຖາ ແລະຄວາມຈອງຫອງກໍແມ່ນບາບ
ເທົ່າກັບການຂາບໄຫວ້ຮູບພຣະ ຍ້ອນວ່າພຣະອົງໄດ້ປະຖິ້ມຄຳສັ່ງຂອງພຣະເຈົ້າ ພຣະເຈົ້າຈຶ່ງຊົງປົດພຣະອົງ
ອອກຈາກຕຳແຫນ່ງເຈົ້າຊີວິດ”
24 ຊາອູນຈຶ່ງເວົ້າວ່າ, “ເຮົາໄດ້ເຮັດຜິດຄື ບໍ່ໄດ້ເຊື່ອຟັງຄຳສັ່ງຂອງພຣະຜູ້ເປັນເຈົ້າ ແລະຄຳແນະນຳຂອງທ່ານ ກໍ
ເພາະວ່າເຮົາຢ້ານທະຫານຂອງເຮົາ ເຮົາຈຶ່ງທຳຕາມທີ່ເຂົາຕ້ອງການ
25 ແລະດຽວນີ້ເຮົາຂໍຮ້ອງທ່ານໃຫ້ອະພັຍຄວາມຜິດຂອງເຮົາ ແລະກັບຄືນໄປກັບເຮົາເພື່ອວ່າເຮົາຈະໄດ້ນະມັສ
ການພຣະຜູ້ເປັນເຈົ້າ”
26 ຊາມູເອນຕອບວ່າ, “ຂ້າພະເຈົ້າຈະບໍ່ກັບຄືນໄປກັບພຣະອົງ ເພາະພຣະອົງໄດ້ປະຖິ້ມຄຳສັ່ງຂອງພຣະຜູ້ເປັນ
ເຈົ້າແລ້ວ ແລະ ພຣະເຈົ້າໄດ້ຊົງປົດພຣະອົງອອກຈາກຕຳແຫນ່ງເຈົ້າຊີວິດຂອງພວກອິສຣາເອນ”
27 ເມື່ອຊາມູເອນຈະກັບຫລັງອອກຫນີໄປ
28 ຊາມູເອນເວົ້າຕໍ່ພຣະອົງວ່າ, “ວັນນີ້ ພຣະຜູ້ເປັນເຈົ້າຈະຍຶກຣາຊອານາຈັກອິສຣາເອນຫນີຈາກພຣະອົງ ແລະຈະ
ເອົາໃຫ້ຜູ້ອື່ນທີ່ດີກວ່າພຣະອົງ

29 ພຣະເຈົ້າອົງຍິ່ງໃຫຍ່ຂອງຊາວອິສຣາເອນບໍ່ຕົວະ ຫລືບໍ່ຊົງປ່ຽນພຣະທັຍເຫມືອນມະນຸດ”
30 ຊາອູນຕອບວ່າ, “ເຮົາໄດ້ທຳຜິດ ແຕ່ຂໍທ່ານຈົ່ງໃຫ້ຄວາມນັບຖືແກ່ເຮົາຕໍ່ຫນ້າພວກຜູ້ນຳປະຊາຊົນຂອງເຮົາ ແລະຕໍ່ຫນ້າຊາວອິສຣາເອນທຸກຄົນ ຂໍທ່ານຈົ່ງກັບຄືນໄປກັບເຮົາ ເພື່ອເຮົາຈະໄດ້ນະມັສການພຣະຜູ້ເປັນເຈົ້າຂອງທ່ານ”
31 ດັ່ງນັ້ນ ຊາມູເອນຈຶ່ງໄດ້ກັບຄືນເມືອກັບຊາອູນ ແລະຊາອູນກໍໄດ້ນະມັສການພຣະຜູ້ເປັນເຈົ້າ
32 ຕໍ່ມາ ຊາມູເອນໄດ້ສັ່ງວ່າ, “ຈົ່ງພາເຈົ້າຊີວິດອາກາກມາຫາຂ້າພະເຈົ້າຢູ່ທີ່ນີ້” ອາກາກກໍເຂົ້າມາຫາທ່ານດ້ວຍຄວາມຢ້ານສັ່ນ ແລະທັງຄິດໃນໃຈວ່າ “ການຕາຍນີ້ຊ່າງເປັນການຂົມຂື່ນແທ້”
33 ຊາມູເອນໄດ້ເວົ້າວ່າ ດາບຂອງເຈົ້າໄດ້ເຮັດໃຫ້ແມ່ຫລາຍຄົນສູນເສັຽລູກ ດັ່ງນັ້ນ ແມ່ຂອງເຈົ້າຈະສູນເສັຽລູກເຊັ່ນດຽວກັນ” ແລ້ວຊາມູເອນໄດ້ຂ້າອາກາກ ແລະຕັດເປັນທ່ອນໆຕໍ່ຫນ້າແທ່ນບູຊາທີ່ເມືອງກິນການ
34 ແລ້ວຊາມູເອນກໍໄປເມືອງຣາມາ ສ່ວນເຈົ້າຊີວິດຊາອູນກໍໄປຍັງວັງຂອງພຣະອົງທີ່ເມືອງກິເບອາ
35 ຕໍ່ມາຕລອດທີ່ຊາມູເອນມີຊີວິດຢູ່ ທ່ານບໍ່ໄດ້ເຫັນເຈົ້າຊີວິດຊາອູນອີກຈັກເທື່ອ ແຕ່ທ່ານກໍເສົ້າສລົດໃຈນຳພຣະອົງຫລາຍ ສ່ວນພຣະຜູ້ເປັນເຈົ້າກໍຊົງເສັຽພຣະທັຍທີ່ໄດ້ຊົງແຕ່ງຕັ້ງໃຫ້ຊາອູນເປັນເຈົ້າຊີວິດຂອງຊາວອິສຣາເອນ

## 16 ດາວິດຮັບການຫົດສົງໃຫ້ເປັນກະສັດ

David Anointed as King

1 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຊາມູເອນວ່າ, “ເຈົ້າຍັງຈະໂສກເສົ້າສລົດໃຈນຳຊາອູນນັ້ນອີກດົນປານໃດ ເຮົາໄດ້ປົດເຂົາອອກຈາກຕຳແຫນ່ງເຈົ້າຊີວິດຂອງອິສຣາເອນແລ້ວ ຈົ່ງຖືເອົານ້ຳມັນຊະໂລມໄປທີ່ເມືອງເບັດເລເຮັມ ເຮົາຈະສົ່ງເຈົ້າໄປພົບຊາຍຄົນນຶ່ງທີ່ມີຊື່ວ່າ ເຈສຊີ ເພາະວ່າເຮົາໄດ້ເລືອກເອົາຜູ້ນຶ່ງໃນຈຳນວນບຸດຊາຍຂອງເຂົາໃຫ້ເປັນເຈົ້າຊີວິດ”
2 ຊາມູເອນຈຶ່ງທູນຖາມວ່າ, “ຂ້າພຣະອົງຈະເຮັດການນີ້ໄດ້ຢ່າງໃດ ຖ້າຊາອູນໄດ້ຍິນເຣື່ອງນີ້ ເຂົາກໍຈະມາຂ້າຂ້າພຣະອົງ”
3 ພຣະຜູ້ເປັນເຈົ້າຊົງຕອບວ່າ, “ໃຫ້ເຈົ້າເອົາງົວນ້ອຍໄປນຳ ແລະໃຫ້ເຈົ້າເວົ້າວ່າເຈົ້າມາຖວາຍເຄື່ອງບູຊາແກ່ພຣະຜູ້ເປັນເຈົ້າ ຈົ່ງເຊີນເຈສຊີມາໃນການຖວາຍນັ້ນ ແລ້ວເຮົາຈະບອກເຈົ້າວ່າຄວນທຳຢ່າງໃດຕໍ່ໄປ ແລະເຈົ້າຈະເອົານ້ຳມັນຊະໂລມຫົດສົງຊາຍທີ່ເຮົາຈະໃຫ້ເປັນເຈົ້າຊີວິດ”
4 ຊາມູເອນກໍຊົງທຳຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງ ແລະໄດ້ເດີນທາງໄປເມືອງເບັດເລເຮັມ ພວກເຖົ້າແກ່ໃນເມືອງນີ້ກໍອອກມາພົບທ່ານດ້ວຍຄວາມຢ້ານກົວ ແລະຖາມວ່າ, “ທ່ານເອີຍ ການມາຢາມນີ້ເປັນການຢ່າງສັນຕິບໍ”
5 ຊາມູເອນຕອບວ່າ, “ຂ້າພະເຈົ້າມາຖວາຍເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າ ຈົ່ງບຳເພັນຕົນໃຫ້ບໍຣິສຸດແລ້ວມານຳຂ້າພະເຈົ້າ” ແລ້ວທ່ານໄດ້ບອກເຈສຊີພ້ອມທັງບຸດຊາຍບຳເພັນຕົນໃຫ້ບໍຣິສຸດ ແລະກໍເຊື້ອເຊີນພວກເຂົາມາຮ່ວມໃນການຖວາຍເຄື່ອງ
ບູຊາດ້ວຍ
6 ເມື່ອພວກເຂົາມາຮອດ ຊາມູເອນກໍເຫັນເອລີອາບບຸດຊາຍຂອງເຈສຊີ ຈຶ່ງຄິດໃນໃຈວ່າ “ຊາຍທີ່ຢືນຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້ານັ້ນຕ້ອງແມ່ນຜູ້ທີ່ພຣະອົງໄດ້ຊົງເລືອກໄວ້ນັ້ນແນ່ນອນ”
7 ແຕ່ວ່າ ພຣະຜູ້ເປັນເຈົ້າຊົງກ່າວຕໍ່ທ່ານວ່າ, “ຢ່າສົນໃຈນຳຮູບຮ່າງອັນຈົບງາມຂອງເຂົາ ເຮົາບໍ່ຍອມເອົາເຂົາເພາະວ່າການຕັດສິນໃຈຂອງເຮົາບໍ່ຄືຂອງມະນຸດ ມະນຸດເບິ່ງແຕ່ສິ່ງທີ່ຢູ່ຂ້າງນອກເທົ່ານັ້ນ ແຕ່ວ່າເຮົາເບິ່ງພາຍໃນຈິດໃຈ”

8 ແລ້ວເຈສຊີກໍເອີ້ນອາບີນາດາບບຸດຂອງທ່ານມາ ແລ້ວພາໄປຫາຊາມູເອນ ແຕ່ຊາມູເອນເວົ້າວ່າ, "ບໍ່ແມ່ນ
ພຣະຜູ້ເປັນເຈົ້າບໍ່ໄດ້ຊົງເລືອກເອົາເຂົາ"
9 ເຈສຊີພາຊັມມາເຂົ້າມາອີກ ຊາມູເອນກໍບອກວ່າ, "ບໍ່ແມ່ນ ພຣະຜູ້ເປັນເຈົ້າບໍ່ໄດ້ຊົງເລືອກເອົາເຂົາ"
10 ແຕ່ແລ້ວ ເຈສຊີກໍພາບຸດຊາຍທັງເຈັດຄົນຂອງທ່ານມາຫາຊາມູເອນ ຊາມູເອນຈຶ່ງເວົ້າຕໍ່ທ່ານວ່າ, "ບໍ່ແມ່ນ ພຣະ
ຜູ້ເປັນເຈົ້າບໍ່ໄດ້ຊົງເລືອກເອົາໃຜຈັກຄົນໃນຈຳນວນພວກນີ້"
11 ແລ້ວຖາມທ່ານຕໍ່ໄປວ່າ, "ທ່ານຍັງມີລູກຊາຍອີກຢູ່ບໍ" ເຈສຊີຕອບວ່າ, "ຍັງມີລູກຊາຍຫລ້າຢູ່ ແຕ່ດຽວນີ້ເຂົາໄດ້
ໄປລ້ຽງແກະ" ຊາມູເອນຈຶ່ງເວົ້າວ່າ, "ຈົ່ງໄປນຳເຂົາມານີ້ພວກເຮົາຈະບໍ່ຖວາຍເຄື່ອງບູຊາຈົນກວ່າເຂົາຈະມາ"
12 ເຈສຊີກໍສົ່ງຄົນໄປນຳເອົາເຂົາມາ ເຂົາເປັນຄົນງາມ ເປັນຊາຍໜຸ່ມທີ່ມີສຸຂະພາບສົມບູນດີ ແລະຕາຂອງເຂົາກໍ
ມີແວວ ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວຕໍ່ຊາມູເອນວ່າ, "ແມ່ນຄົນນີ້ແຫລະ ຈົ່ງເອົານ້ຳມັນຊະໂລມຫົດສົງເຂົາເສັຽ"
13 ຊາມູເອນຈຶ່ງເອົານ້ຳມັນຊະໂລມມາຫົດສົງດາວິດໃຫ້ເປັນເຈົ້າຊີວິດຕໍ່ໜ້າພວກອ້າຍນ້ອງຂອງທ່ານ ພຣະວິນ
ຍານຂອງພຣະຜູ້ເປັນເຈົ້າກໍຊົງສະຖິດຢູ່ກັບດາວິດ ແລະຊົງຢູ່ກັບທ່ານຕັ້ງແຕ່ວັນນັ້ນມາ ແລ້ວຊາມູເອນກໍກັບ
ຄືນເມືອບ້ານຣາມາ

**ດາວິດທີ່ພຣະຣາຊວັງ**

14 ພຣະວິນຍານຂອງພຣະຜູ້ເປັນເຈົ້າກໍຊົງໜີຈາກຊາອູນໄປ ແລ້ວພຣະຜູ້ເປັນເຈົ້າກໍຊົງສົ່ງວິນຍານຊົ່ວເຂົ້າມາທໍ
ຣະມານພຣະອົງ
15 ພວກຄົນຮັບໃຊ້ຈຶ່ງທູນພຣະອົງວ່າ, "ພວກຂ້ານ້ອຍໄດ້ຮູ້ວ່າ ວິນຍານຊົ່ວທີ່ສົ່ງມາຈາກພຣະເຈົ້າໄດ້ທໍຣະມານພ
ຣະອົງ
16 ຂໍແຕ່ພຣະອົງ ຂໍຊົງອອກຄຳສັ່ງມາ ແລ້ວພວກຂ້ານ້ອຍຈະຊອກຫາຄົນທີ່ຮູ້ຈັກດີດພິນມາໃຫ້ ເວລາພຣະອົງມີ
ວິນຍານຊົ່ວສິງຢູ່ໃນພຣະອົງ ຊາຍຄົນນັ້ນກໍຈະດີດພິນຂອງເຂົາ ແລະພຣະອົງກໍຈະດີຄືເກົ່າອີກ"
17 ຊາອູນຈຶ່ງອອກຄຳສັ່ງໃຫ້ພວກເຂົາວ່າ, "ຈົ່ງໄປຊອກຫາຜູ້ນັ້ນແລ້ວພາມາຫາເຮົາ"
18 ມີຄົນນຶ່ງໃນພວກຂ້າໃຊ້ຂອງທ່ານເວົ້າວ່າ, "ມີທ່ານເຈສຊີຄົນເມືອງເບັດເລເຮັມ ທ່ານມີລູກຊາຍຜູ້ນຶ່ງທີ່ຫລິ້ນດົນ
ຕຣີເກັ່ງ ນອກນີ້ເຂົາຍັງເປັນນັກຮົບທີ່ກ້າຫານອີກດ້ວຍ ເປັນຄົນກ້າປາກກ້າເວົ້າ ແລະທັງງາມອີກດ້ວຍ ພຣະຜູ້
ເປັນເຈົ້າກໍຊົງໄດ້
ສະຖິດຢູ່ກັບເຂົາ"
19 ດັ່ງນັ້ນ ຊາອູນຈຶ່ງສົ່ງຄົນນຳຂ່າວໄປຫາເຈສຊີ ໂດຍມີເນື້ອຄວາມວ່າ, "ຂໍໃຫ້ສົ່ງດາວິດບຸດຊາຍຜູ້ລ້ຽງຝູງແກະ
ນັ້ນມາຫາເຮົາ"
20 ເຈສຊີກໍສົ່ງດາວິດໄປຫາຊາອູນ ພ້ອມທັງຖົງໜັງເຫລົ້າອະງຸ່ນ ແບ້ນ້ອຍ ແລະລໍທີ່ບັນທຸກເຂົ້າຈີ່
21 ດາວິດໄດ້ເຂົ້າເຝົ້າຊາອູນ ແລະໄດ້ເຂົ້າຮັບຣາຊການນຳພຣະອົງ ຊາອູນກໍພໍໃຈໃນເຂົາຫລາຍ ແລະໃຫ້ເຂົາເປັນ
ຄົນຖືອາວຸດຂອງພຣະອົງ
22 ແລ້ວຊາອູນກໍສົ່ງຂ່າວຫາເຈສຊີວ່າ, "ເຮົາພໍໃຈກັບດາວິດ ຂໍໃຫ້ເຂົາຢູ່ໃນວົງຣາຊການຂອງເຮົາພີ້"
23 ເມື່ອເວລາໃດວິນຍານຊົ່ວທີ່ສົ່ງມາຈາກພຣະເຈົ້າເຂົ້າສິງຊາອູນ ດາວິດກໍຈັບເອົາພິນຂອງເຂົາອອກມາດີດ
ແລ້ວວິນຍານຊົ່ວກໍໜີຈາກໄປ ແລະຊາອູນກໍຮູ້ສຶກສະບາຍຂຶ້ນ ແລະເປັນປົກກະຕິເໝືອນເດີມ

## 17 ເດວິດ ແລະໂກລີອາດ

David and Goliath

1 ພວກຟີລິສຕິນໄດ້ທ້ອນໂຮມກຳລັງເຂົ້າສູ່ສົງຄາມໃນເມືອງໂຊໂກທີ່ແຂວງຢູດາ ພວກເຂົາໄດ້ຕັ້ງຄ້າຍພັກຢູ່
ບ່ອນນຶ່ງຊຶ່ງເອີ້ນວ່າ ເຂດແດນເລືອດ ຢູ່ລະຫວ່າງກາງເມືອງໂຊໂກ ແລະເມືອງອາເຊກາທີ່ເອເຟສດາມມີມ
2 ສ່ວນຊາອູນ ແລະຊາວອິສຣາເອນກໍພາກັນມາຕັ້ງຄ້າຍພັກຢູ່ຮ່ອມພູຕົ້ນກໍ່ ຊຶ່ງເປັນບ່ອນທີ່ພວກເຂົາຕຽມຕໍ່ສູ້ກັບ
ພວກຟີລິສຕິນ
3 ພວກຟີລິສຕິນໄດ້ໄປຕັ້ງຄ້າຍພັກຢູ່ເທິງພູນ້ອຍຫນ່ວຍນຶ່ງກ່ອນແລ້ວ ແລະພວກອິສຣາເອນກໍມາຟາກຮ່ອມພູ
ຫນ່ວຍນຶ່ງອີກ
4 ແລ້ວກໍມີຊາຍຄົນນຶ່ງຊື່ວ່າ ໂກລີອາດ ເປັນຊາວເມືອງກາດໄດ້ອອກຈາກຄ້າຍພັກຂອງພວກຟີລິສຕິນມາທ້າ
ທາຍພວກອິສຣາເອນ ເຂົາເປັນຄົນສູງປະມານທີກສອກຄືບ
5 ເຂົາໃສ່ຫມວກທອງສຳຣິດ ແລະນຸ່ງເສື້ອທອງສຳຣິດຫນັກປະມານຫ້າສິບເຈັດກິໂລກຣາມ
6 ສ່ວນຂາຂອງເຂົາກໍສວມທອງສຳຣິດດ້ວຍ ເຂົາພາຍຫລາວທີ່ເຮັດດ້ວຍທອງສຳຣິດ
7 ຄັນຫອກຂອງເຂົາຫນາເທົ່າກັບໄມ້ກຳຟັ່ນຫູກ ແລະໃນປາຍຫອກນັ້ນຫນັກປະມານທີກຮ້ອຍເຊເກລເປັນເຫລັກ
(ສິບກິໂລກຣາມ) ທະຫານຜູ້ທີ່ຖືແຜ່ນເຫລັກຕ້ານທານຂອງເຂົາກໍຍ່າງອອກຫນ້າ
8 ໂກລີອາດໄດ້ຢືນຮ້ອງແຜດສຽງໃສ່ພວກອິສຣາເອນວ່າ, “ພວກສູກຳລັງເຮັດຫຍັງຢູ່ນີ້ ມາຕີເສິກບໍ ກູເປັນຄົນຟີລິ
ສຕິນ ພວກສູເປັນທາດຂອງຊາອູນ ຈົ່ງເລືອກເອົາທະຫານຜູ້ນຶ່ງໃນພວກສູອອກມາຕໍ່ສູ້ກັບກູດູ
9 ຖ້າມັນຊະນະ ແລະຂ້າກູໄດ້ ພວກກູຈະຍອມເປັນທາດຂອງພວກສູ
10 ດຽວນີ້ ກູຂໍທ້າທາຍກອງທັບອິສຣາເອນຢູ່ບ່ອນນີ້ ກູຂໍໃຫ້ພວກສູເລືອກເອົາໃຜກໍໄດ້ອອກມາຕໍ່ສູ້ກັບກູ”
11 ເມື່ອຊາອູນ ແລະທະຫານໄດ້ຍິນດັ່ງນັ້ນ ພວກທ່ານກໍມີຄວາມຢ້ານກົວຫລາຍ
12 ດາວິດເປັນບຸດຊາຍຂອງເຈສຊີ ຊາວເອຟຣາອິມ ຊຶ່ງມາຈາກເມືອງເບັດເລເຮັມໃນຢູດາ ເຈສຊີມີບຸດຊາຍແປດ
ຄົນ ໃນຄາວທີ່ຊາອູນເປັນເຈົ້າຊີວິດຢູ່ນັ້ນເຈສຊີກໍເຖົ້າແກ່ແລ້ວ
13 ສ່ວນບຸດຊາຍໃຫຍ່ສາມຄົນຂອງທ່ານໄດ້ໄປຕີເສິກກັບຊາອູນ ຜູ້ກົກຊື່ວ່າ ເອລີອາບ ຜູ້ຕໍ່ມາຊື່ວ່າ ອາບີນາດາບ
ແລະຜູ້ທີ່ສາມຊື່ວ່າ ຊັມມາ
14 ສ່ວນດາວິດເປັນບຸດຊາຍຫລ້າ ເວລາທີ່ອ້າຍທັງສາມຂອງເຂົາຢູ່ນຳຊາອູນນັ້ນ
15 ບາງເທື່ອດາວິດກໍລາຊາອູນກັບຄືນເມືອເບິ່ງຝູງແກະຂອງບິດາທີ່ເມືອງເບັດເລເຮັມຢູ່ເລື້ອຍໆ
16 ສ່ວນໂກລີອາດກໍທ້າທາຍຊາວອິສຣາເອນຢູ່ທຸກໆເຊົ້າທຸກແລງ ເປັນເວລາຢູ່ສີ່ສິບວັນ
17 ວັນນຶ່ງ ເຈສຊີໄດ້ເວົ້າຕໍ່ດາວິດວ່າ, “ຈົ່ງເອົາເຂົ້າຂົ້ວເອຟານຶ່ງ ແລະເຂົ້າຈີ່ສິບກ້ອນນີ້ ໄປໃຫ້ພວກອ້າຍຂອງເຈົ້າຢູ່
ໃນຄ້າຍ
18 ແລະຈົ່ງເອົາເນີຍສິບກ້ອນນີ້ໃຫ້ແກ່ທ່ານນາຍພັນ ຈົ່ງເບິ່ງວ່າພວກອ້າຍຂອງເຈົ້າພາກັນຢູ່ຢ່າງໃດ ແລະໃຫ້ເຈົ້າ
ເອົາຂອງບາງສິ່ງບາງຢ່າງຈາກພວກເຂົາມາເພື່ອສະແດງວ່າເຈົ້າໄດ້ເຫັນເຂົາ ແລະຮູ້ວ່າພວກເຂົາສະບາຍດີ
19 ດຽວນີ້ ເຈົ້າຊີວິດຊາອູນ ພວກອ້າຍຂອງເຈົ້າ ແລະພວກອິສຣາເອນຄົນອື່ນໆກໍຢູ່ໃນຮ່ອມພູຕົ້ນກໍ່ຊຶ່ງກຳລັງສູ້ຮົບ
ກັບພວກຟີລິສຕິນຢູ່”
20 ເຊົ້າວັນໃຫມ່ມາ ດາວິດໄດ້ລຸກແຕ່ເດິກໆ ເຂົາຝາກຝູງແກະໄວ້ນຳຄົນອື່ນ ແລະຖືເອົາອາຫານໄປຕາມບ່ອນທີ່
ເຈສຊີໄດ້ບອກ ເຂົາໄປຮອດຄ້າຍພັກພໍດີກັບເວລາທີ່ພວກອິສຣາເອນກຳລັງອອກໄປສູ່ສະຫນາມຮົບ ແລະມີ
ສຽງດັງກຶກກ້ອງດັງຂຶ້ນ
21 ທະຫານຂອງພວກຟີລິສຕິນ ແລະຂອງພວກອິສຣາເອນກໍຕັ້ງທີ່ຫມັ້ນຢູ່ຕໍ່ຫນ້າກັນ ແລະກັນເພື່ອຕຽມສູ້ຮົບ
22 ດາວິດກໍປະອາຫານໄວ້ກັບເຈົ້າຫນ້າທີ່ຝ່າຍສະບຽງອາຫານ ແລະໄດ້ແລ່ນໄປຫາພວກອ້າຍຂອງເຂົາທີ່ສະ
ຫນາມຮົບເພື່ອຖາມຂ່າວຄາວວ່າພວກເຂົາຢູ່ຢ່າງໃດ

23 ໃນຂນະທີ່ພວກເຂົາສົນທະນາກັນຢູ່ ໂກລີອາດກໍເຂົ້າມາທ້າທາຍພວກອິສຣາເອນຕາມທີ່ເຂົາໄດ້ເຄີຍເຮັດມາ
ແຕ່ຄັ້ງກ່ອນ ດາວິດກໍໄດ້ຍິນຄຳທ້າທາຍນັ້ນ
24 ເມື່ອພວກອິສຣາເອນຫລຽວເຫັນໂກລີອາດ ພວກເຂົາກໍໄດ້ແລ່ນປົບຫນີດ້ວຍຄວາມຢ້ານທີ່ສຸດ
25 ພວກເຂົາເວົ້າກັນວ່າ, “ຈົ່ງຟັງມັນເວົ້າຫັ້ນດູ ຖ້າໃຜຂ້າມັນໄດ້ເຈົ້າຊີວິດຈະປະທານຊັບສົມບັດໃຫ້ຜູ້ນັ້ນ ແລະໃຫ້
ແຕ່ງງານກັບພຣະຣາຊທິດາຂອງພຣະອົງ ຄອບຄົວພໍ່ຂອງຜູ້ນັ້ນຈະຖືກຍົກເວັ້ນຈາກການເສັຽສ່ວຍທຸກຢ່າງ”
26 ດາວິດຈຶ່ງຖາມພວກທີ່ຢູ່ໃກ້ໆກັບເຂົານັ້ນວ່າ, “ຜູ້ທີ່ຂ້າຄົນຟີລິສຕິນນີ້ໄດ້ ແລະຊ່ອຍພວກອິສຣາເອນໃຫ້ພົ້ນ
ຈາກການຫມິ່ນປມາດນີ້ຈະໄດ້ຫຍັງ ຄົນປ່າເຖື່ອນຊາວຟີລິສຕິນທີ່ເວົ້າທ້າທາຍກອງທັບຂອງພຣະຜູ້ເປັນເຈົ້າອົງ
ມີຊີວິດຢູ່ນີ້ ແມ່ນໃຜ”
27 ປະຊາຊົນຕອບເຂົາວ່າ, “ຜູ້ໃດທີ່ຂ້າໂກລີອາດຕາຍ ຈະຕ້ອງໄດ້ຮັບຕາມທີ່ໄດ້ເວົ້າມາແລ້ວນັ້ນ”
28 ເອລີອາບ ອ້າຍກົກຂອງດາວິດໄດ້ຍິນເຂົາເວົ້າກັບທະຫານເຫລົ່ານັ້ນ ເຂົາກໍຮ້າຍດາວິດ ແລະເວົ້າວ່າ, “ເຈົ້າກຳ
ລັງເຮັດຫຍັງຢູ່ນີ້ ແມ່ນໃຜເບິ່ງແຍງແກະຂອງເຈົ້າຢູ່ໃນຖິ່ນກັນດານ ມາເບິ່ງການສູ້ຮົບກັນເຮັດຫຍັງ ເປັນຫຍັງ
ເຈົ້າຈຶ່ງດື້ດ້ານ ແລະທະເຍີທະຍານແທ້”
29 ດາວິດຖາມອ້າຍຄືນວ່າ, “ຂ້ອຍໄດ້ເຮັດຫຍັງຜິດ ພຽງແຕ່ຖາມເທົ່ານັ້ນບໍ່ແມ່ນບໍ”
30 ແລ້ວເຂົາກໍຫັນໄປຖາມຊາຍຄົນອື່ນແບບດຽວກັນ ແລະທຸກຄົນທີ່ເຂົາຖາມ ເຂົາກໍຕອບຢ່າງດຽວກັນຫມົດ
31 ເມື່ອບາງຄົນໄດ້ຍິນຄຳຂອງດາວິດ ເຂົາກໍນຳໄປທູນຕໍ່ຊາອູນ ແລະພຣະອົງກໍບອກໃຫ້ເຂົານຳດາວິດເຂົ້າເຝົ້າ
32 ດາວິດໄດ້ທູນຕໍ່ຊາອູນວ່າ, “ຂ້າແດ່ພຣະອົງ ຂໍຢ່າໃຫ້ຜູ້ໃດຢ້ານຊາຍຟີລິສຕິນຄົນນີ້ເລີຍ ຂ້ານ້ອຍຂັນອາສາຈະ
ອອກໄປຕໍ່ສູ້ກັບເຂົາເອງ”
33 ຊາອູນກ່າວວ່າ, “ບໍ່ໄດ້ດອກ ເຈົ້າຈະຕໍ່ສູ້ກັບເຂົາໄດ້ຢ່າງໃດ ເຈົ້າຍັງເປັນເດັກນ້ອຍຢູ່ ສ່ວນໂກລີອາດນັ້ນເຄີຍ
ເປັນທະຫານມາແລ້ວ”
34 ດາວິດທູນຕອບວ່າ, “ຂ້າແດ່ພຣະອົງ ຂ້ານ້ອຍກໍເຄີຍເບິ່ງແຍງຝູງແກະຂອງພໍ່ຂ້ານ້ອຍ ມີບາງເທື່ອສິງ ຫລືຫມີ
ໄດ້ມາຄຸບເອົາລູກແກະໄປ
35 ຂ້ານ້ອຍໄດ້ໄລ່ຕິດຕາມໄປຕໍ່ສູ້ກັບມັນ ແລະໄດ້ຊ່ອຍຊີວິດຂອງແກະນ້ອຍນັ້ນໄວ້ ແລະຖ້າວ່າສິງ ຫລືຫມີກັບ
ຄືນມາຫາຂ້ານ້ອຍ ຂ້ານ້ອຍກໍຈັບຄໍມັນ ແລະຕີມັນຈົນຕາຍ
36 ຂ້ານ້ອຍໄດ້ຂ້າສິງ ແລະຫມີມາແລ້ວ ຂ້ານ້ອນຈະເຮັດກັບຊາຍຟີລິສຕິນປ່າເຖື່ອນຄົນນີ້ຢ່າງດຽວກັນ ເພາະວ່າ
ເຂົາໄດ້ຫມິ່ນປມາດກອງທັບຂອງພຣະເຈົ້າອົງມີຊີວິດຢູ່
37 ພຣະຜູ້ເປັນເຈົ້າໄດ້ຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກສິງ ແລະຫມີ ພຣະອົງກໍຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກຊາຍຟີລິ
ສຕິນຄົນນີ້ໄດ້” ຊາອູນຕອບວ່າ, “ດີແລ້ວ ຈົ່ງໄປເທີ້ນ ພຣະຜູ້ເປັນເຈົ້າຊົງສະຖິດຢູ່ກັບເຈົ້າ”
38 ຊາອູນກໍເອົາເຄື່ອງຮົບຂອງພຣະອົງເອງໃຫ້ດາວິດໃສ່ ພຣະອົງໄດ້ເອົາຫມວກທອງສຳຣິດໃສ່ໃຫ້ດາວິດ ແລະ
ເອົາເສື້ອຮົບໃຫ້ເຂົານຸ່ງ
39 ດາວິດໄດ້ເອົາດາບຂອງຊາອູນຂັດໃສ່ສາຍແອວ ແລະລອງຍ່າງເບິ່ງ ແຕ່ຍ່າງໄປບໍ່ໄດ້ ເພາະວ່າບໍ່ເຄີຍໃຊ້ເຄື່ອງ
ເຫລົ່ານີ້ຈັກເທື່ອ ດາວິດຈຶ່ງທູນຕໍ່ຊາອູນວ່າ, “ຂ້ານ້ອຍໄປສູ້ຮົບກັບເຄື່ອງແບບນີ້ບໍ່ໄດ້ດອກ ຂ້ານ້ອຍບໍ່ເຄີຍໃສ່
ມັນ”
40 ດັ່ງນັ້ນ ດາວິດຈຶ່ງແກ້ມັນອອກຫມົດ ເຂົາຈັບເອົາໄມ້ຄ້ອນສຳລັບຖືລ້ຽງແກະຂອງເຂົາ ແລ້ວກໍເກັບເອົາຫີນແຫ່
ຫ້າກ້ອນໃນແຄມຫ້ວຍໃສ່ຖົງ ແລ້ວຖືກະຖຸນຕຽມຕົວອອກໄປສູ້ຮົບກັບໂກລີອາດ
41 ຊາຍຟີລິສຕິນກໍຍ່າງມຸ່ງຫນ້າມາຫາດາວິດ ພ້ອມທັງຖືແຜ່ນເຫລັກຕ້ານທານຍ່າງອອກນຳຫນ້າເຂົາ ເຂົາຍ່າງ
ເຂົ້າມາໃກ້ໆ
42 ເມື່ອໄດ້ເບິ່ງດາວິດຄັກໆແລ້ວ ເຂົາກໍຄິດດູຖູກໃນໃຈວ່າເພາະວ່າດາວິດຍັງເປັນເດັກນ້ອຍທີ່ງາມແລະຫນ້າຮັກ

43 ເຂົາເວົ້າຕໍ່ດາວິດວ່າ, “ເຮີຍ ໄມ້ຄ້ອນນັ້ນສຳລັບໄວ້ເຮັດຫຍັງ ມຶງຄິດວ່າກູເປັນໝາຊັ້ນບໍ” ແລ້ວເຂົາກໍເອີ້ນດ່າສາບແຊ່ງດາວິດໃນນາມພຣະຂອງເຂົາ
44 ເຂົາເວົ້າທ້າທາຍດາວິດວ່າ, “ມານີ້ ກູຈະເອົາຊາກສົບຂອງມຶງໃຫ້ນົກ ແລະສັດກິນ”
45 ດາວິດເວົ້າຕອບວ່າ, “ເຈົ້າມາຕໍ່ສູ້ກັບຂ້ອຍດ້ວຍດາບ ຫອກແລະຫລາວ ແຕ່ວ່າ ຂ້ອຍມາຕໍ່ສູ້ເຈົ້າໃນພຣະນາມຂອງພຣະຜູ້ເປັນເຈົ້າແຫ່ງຈັກກະວານ ຊຶ່ງເປັນພຣະເຈົ້າຂອງກອງທັບອິສຣາເອນທີ່ເຈົ້າໄດ້ເວົ້າທ້າທາຍນັ້ນ
46 ໃນວັນນີ້ ພຣະຜູ້ເປັນເຈົ້າຈະຊົງມອບເຈົ້າໄວ້ໃນອຳນາດຂອງຂ້ອຍ ເຈົ້າຈະຜ່າຍແພ້ຂ້ອຍ ແລະຂ້ອຍຈະຕັດຫົວເຈົ້າອອກ ສ່ວນສົບຂອງທະຫານຟີລິສຕິນ ຂ້ອຍຈະເອົາໃຫ້ນົກແລະສັດກິນ ແລ້ວທົ່ວທັງໂລກຈະຮູ້ຈັກວ່າອິສຣາເອນມີພຣະເຈົ້າ
47 ແລະທຸກໆຄົນທີ່ຢູ່ໃນທີ່ນີ້ຈະເຫັນວ່າ ພຣະອົງບໍ່ຊົງຕ້ອງການດາບ ຫລືຫອກ ເພື່ອຊ່ອຍໃຫ້ໄພ່ພົນຂອງພຣະອົງພົ້ນພັຍ ພຣະອົງຊົງເປັນຜູ້ຊະນະໃນສະໜາມຮົບ ແລະພຣະອົງຈະຊົງມອບພວກເຈົ້າທຸກຄົນໄວ້ໃນອຳນາດຂອງພວກຂ້ອຍ”
48 ສ່ວນໂກລິອາດກໍຍ່າງມຸ່ງໜ້າເຂົ້າມາຫາດາວິດອີກ ດາວິດກໍແລ່ນເຂົ້າໄປໃນເສັ້ນທາງສນາມຮົບຂອງຊາວຟີລິສຕິນເພື່ອຕໍ່ສູ້ກັບເຂົາຢ່າງວ່ອງໄວ
49 ດາວິດຈັບເອົາຫີນໃນຖົງອອກມາ ແລ້ວຍິງໃສ່ໂກລິອາດ ກ້ອນຫີນນັ້ນໄດ້ຖືກໜ້າຜາກຂອງເຂົາ ເຮັດໃຫ້ກະໂຫລກຫົວຂອງເຂົາແຕກລົ້ມຄວ່ຳໜ້າລົງດິນ
50 ດາວິດໄດ້ຊະນະ ແລະຂ້າໂກລິອາດດ້ວຍກະຖຸນ ແລະກ້ອນຫີນພຽງກ້ອນດຽວໂດຍບໍ່ໄດ້ໃຊ້ດາບ
51 ແລ້ວດາວິດກໍແລ່ນເຂົ້າໄປຢືນຢຽບເທິງໂຕເຂົາ ຖອດເອົາດາບຂອງໂກລິອາດອອກຈາກຟັກ ແລະຕັດຫົວເຂົາເມື່ອຟີລິສຕິນເຫັນພວກເກັ່ງກ້າຂອງຕົນຕາຍ ພວກເຂົາກໍພາກັນແລ່ນປົບໜີ
52 ຝ່າຍທະຫານອິສຣາເອນ ແລະທະຫານຢູດາກໍຮ້ອງໂຮ່ ແລ່ນຕິດຕາມພວກເຂົາໄປ ຈົນຮອດເມືອງກາດ ແລະຮອດປະຕູເມືອງເອກໂຣນ ພວກຟີລິສຕິນທີ່ບາດເຈັບໄດ້ລົ້ມຕາຍຕາມຫົນທາງຊາອາຣາອີມ ທີ່ໄປເຖິງເມືອງກາດ ແລະເມືອງເອກໂຣນ
53 ເມື່ອພວກອິສຣາເອນກັບຄືນມາຈາກການໄລ່ຕິດຕາມຊາວຟີລິສຕິນ ພວກເຂົາກໍມາຍຶດເອົາເຄື່ອງຂອງໃນຄ້າຍພັກຊາວຟີລິສຕິນໄປ
54 ສ່ວນດາວິດກໍຖືເອົາຫົວໂກລິອາດໄປນະຄອນເຢຣູຊາເລັມ ແຕ່ວ່າອາວຸດຂອງໂກລິອາດເຂົາໄດ້ເອົາໄວ້ໃນຕູບຜ້າເຕັນຂອງເຂົາເອງ
55 ເມື່ອຊາອູນເຫັນດາວິດອອກໄປຕໍ່ສູ້ໂກລິອາດ ພຣະອົງຈຶ່ງຖາມອັບເນີ ຜູ້ບັນຊາການທະຫານຂອງພຣະອົງວ່າ, “ອັບເນີ ເດັກໜຸ່ມຄົນນີ້ແມ່ນໃຜ” ອັບເນີທູນຕອບວ່າ, “ຂ້າແດ່ພຣະອົງ ຂ້ານ້ອຍບໍ່ຮູ້ຈັກ”
56 ຊາອູນຈຶ່ງເວົ້າວ່າ, “ອອກໄປເບິ່ງດູ ເດັກໜຸ່ມຄົນນັ້ນເປັນລູກຂອງໃຜ”
57 ເມື່ອດາວິດກັບມາຄ້າຍພັກ ຫລັງຈາກໄດ້ຂ້າໂກລິອາດແລ້ວ ອັບເນີກໍນຳເຂົາໄປເຝົ້າຊາອູນ ແລະດາວິດໄດ້ຖືຫົວຂອງໂກລິອາດໄປນຳດ້ວຍ
58 ຊາອູນຖາມເຂົາວ່າ, “ລູກເອີຍ ເຈົ້າລູກໃຜ” ດາວິດທູນຕອບວ່າ, “ຂ້ານ້ອຍເປັນລູກຊາຍຂອງເຈສຊີ ຂ້າໃຊ້ຂອງພຣະອົງທີ່ເມືອງເບັດເລເຮັມ”

### Jonathan's Covenant with David

1 ເມື່ອຊາອູນ ແລະດາວິດໄດ້ສົນທະນາປາໄສກັນແລ້ວໆ ໂຢນາທານບຸດຊາຍຂອງຊາອູນ ກໍເກີດມີຄວາມນິຍົມ
ຊົມຊອບດາວິດຫລາຍ ແລະກໍມີຄວາມຮັກແພງເຂົາຫລາຍອີກ
2 ຕັ້ງແຕ່ວັນນັ້ນມາ ຊາອູນກໍເອົາດາວິດໄປຢູ່ນຳ ແລະບໍ່ໄດ້ໃຫ້ກັບຄືນເມືອບ້ານເລີຍ
3 ຍ້ອນໂຢນາທານຮັກແພງດາວິດຫລາຍ ເຂົາຈຶ່ງສາບານເປັນເພື່ອນທີ່ດີກັບດາວິດຕລອດໄປ
4 ໂຢນາທານໄດ້ແກ້ເສື້ອຊັ້ນນອກຂອງຕົນເອງໃຫ້ດາວິດພ້ອມທັງເຄື່ອງຮົບ ດາບ ຄັນທະນູ ແລະສາຍຮັດ
5 ຍ້ອນດາວິດໄດ້ເຮັດຫລ້ອນຫນ້າທີ່ທຸກຢ່າງທີ່ຊາອູນໄດ້ສັ່ງເຂົາອອກໄປປະຕິບັດນັ້ນ ຊາອູນຈຶ່ງແຕ່ງຕັ້ງໃຫ້ເຂົາ
ເປັນນາຍທະຫານໃນກອງທັບຂອງພຣະອົງ ນາຍແລະພົນທະຫານທຸກຄົນຂອງຊາອູນກໍເຫັນດີນຳ

### ຊາອູນຄິດອິດສາດາວິດ

6 ເມື່ອພວກທະຫານກັບຄືນມາ ແລະຫລັງຈາກດາວິດກັບມາແຕ່ຂ້າໂກລີອາດແລ້ວ ພວກຜູ້ຍິງຈາກຫລາຍຫົວ
ເມືອງໃນອິສຣາເອນກໍພາກັນຮ້ອງເພງອັນມ່ວນຊື່ນ ພ້ອມທັງຟ້ອນ ຕີກອງ ແລະດີດພິນ
7 ໃນໂອກາດສເລີມສລອງຄັ້ງນີ້ ພວກຜູ້ຍິງໄດ້ຮ້ອງເພງວ່າ, "ຊາອູນໄດ້ຂ້າຫລາຍພັນຄົນ ແຕ່ດາວິດໄດ້ຂ້າຫລາຍ
ຫມື່ນຄົນ"
8 ສ່ວນຊາອູນກໍບໍ່ພໍໃຈທີ່ໄດ້ຍິນດັ່ງນີ້ ພຣະອົງຈຶ່ງຊົງພຣະພິໂຣດ ແລະເວົ້າວ່າ, "ເຮົາເສັຽໃຈຫລາຍທີ່ມີຄົນເວົ້າວ່າ
ດາວິດໄດ້ຂ້າຫລາຍຫມື່ນຄົນ ແຕ່ເຮົາໄດ້ຂ້າຫລາຍພັນຄົນເທົ່ານັ້ນ ດາວິດເຫລືອພຽງສິ່ງດຽວຄືຍັງບໍ່ທັນໄດ້
ເປັນກະສັດເທົ່ານັ້ນ"
9 ນັບແຕ່ນັ້ນມາ ຊາອູນກໍອິດສາດາວິດ

### Saul Tries to Kill David

10 ວັນຕໍ່ມາ ວິນຍານຊົ່ວທີ່ພຣະຜູ້ເປັນເຈົ້າສົ່ງມາກໍເຂົ້າສິງຊາອູນຢູ່ໃນພຣະຣາຊວັງ ທ່ານໄດ້ເວົ້າລະເມີເຫມືອນ
ຄົນເປັນບ້າ ສ່ວນດາວິດກໍດີດພິນດັ່ງທີ່ເຄີຍໄດ້ປະຕິບັດມາທຸກວັນ
11 ເວລານັ້ນ ຊາອູນຖືຫອກຢູ່ ຊາອູນເວົ້າກັບຕົວເອງວ່າ, "ກູຈະແທງມັນໃຫ້ຕາຍຕິດກັບຝາ" ແລ້ວພຣະອົງກໍຊັດຫ
ອກໃສ່ດາວິດສອງເທື່ອ ແຕ່ດາວິດຫລົບຫລີກທັນທຸກເທື່ອ
12 ຊາອູນເອງກໍຢ້ານດາວິດ ເພາະພຣະຜູ້ເປັນເຈົ້າຊົງໄດ້ສະຖິດຢູ່ກັບທ່ານ ແຕ່ບໍ່ໄດ້ຊົງສະຖິດຢູ່ກັບພຣະອົງ
13 ຊາອູນໄດ້ສົ່ງດາວິດຫນີໂດຍແຕ່ງຕັ້ງໃຫ້ທ່ານເປັນຜູ້ບັງຄັບບັນຊາທະຫານພັນຄົນ ດາວິດໄດ້ນຳຫນ້າທະຫາ
ນຂອງທ່ານອອກສູ່ສະຫນາມຮົບ
14 ທ່ານໄດ້ເຮັດຫລ້ອນຫນ້າທີ່ທຸກຢ່າງ ກໍເພາະວ່າພຣະຜູ້ເປັນເຈົ້າຊົງສະຖິດຢູ່ກັບທ່ານ
15 ຊາອູນໄດ້ສັງເກດເຫັນດາວິດເຮັດວຽກຫລ້ອນຫນ້າທີ່ທຸກຢ່າງ ພຣະອົງຈຶ່ງເກີດມີຄວາມຢ້ານກົວທ່ານຫລາຍຂຶ້ນ
16 ແຕ່ວ່າ ທຸກໆຄົນໃນອິສຣາເອນ ແລະຢູດາຮັກດາວິດ ເພາະວ່າທ່ານເປັນຜູ້ນຳທີ່ສາມາດ ແລະເຮັດວຽກຫລ້ອນ
ຫນ້າທີ່ທຸກຢ່າງ

### ດາວິດແຕ່ງງານກັບພຣະຣາຊທິດາຂອງຊາອູນ

### David Marries Michal

17 ຕໍ່ມາ ຊາອູນໄດ້ເວົ້າຕໍ່ດາວິດວ່າ, "ນີ້ເດ ເມຣາບລູກສາວກົກຂອງເຮົາ ເຮົາຈະໃຫ້ເຈົ້າແຕ່ງງານກັບນາງ ແຕ່ເຈົ້າ
ຕ້ອງຮັບໃຊ້ເຮົາຢ່າງທະຫານທີ່ເກັ່ງກ້າ ແລະສັດຊື່ໃນການສູ້ຮົບເພື່ອພຣະຜູ້ເປັນເຈົ້າ" ຊາອູນຄິດວ່າດ້ວຍວິທີນີ້
ພຣະອົງຈຶ່ງຈະບໍ່ເປັນຜູ້ຂ້າດາວິດດ້ວຍຕົນເອງ ແຕ່ຈະຕ້ອງແມ່ນພວກຟີລິສຕິນເປັນຜູ້ຂ້າ
18 ດາວິດທູນຕອບວ່າ, "ຂ້ານ້ອຍ ແລະຄອບຄົວພໍ່ຂອງຂ້ານ້ອຍບໍ່ມີຄວາມສຳຄັນຫຍັງພໍທີ່ຈະກາຍມາເປັນລູກ
ເຂີຍຂອງພຣະອົງ"

19 ຕໍ່ມາເມື່ອເຖິງເວລາທີ່ຈະຍົກເມຣາບໃຫ້ດາວິດ ພຣະອົງກໍຊົງປ່ຽນພຣະທັຍເສັຽໂດຍໄດ້ຍົກເມຣາບໃຫ້ຊາຍຄົນ
ນຶ່ງຊື່ ອາດຣີເອນ ຊາວບ້ານເມໂຮລາ
20 ແຕ່ວ່າ ນາງມີຄານບຸດສາວອີກຄົນນຶ່ງຂອງຊາອູນເກີດມີຄວາມຮັກຕໍ່ດາວິດ ມີຄົນເອົາເຣື່ອງໄປທູນຊາອູນ ເມື່ອ
ຊາອູນຮູ້ເຣື່ອງກໍດີໃຈ
21 ພຣະອົງຈຶ່ງເວົ້າກັບຕົນເອງວ່າ, “ເຮົາຈະຕ້ອງຍົກມີຄານນີ້ໃຫ້ດາວິດ ເພື່ອຈະໃຊ້ນາງດັກຈັບດາວິດ
ໃຫ້ພວກຟີລິສຕິນຂ້າ” ດັ່ງນັ້ນ ຊາອູນຈຶ່ງເວົ້າກັບດາວິດເປັນຄັ້ງທີສອງວ່າ, “ເຈົ້າຈະເປັນລູກເຂີຍຂອງເຮົາ”
22 ພຣະອົງໄດ້ສັ່ງໃຫ້ນາຍທະຫານຂອງພຣະອົງບອກກັບດາວິດເປັນທາງສ່ວນຕົວວ່າ, “ເຈົ້າຊີວິດພໍພຣະທັຍໃນ
ຕົວເຈົ້າ ແລະນາຍທະຫານທຸກຄົນກໍນິຍົມຊົມຊອບເຈົ້າ ດຽວນີ້ ເປັນໂອກາດດີສຳລັບເຈົ້າ ເຈົ້າຈະຕ້ອງແຕ່ງ
ງານກັບພຣະຣາຊທິດາຂອງພຣະອົງ”
23 ດັ່ງນັ້ນ ພວກນາຍທະຫານຈຶ່ງເວົ້າກັບດາວິດ ແລະທ່ານກໍຕອບວ່າ, “ມັນເປັນກຽດອັນສູງສົ່ງສຳລັບຄົນທຸກຄົນ
ຍາກທີ່ບໍ່ມີຄວາມສຳຄັນຫຍັງ ຊຶ່ງຈະຕ້ອງກາຍມາເປັນລູກເຂີຍຂອງເຈົ້າຊີວິດ”
24 ແລ້ວນາຍທະຫານໄດ້ເລົ່າຄຳທີ່ດາວິດເວົ້ານັ້ນໃຫ້ຊາອູນຟັງ
25 ຊາອູນຈຶ່ງອອກຄຳສັ່ງໃຫ້ເຂົາໄປບອກດາວິດວ່າ, “ເຈົ້າຊີວິດບໍ່ຕ້ອງການຄ່າແກ່ວສິນດອງຫຍັງຫມົດຈາກເຈົ້າ ພ
ຣະອົງຕ້ອງການແຕ່ຫນັງຫຸ້ມປາຍອະວັຍະວະລັບຂອງຄົນຟີລິສຕິນຮ້ອຍຄົນ ເພື່ອເປັນການແກ້ແຄ້ນສັດຕຣູ
ຂອງພຣະອົງເທົ່ານັ້ນ” ນີ້ຄືແຜນການທີ່ຊາອູນຢາກໃຫ້ພວກຟີລິສຕິນຂ້າດາວິດ
26 ຝ່າຍທະຫານຂອງຊາອູນກໍຣາຍງານຕໍ່ດາວິດຕາມທີ່ຊາອູນໄດ້ເວົ້າ ແລະດາວິດກໍມີຄວາມປິຕິຍິນດີທີ່ມີຊ່ອງ
ທາງຈະໄດ້ມາເປັນລູກເຂີຍເຈົ້າຊີວິດ ກ່ອນເວລາທີ່ກຳນົດໄວ້ຈະຫມົດໄປ
27 ດາວິດ ແລະທະຫານຂອງທ່ານກໍຂ້າພວກຟີລິສຕິນຕາຍນຶ່ງຮ້ອຍຄົນ ທ່ານໄດ້ເອົາຫນັງຫຸ້ມປາຍອະວັຍະວະລັບ
ຂອງພວກເຂົາໃຫ້ແກ່ເຈົ້າຊີວິດ ແລະເອົາອອກມານັບໃຫ້ຊາອູນເບິ່ງຈົນຫມົດ ເພື່ອວ່າທ່ານຈະໄດ້ກາຍເປັນລູກ
ເຂີຍຂອງພຣະອົງ ດັ່ງນັ້ນຊາອູນຈຶ່ງມອບນາງມີຄານພຣະຣາຊທິດາຂອງພຣະອົງໃຫ້ແຕ່ງງາກັບດາວິດ
28 ເມື່ອຊາອູນໄດ້ເຫັນຢ່າງຄັກແນ່ແລ້ວວ່າ ພຣະຜູ້ເປັນເຈົ້າຊົງສະຖິດຢູ່ກັບດາວິດ ແລະມີຄານພຣະຣາຊທິ
ດາຂອງພຣະອົງກໍຮັກເຂົາ
29 ດັ່ງນັ້ນ ພຣະອົງຈຶ່ງຢ້ານດາວິດຫລາຍຂຶ້ນ ແລະຕັ້ງເປັນສັດຕຣູຂອງທ່ານຈົນຕລອດຊົ່ວຊີວິດຂອງພຣະອົງ
30 ແຕ່ລະເທື່ອທີ່ກອງທັບຂອງພວກຟີລິສຕິນໄດ້ມາຕໍ່ສູ້ດາວິດກໍຕີຊະນະຫລາຍກວ່ານາຍທະຫານຄົນອື່ນໆຂອງ
ຊາອູນ ດັ່ງນັ້ນດາວິດຈຶ່ງມີຊື່ສຽງໂດ່ງດັງຫລາຍ

## 19 ຊາອູນຕາມຮົບກວນດາວິດ

Jonathan Intercedes for David

1 ຊາອູນໄດ້ບອກໂຢນາທານບຸດຊາຍຂອງພຣະອົງ ແລະພວກຂ້າຣາຊການເຖິງແຜນການຂ້າດາວິດ ແຕ່ໂຢ
ນາທານຮັກດາວິດຫລາຍ
2 ທ່ານຈຶ່ງມາບອກດາວິດວ່າ, “ພໍ່ຂ້ອຍພຍາຍາມຈະຂ້າເຈົ້າຢູ່ ໃນມື້ອື່ນເຊົ້າຈົ່ງລະວັງຕົວໃຫ້ດີ ໃຫ້ເຈົ້າໄປລີ້ຕົວຢູ່
ໃນບ່ອນເລິກລັບ
3 ສ່ວນຂ້ອຍຈະໄປຢືນຄຽງຂ້າງພໍ່ຂອງຂ້ອຍໃນທົ່ງນາບ່ອນທີ່ລີ້ຕົວຢູ່ນັ້ນ ຂ້ອຍຈະກາບທູນເຣື່ອງຂອງເຈົ້າຕໍ່ພໍ່
ຂອງຂ້ອຍ ຖ້າວ່າ ຂ້ອຍຮູ້ເຣື່ອງໃດແລ້ວ ຂ້ອຍຈະມາບອກໃຫ້ເຈົ້າຮູ້ຈັກໂລດ”

4 ໂຢນາທານໄດ້ກ່າວສັຣເສີນດາວິດຕໍ່ຊາອູນວ່າ, “ສະເດັດພໍ່ຂ້ານ້ອຍ ຂໍຢ່າທຳຮ້າຍດາວິດຂ້າໃຊ້ຂອງພໍ່ເລີຍ ເພາະດາວິດບໍ່ໄດ້ເຮັດສິ່ງໃດຜິດຈັກເທື່ອ ແຕ່ກົງກັນຂ້າມທຸກສິ່ງທີ່ເຂົາເຮັດນັ້ນເປັນຜົນດີອັນຍິ່ງໃຫຍ່ແກ່ສະເດັດພໍ່

5 ເຂົາໄດ້ສ່ຽງຊີວິດຕົນເອງຂ້າໂກລິອາດ ແລະພຣະຜູ້ເປັນເຈົ້າກໍຊົງນຳເອົາໄຊຊະນະອັນຍິ່ງໃຫຍ່ມາໃຫ້ພວກອິສຣາເອນ ພໍ່ໄດ້ເຫັນການນີ້ ແລະພໍ່ກໍດີໃຈ ແລ້ວເປັນຫຍັງສະເດັດພໍ່ຈຶ່ງເຮັດຜິດຕໍ່ຜູ້ທີ່ບໍ່ມີຄວາມຜິດໂດຍຢາກຂ້າເຂົາ ໂດຍບໍ່ມີເຫດຜົນຫຍັງຫມົດ”

6 ເມື່ອຊາອູນໄດ້ຍິນໂຢນາທານເວົ້າ ທ່ານກໍສາບານໃນພຣະນາມພຣະຜູ້ເປັນເຈົ້າວ່າດາວິດຈະບໍ່ຖືກຂ້າ

7 ໂຢນາທານຈຶ່ງເອີ້ນດາວິດມາ ແລະບອກທຸກສິ່ງແກ່ເຂົາ ແລ້ວກໍນຳດາວິດເຂົ້າເຝົ້າຊາອູນ ແລ້ວດາວິດກໍຢູ່ຮັບໃຊ້ຊາອູນເຫມືອນດັ່ງແຕ່ກ່ອນມາ

8 ຕໍ່ມາ ສົງຄາມກັບພວກຟີລິສຕິນໄດ້ລະເບີດຂຶ້ນ ດາວິດໄດ້ຕໍ່ສູ້ກັບພວກສັດຕຣູຈົນພວກເຂົາໄດ້ຜ່າຍແພ້ໄປຢ່າງສິ້ນເຊີງ ແລ້ວພວກເຂົາກໍແຕກຫນີໄປ

9 ຕໍ່ມາ ວິນຍານຊົ່ວທີ່ພຣະຜູ້ເປັນເຈົ້າສົ່ງມາໄດ້ເຂົ້າສິງຊາອູນອີກ ເມື່ອຊາອູນກຳລັງນັ່ງຢູ່ໃນພຣະຣາຊວັງພ້ອມທັງຖືຫອກຢູ່ໃນມື ສ່ວນດາວິດກໍນັ່ງດີດພິນຢູ່ທີ່ນັ້ນ

10 ຊາອູນພຍາຍາມເອົາຫອກແທງດາວິດເຂົ້າຕິດກັບຝາ ແຕ່ດາວິດຫລົບຫລີກທັນ ຫອກຈຶ່ງເຂົ້າສຽບກັບຝາ ແລ້ວດາວິດກໍແລ່ນປົບຫນີເອົາຕົວລອດ

11 ໃນຕອນກາງຄືນຂອງວັນດຽວກັນນັ້ນ ຊາອູນໄດ້ສົ່ງທະຫານຂອງພຣະອົງບາງຄົນໄປເຝົ້າຈອບ ນອກເຮືອນຂອງດາວິດ ເພື່ອຂ້າທ່ານໃນມື້ອື່ນເຊົ້າ ນາງມີຄານເມັຽຂອງດາວິດຈຶ່ງເຕືອນວ່າ, “ຖ້າເຈົ້າບໍ່ຫນີໄປໃນຕອນກາງຄືນນີ້ ມື້ອື່ນເຊົ້າເຈົ້າຈະຕ້ອງຖືກຂ້າ

12 ນາງໄດ້ຢ່ອນດາວິດລົງທາງປ່ອງຢ້ຽມ ແລະທ່ານກໍແລ່ນຫນີເອົາຕົວລອດ

13 ແລ້ວນາງໄດ້ເອົາຮູບເຄົາຣົບປະຈຳເຮືອນວາງລົງໄວ້ເທິງຕຽງ ເອົາຫມອນທີ່ເຮັດດ້ວຍຂົນແກະຫມູນເທິງຫົວແລ້ວເອົາຜ້າຫົ່ມປົກມັນໄວ້

14 ເມື່ອທະຫານຂອງຊາອູນເຂົ້າໄປຈັບດາວິດ ມີຄານຈຶ່ງບອກພວກເຂົາວ່າດາວິດໄຂ້

15 ແຕ່ຊາອູນບອກພວກເຂົາກັບຄືນໄປຫາດາວິດອີກພ້ອມທັງສັ່ງວ່າ, “ຈົ່ງຫາມດາວິດໃສ່ຕຽງມານີ້ ຂ້ອຍຈະຂ້າເຂົາເສັຽ”

16 ພວກເຂົາຈຶ່ງເຂົ້າໄປໃນເຮືອນ ແລະໄດ້ພົບຮູບເຄົາຣົບປະຈຳເຮືອນຢູ່ເທິງຕຽງ ແລະມີຫມອນທີ່ເຮັດດ້ວຍຂົນແກະຫມູນຫົວຂອງມັນຢູ່

17 ຊາອູນຖາມມີຄານວ່າ, “ເປັນຫຍັງລູກຈຶ່ງຫລອກລວງພໍ່ຢ່າງນີ້ ແລະປ່ອຍໃຫ້ສັດຕຣູຂອງພໍ່ຫນີໄປ?” ນາງຕອບວ່າ, “ເຂົາເວົ້າວ່າ ຖ້າຂ້ານ້ອຍບໍ່ຊ່ອຍເຫລືອເຂົາໃຫ້ຫນີໄປ ເຂົາຈະຂ້າຂ້ານ້ອຍ”

David Joins Samuel in Ramah

18 ດາວິດໄດ້ຫນີໄປຫາຊາມູເອນທີ່ເມືອງຣາມາ ແລະໄດ້ບອກທຸກສິ່ງທີ່ຊາອູນໄດ້ເຮັດກັບເຂົາໃຫ້ທ່ານຟັງ ແລ້ວຊາມູເອນກັບດາວິດກໍພາກັນໄປພັກຢູ່ບ້ານນາໂຢດ

19 ຕໍ່ມາມີຄົນໄປບອກຊາອູນວ່າ ດາວິດຢູ່ທີ່ບ້ານນາໂຢດໃນເມືອງຣາມາ ຊາອູນຈຶ່ງສົ່ງຄົນອອກໄປຈັບເຂົາ

20 ເມື່ອໄປຮອດພວກເຂົາໄດ້ເຫັນກຸ່ມຜູ້ປະກາດພຣະທັມກຳລັງທຳນວາຍຢູ່ ຊຶ່ງມີຊາມູເອນເປັນຜູ້ນຳຫນ້າ ພຣະວິນຍານຂອງ  ພຣະເຈົ້າກໍເຂົ້າຢູ່ໃນທະຫານຂອງຊາອູນ ແລ້ວພວກເຂົາກໍທຳນວາຍຄືກັນ

21 ເມື່ອຊາອູນໄດ້ຍິນຂ່າວດັ່ງນັ້ນ ພຣະອົງກໍສົ່ງຜູ້ນຳຂ່າວອອກໄປຕື່ມອີກ ພວກເຂົາເຫລົ່ານັ້ນກໍເຂົ້າຮ່ວມທຳນວາຍຄືກັນ ພຣະອົງໄດ້ສົ່ງຜູ້ນຳຂ່າວອອກໄປອີກເປັນຄັ້ງທີສາມ ແລະເຫດການກໍເກີດຂຶ້ນກັບພວກເຂົາເຊັ່ນເດີມ ແລ້ວພຣະອົງຈຶ່ງອອກໄປເມືອງຣາມາ

22 ເມື່ອໄປຮອດນໍ້າສ້າງໃຫຍ່ທີ່ເຊກູ ພຣະອົງກໍຖາມຫາຊາມູເອນກັບດາວິດ ແລະພຣະອົງກໍໄດ້ຄໍາຕອບວ່າ ພວກ
ເຂົາຢູ່ທີ່ບ້ານນາໂຢດ
23 ພຣະອົງຈຶ່ງເດີນທາງໄປທີ່ນັ້ນຍັງນາໂຢດໃນເມືອງຣາມາ ແລະພຣະວິນຍານຂອງພຣະເຈົ້າໄດ້ສະຖິດຢູ່ກັບພ
ຣະອົງຄືກັນ  ພຣະອົງໄດ້ທໍານວາຍໄປສຸດທາງຈົນເຖິງນາໂຢດໃນເມືອງຣາມາ
24 ພຣະອົງແກ້ເຄື່ອງນຸ່ງອອກ ແລະທໍານວາຍຕໍ່ໜ້າຊາມູເອນ ແລ້ວນອນເປືອຍກາຍຢູ່ຕລອດວັນຕລອດຄືນ ຄໍາ
ເວົ້າໄດ້ຊ່າລືໄປວ່າຊາອູນໄດ້ກາຍເປັນຜູ້ປະກາດພຣະທັມໄປແລ້ວ

## 20 ໂຢນາທານຊ່ວຍເຫລືອດາວິດ

The Friendship of David and Jonathan

1 ຕໍ່ມາ ດາວິດໄດ້ໜີຈາກນາໂຢດ ເມືອງຣາມາໄປຫາໂຢນາທານແລະເວົ້າກັບເຂົາວ່າ, "ເປັນຫຍັງສະເດັດພໍ່
ຂອງເຈົ້າຈຶ່ງ ຢາກຂ້າຂ້າພະເຈົ້າ ຂ້າພະເຈົ້າໄດ້ເຮັດຫຍັງຜິດບໍ"
2 ໂຢນາທານຈຶ່ງຕອບວ່າ, "ບໍ່ດອກ ສະເດັດພໍ່ຂອງເຮົາຈະບໍ່ຂ້າເຈົ້າ ສະເດັດພໍ່ຂອງເຮົາໄດ້ບອກໃຫ້ເຮົາຮູ້ທຸກໆ
ສິ່ງທີ່ທ່ານຈະທໍາ ຈະເປັນສິ່ງສໍາຄັນຫລືບໍ່ກໍຕາມ ທ່ານບໍ່ໄດ້ປິດບັງຫຍັງເຮົາເລີຍ"
3 ແຕ່ດາວິດຕອບວ່າ, "ສະເດັດພໍ່ຂອງທ່ານຮູ້ດີວ່າ ທ່ານນິຍົມຊົມຊອບເຮົາຫລາຍ ພຣະອົງຈະບໍ່ບອກເຖິງແຜນ
ການທີ່ພຣະອົງຈະທໍາໃຫ້ທ່ານຮູ້ນໍາດອກ ເພື່ອຈະບໍ່ໃຫ້ທ່ານເສົ້າເສັຽໃຈ ເຮົາຂໍສາບານໃນນາມພຣະຜູ້ເປັນເຈົ້າ
ຜູ້ຊົງພຣະຊົນຢູ່ ແລະຕໍ່ໜ້າທ່ານວ່າ ຄວາມຕາຍຢູ່ໃກ້ເຮົາທີ່ສຸດ"
4 ໂຢນາທານຕອບວ່າ, "ເຮົາຈະທໍາທຸກສິ່ງທີ່ທ່ານຕ້ອງການ"
5 ດາວິດຕອບວ່າ, "ມື້ອື່ນເປັນວັນສລອງເດືອນອອກໃໝ່ ເຮົາຈໍາເປັນຈະຕ້ອງຮັບປະທານຮ່ວມໂຕະກັບສະເດັດ
ພໍ່ຂອງທ່ານ ແຕ່ວ່າ ຂໍໃຫ້ທ່ານອະນຸຍາດໃຫ້ເຮົາໄປລີ້ຢູ່ໃນທົ່ງນາຈົນເຖິງຕອນຄໍ່າຂອງມື້ຮື
6 ຖ້າສະເດັດພໍ່ຂອງທ່ານເຫັນວ່າເຮົາບໍ່ຢູ່ທີ່ນັ້ນ ຂໍໃຫ້ທ່ານບອກພຣະອົງວ່າ ເຮົາໄດ້ຂໍອະນຸຍາດນໍາທ່ານເມືອ
ເຮືອນທີ່ເມືອງເບັດເລເຮັມ ເພາະວ່າເປັນຍາມທີ່ຄອບຄົວຂອງເຮົາທັງໝົດຖວາຍເຄື່ອງບູຊາປະຈໍາປີ
7 ຖ້າພຣະອົງເວົ້າວ່າ "ໄດ້ແລ້ວ ຂ້ອຍກໍຈະປອດພັຍ ແຕ່ຖ້າພຣະອົງຮ້າຍ ທ່ານກໍຈະເຫັນວ່າພຣະອົງຍັງຄິດອາ
ຄາດບາດໝາງເຮົາຢູ່
8 ຈົ່ງກະຣຸນາທໍາກັບເຮົາດ້ວຍໄມຕຣີຈິດອັນດີເທີນ ແລະຈົ່ງຮັກສາຄໍາໝັ້ນສັນຍາອັນສັກສິດທີ່ເຈົ້າໄດ້ມີຕໍ່ເຮົາ
ແຕ່ຖ້າເຮົາເປັນຄົນຜິດ ທ່ານຈົ່ງຂ້າເຮົາເສັຽ ບໍ່ຕ້ອງໃຫ້ສະເດັດພໍ່ຂອງທ່ານລົງມືດອກ"
9 ໂຢນາທານຕອບວ່າ, "ຢ່າຄິດເຖິງເຣື່ອງຢ່າງນັ້ນ ຖ້າເຮົາຮູ້ແນ່ວ່າ ສະເດັດພໍ່ຂອງເຮົາຍັງບໍ່ສິ້ນສຸດທີ່ຈະທໍາອັນ
ຕະລາຍຕໍ່ເຈົ້າ ເຮົາຈະຕ້ອງບອກໃຫ້ທ່ານຮູ້ຈັກ"
10 ແລ້ວດາວິດຈຶ່ງຖາມຂຶ້ນວ່າ, "ຖ້າສະເດັດພໍ່ຂອງທ່ານຮ້າຍ ໃຜຈະມາບອກເຮົາ"
11 ໂຢນາທານຕອບວ່າ, "ໃຫ້ພວກເຮົາອອກໄປທີ່ທົ່ງນາ" ດັ່ງນັ້ນຈຶ່ງພາກັນອອກໄປທີ່ທົ່ງນາ
12 ໂຢນາທານໄດ້ເວົ້າກັບດາວິດວ່າ, "ຂໍໃຫ້ພຣະຜູ້ເປັນເຈົ້າຂອງພວກອິສຣາເອນ ຈົ່ງເປັນພຍານແກ່ພວກເຮົາ
ດ້ວຍ ມື້ອື່ນແລະໃນມື້ຕໍ່ໄປໃນເວລາດຽວກັນນີ້ ເຮົາຈະຖາມສະເດັດພໍ່ຂອງເຮົາ ຖ້າທ່ານເຈຕນາດີຕໍ່ເຈົ້າເຮົາ
ຈະບໍ່ສົ່ງຂ່າວມາຫາເຈົ້າ
13 ຖ້າຫາກວ່າທ່ານມີເຈຕນາຮ້າຍ ແຕ່ເຮົາບໍ່ສົ່ງຂ່າວມາຫາເຈົ້າ ເພື່ອໃຫ້ເຈົ້າໜີໄປ ຂໍໃຫ້ພຣະຜູ້ເປັນເຈົ້າຂ້ຽນຕີ
ເຮົາໃຫ້ຕາຍ ຂໍໃຫ້ພຣະອົງຊົງສະຖິດຢູ່ກັບເຈົ້າ ດັ່ງທີ່ພຣະອົງໄດ້ຊົງສະຖິດຢູ່ກັບສະເດັດພໍ່ຂອງເຮົາ
14 ແລະດຽວນີ້ ຖ້າເຮົາຍັງມີຊີວິດຢູ່ ຂໍໃຫ້ທ່ານຮັກສາຄໍາໝັ້ນສັນຍາອັນສັກສິດນີ້ໄວ້ ແລະໃຫ້ຊື່ສັດຕໍ່ເຮົາ

15 ແຕ່ວ່າຖ້າເຮົາຕາຍໄປ ຈົ່ງສະແດງເຖິງຄວາມເມດຕາກະຣຸນາຢ່າງດຽວກັນນີ້ຕໍ່ຄອບຄົວຂອງເຮົາຕລອດໄປ ເມື່ອໃດຫາກ ພຣະຜູ້ເປັນເຈົ້າໄດ້ທຳລາຍສັດຕຣູທັງໝົດຂອງເຈົ້າແລ້ວ

16 ຂໍໃຫ້ຄຳສັນຍາຂອງພວກເຮົາທີ່ມີຕໍ່ກັນຍັງຄົງຢູ່ ຖ້າວ່າເຈົ້າຜິດຄຳສັນຍາ ພຣະຜູ້ເປັນເຈົ້າຈະຊົງລົງໂທດເຈົ້າ”

17 ຕໍ່ມາອີກ ໂຢນາທານໄດ້ຂໍຮ້ອງໃຫ້ດາວິດສັນຍາວ່າ ໃຫ້ຮັກຕົນເພາະວ່າໂຢນາທານໄດ້ຮັກດາວິດຫລາຍ ເທົ່າກັບຊີວິດຂອງຕົນເອງ

18 ແລ້ວໂຢນາທານຈຶ່ງເວົ້າຕໍ່ດາວິດວ່າ, “ມື້ອື່ນເປັນວັນສລອງເດືອນອອກໃໝ່ ຖ້າວ່າເຈົ້າບໍ່ຢູ່ທີ່ນັ້ນ ສະເດັດພໍ່ທ່ານກໍຈະເຫັນ

19 ໃນວັນຕໍ່ໄປ ທ່ານກໍຈະເຫັນເຈົ້າຂາດອີກ ດັ່ງນັ້ນ ຈົ່ງໄປລີ້ຢູ່ບ່ອນທີ່ເຈົ້າໄດ້ລີ້ຢູ່ຫວ່າງແຕ່ກ່ອນນັ້ນ ແລະໃຫ້ລີ້ຢູ່ທາງຫລັງກອງຫີນ

20 ແລ້ວເຮົາຈະຍິງລູກທະນູສາມລູກໄປໃສ່ບ່ອນນັ້ນເໝືອນຍິງໃສ່ຈຸດໃດຈຸດນຶ່ງ

21 ຕໍ່ໄປເຮົາຈະບອກຊາຍໜຸ່ມຄົນໃຊ້ຂອງເຮົາໄປຊອກຫາລູກໜ້າທະນູນັ້ນມາ ແລະຖ້າເຮົາບອກເຂົາວ່າ, “ທີ່ນັ້ນເດ ລູກທະນູຢູ່ທາງນີ້ ເກັບເອົາແມ່ ກໍໝາຍຄວາມວ່າທ່ານປອດພັຍ ແລະອອກມາໄດ້ ເຮົາຂໍສາບານໃນພຣະນາມພຣະຜູ້ເປັນເຈົ້າວ່າ ທ່ານຈະບໍ່ເປັນອັນຕະລາຍແຕ່ຢ່າງໃດ

22 ແຕ່ຖ້າເຮົາບອກເຂົາວ່າ “ລູກໜ້າທະນູຢູ່ພຸ້ນ” ທ່ານຈົ່ງໜີໄປ ເພາະວ່າພຣະຜູ້ເປັນເຈົ້າເປັນຜູ້ໃຊ້ທ່ານໄປ

23 ສ່ວນຄຳໝັ້ນສັນຍາທີ່ພວກເຮົາໄດ້ມີຕໍ່ກັນນັ້ນ ພຣະຜູ້ເປັນເຈົ້າເປັນພຍານ ແລະທຳໃຫ້ພວກເຮົາຮັກສາມັນໄວ້ຕລອດໄປ”

24 ດັ່ງນັ້ນ ດາວິດຈຶ່ງໄປລີ້ຢູ່ໃນທົ່ງນາ ຝ່າຍເຈົ້າຊີວິດຊາອູນກໍສະເດັດມາຮັບປະທານອາຫານໃນວັນສລອງເດືອນອອກໃໝ່

25 ແລະກໍນັ່ງຢູ່ແປະກັບຝາຕາມທີ່ເຄີຍນັ່ງ ອັບເນີກໍນັ່ງຖັດຕໍ່ທ່ານໄປ ໂຢນາທານນັ່ງກົງກັນຂ້າມກັບທ່ານ ສ່ວນບ່ອນນັ່ງຂອງດາວິດນັ້ນຫວ່າງເປົ່າ

26 ໃນວັນນັ້ນ ຊາອູນບໍ່ໄດ້ເວົ້າຫຍັງໝົດ ເພາະທ່ານຄິດວ່າອາດມີບາງສິ່ງບາງຢ່າງເກີດຂຶ້ນໂດຍບໍ່ໄດ້ຄາດຝັນທີ່ທຳໃຫ້ດາວິດມີມົນທິນ

27 ວັນຕໍ່ມາ ເປັນວັນຫລັງຈາກເດືອນອອກໃໝ່ ບ່ອນຂອງດາວິດກໍຍັງຫວ່າງເປົ່າຢູ່ ຊາອູນຈຶ່ງຖາມໂຢນາທານວ່າ, “ເປັນຫຍັງມື້ວານນີ້ ແລະມື້ນີ້ດາວິດຈຶ່ງບໍ່ມາຮ່ວມຮັບປະທານອາຫານ”

28 ໂຢນາທານຕອບວ່າ, “ເຂົາຂໍອະນຸຍາດນຳລູກໄປເມືອງເບັດເລເຮັມ”

29 ເຂົາໄດ້ເວົ້າວ່າ “ອະນຸຍາດໃຫ້ເຮົາເທາະ ເພາະວ່າຄອບຄົວຂອງເຮົາໄດ້ສລອງງານຖວາຍບູຊາຢູ່ໃນເມືອງ ແລະພວກອ້າຍນ້ອງຂອງເຮົາກໍສັ່ງໃຫ້ເຮົາໄປທີ່ນັ້ນ ດັ່ງນັ້ນ ຖ້າເຈົ້າເປັນໝູ່ຂອງເຮົາຈົ່ງອະນຸຍາດໃຫ້ເຮົາໄປຫາພີ່ນ້ອງຂອງເຮົາສາ ດ້ວຍເຫດນີ້ແຫລະ ດາວິດຈຶ່ງບໍ່ໄດ້ມາຮ່ວມໂຕະນຳສະເດັດພໍ່”

30 ຊາອູນຈຶ່ງຮ້າຍໃຫ້ໂຢນາທານ ແລະເວົ້າຕໍ່ເຂົາວ່າ, “ລູກທໍຣະຍົດ ດຽວນີ້ເຮົາຮູ້ວ່າເຈົ້າເຂົ້າຂ້າງດາວິດ ແລະເຈົ້າກຳລັງທຳໃຫ້ເຈົ້າເອງກັບແມ່ເຈົ້າເສື່ອມເສັຽກຽດ

31 ຕລອດເວລາທີ່ດາວິດຍັງມີຊີວິດຢູ່ນີ້ ເຈົ້າຈະບໍ່ໄດ້ເປັນເຈົ້າຊີວິດຂອງປະເທດນີ້ຈັກເທື່ອ ດຽວນີ້ ຈົ່ງໄປນຳຕົວເຂົາມານີ້ ເຂົາຄວນຈະຕາຍ”

32 ໂຢນານທານເວົ້າຂຶ້ນວ່າ, “ເປັນຫຍັງເຂົາຈຶ່ງຄວນຈະຕາຍ ເຂົາໄດ້ທຳສິ່ງໃດຜິດ”

33 ໃນຂນະນັ້ນ ຊາອູນໄດ້ຖອດຫອກຂອງຕົນອອກເພື່ອຈະຂ້າໂຢນາທານ ໂຢນາທານຈຶ່ງຄິດພິຈາຣະນາໄດ້ວ່າ ບິດາຂອງຕົນຍັງບໍ່ຍຸດຕິທັມທີ່ຈະຂ້າດາວິດ

34 ດັ່ງນັ້ນ ເຂົາຈຶ່ງລຸກອອກຈາກໂຕະດ້ວຍຄວາມຮ້າຍ ແລະບໍ່ຍອມກິນຫຍັງເລີຍ ໃນວັນນັ້ນ ເປັນວັນທີສອງຂອງວັນສລອງເດືອນອອກໃໝ່ ເຂົາເສົ້າໂສກເສັຽໃຈຢ່າງໜັກໃນເລື່ອງນີ້ ເພາະບິດາຂອງເຂົາໄດ້ດູຖູກດາວິດ

35 ເຊົ້າວັນຕໍ່ມາ ໂຢນານທານກໍໄປພົບດາວິດຢູ່ທົ່ງນາ ຕາມທີ່ໄດ້ຕົກລົງກັນໄວ້ ເຂົາໄດ້ເອົາຊາຍຫນຸ່ມຜູ້ນຶ່ງໄປນຳ
36 ເຂົາເວົ້າກັບຊາຍຫນຸ່ມນັ້ນວ່າ, "ຈົ່ງໄປເກັບເອົາລູກຫນ້າທະນູທີ່ຂ້ອຍຈະຍິງໄປນີ້ ເດັກນັ້ນກໍແລ່ນໄປ ໂຢນາ
ທານຈຶ່ງຍິງທະນູໄປຕົກຂ້າງເຂົາ
37 ເມື່ອຊາຍຫນຸ່ມຜູ້ນັ້ນໄປຮອດບ່ອນລູກຫນ້າທະນູຕົກ ໂຢນາທານຈຶ່ງຮ້ອງໃສ່ເຂົາວ່າ, "ລູກທະນູຢູ່ພຸ້ນ ຢ່າຢືນຢູ່
ທີ່ນັ້ນຈົ່ງຟ້າວໄປແມ່"
38 ຊາຍຫນຸ່ມຄົນນັ້ນກໍໄປເກັບເອົາລູກທະນູແລ້ວກັບຄືນມາຫານາຍຂອງຕົນ ໂດຍບໍ່ຮູ້ຈັກຄວາມຫມາຍຫຍັງຫມົດ
39 ມີແຕ່ໂຢນາທານແລະດາວິດເທົ່ານັ້ນທີ່ຮູ້ຈັກ
40 ໂຢນາທານໄດ້ເອົາອາວຸດຂອງເຂົາໃຫ້ຊາຍຫນຸ່ມນັ້ນ ແລະບອກໃຫ້ເຂົາເອົາກັບຄືນເມືອໄວ້ໃນເມືອງ
41 ຫລັງຈາກຊາຍຫນຸ່ມຈາກໄປແລ້ວ ດາວິດກໍອອກມາຈາກບ່ອນລີ້ ກົ້ມຂາບລົງຕໍ່ຫນ້າໂຢນາທານສາມເທື່ອ ດາ
ວິດກັບໂຢນາທານກອດກັນທັງຮ້ອງທັງໄຫ້ ດາວິດມີຄວາມໂສກເສົ້າເສັຽໃຈຫລາຍ
42 ແລ້ວໂຢນາທານຈຶ່ງເວົ້າຕໍ່ດາວິດວ່າ, "ຂໍໃຫ້ພຣະຜູ້ເປັນເຈົ້າສະຖິດຢູ່ກັບທ່ານ ຂໍພຣະຜູ້ເປັນເຈົ້າຊົງເປັນພຍານ
ລະຫວ່າງເຈົ້າກັບຂ້ອຍ ແລະລະຫວ່າງເຊື້ອສາຍຂອງເຈົ້າກັບເຊື້ອສາຍຂອງຂ້ອຍ ວ່າຈະຮັກສາຄຳຫມັ້ນສັນຍາ
ອັນສັກສິດທີ່ເຮົາມີຕໍ່ກັນແລະກັນນີ້ໄວ້ຕລອດໄປ" ແລ້ວດາວິດກໍຈາກໄປ ສ່ວນໂຢນາທານກໍກັບຄືນເມືອໃນ
ເມືອງ

## 21 ດາວິດຫນີໄປຈາກຊາອູນ

David and Holy Bread

1 ແລ້ວດາວິດກໍມາຫາປະໂຣຫິດອາຮີເມເລກ ທີ່ເມືອງໂນບ ອາຮີເມເລກອອກມາຫາດາວິດຕົວສັ່ນຢູ່ເວົ້າກັບ
ທ່ານວ່າ, "ເປັນຫຍັງທ່ານຈຶ່ງມາຄົນດຽວ ແລະບໍ່ມີຜູ້ໃດມາກັບທ່ານ"
2 ດາວິດຈຶ່ງເວົ້າກັບປະໂຣຫິດອາຮີເມເລກວ່າ, "ເຈົ້າຊີວິດຊົງບັນຊາຂ້າພະເຈົ້າໃຫ້ທຳເຣື່ອງນຶ່ງ ຮັບສັ່ງແກ່ຂ້າພະ
ເຈົ້າວ່າ "ຢ່າບອກເຣື່ອງຊຶ່ງເຮົາໃຊ້ເຈົ້າໄປກະທຳນັ້ນແກ່ຜູ້ໃດໃຫ້ຮູ້ເລີຍ ແລະດ້ວຍເຣື່ອງຊຶ່ງເຮົາມອບຫມາຍແກ່
ເຈົ້ານັ້ນ" ຂ້າພະເຈົ້າໄດ້ນັດຫມາຍໄວ້ກັບພວກຄົນຫນຸ່ມໃນທີ່ແຫ່ງນຶ່ງ
3 ທ່ານມີຫຍັງຕິດມືຢູ່ແດ່ ຂໍເຂົ້າຈີ່ໃຫ້ແກ່ຂ້າພະເຈົ້າຈັກຫ້າກ້ອນ ຫລືສິ່ງໃດທີ່ມີຢູ່ທີ່ນີ້ກໍໄດ້"
4 ປະໂຣຫິດນັ້ນກໍຕອບດາວິດວ່າ, "ຂ້າພເຈົ້າບໍ່ມີເຂົ້າຈີ່ທຳມະດາເລີຍ ແຕ່ມີເຂົ້າຈີ່ບໍຣິສຸດ ຂໍແຕ່ຄົນຫນຸ່ມໄດ້ຢູ່
ຫ່າງໄກຈາກຜູ້ຍິງມາແລ້ວກໍແລ້ວກັນ"
5 ແລ້ວດາວິດກໍຕອບທ່ານປະໂຣຫິດວ່າ, "ທີ່ຈິງ ເມື່ອເຮົາທັງຫລາຍອອກໄປປະຕິບັດງານ ຜູ້ຍິງກໍຖືກັນໄວ້ໃຫ້
ຫ່າງໄກຈາກເຮົາຢ່າງທຸກຄັ້ງ ການເດີນທາງທຳມະດາກາຍຂອງຄົນຫນຸ່ມກໍບໍຣິສຸດຢູ່ແລ້ວ ຍິ່ງວັນນີ້ກາຍຂອງ
ເຮົາກໍຍິ່ງບໍຣິສຸດກວ່າ"
6 ດັ່ງນັ້ນປະໂຣຫິດຈຶ່ງມອບເຂົ້າຈີ່ໃຫ້ແກ່ດາວິດ ເພາະທີ່ນັ້ນບໍ່ມີເຂົ້າຈີ່ອື່ນນອກຈາກເຂົ້າຈີ່ທີ່ຕັ້ງຖວາຍ ຊຶ່ງເກັບມາ
ຈາກຫນ້າ ພຣະພັກພຣະເຈົ້າເພື່ອວາງເຂົ້າຈີ່ໃຫມ່ ໃນວັນທີ່ເກັບເຂົ້າຈີ່ເກົ່ານັ້ນອອກໄປ
7 ໃນວັນນັ້ນມີຊາຍຄົນນຶ່ງຢູ່ທີ່ນັ້ນເປັນຜູ້ຮັບໃຊ້ຂອງຊາອູນ ມີທຸຣະຕ້ອງເຝົ້າພຣະຜູ້ເປັນເຈົ້າຢູ່ ເຂົາຊື່ວ່າໂດເອກ
ຊາວເອໂດມເປັນຫົວຫນ້າຄົນລ້ຽງສັດຂອງຊາອູນ
8 ແລະດາວິດກ່າວແກ່ອາຮີເມເລກວ່າ, "ທ່ານບໍ່ມີຫອກ ຫລືດາບຕິດມືຢູ່ຈັກເຫລັ້ມນຶ່ງບໍ ຂ້າພະເຈົ້າບໍ່ໄດ້ເອົາດາບ
ມານຳ ຫລືເຄື່ອງອາວຸດຕິດມານຳເລີຍ ເພາະກະສັດໄດ້ສັ່ງໃຫ້ຂ້າພະເຈົ້າອອກມາຢ່າງຟ້າວຟັ່ງ"

9 ປະໂຣຫິດນັ້ນຈຶ່ງກ່າວວ່າ, “ດາບຂອງໂກລີອາດຄົນຟີລິສຕິນ ຊຶ່ງທ່ານຂ້າເສັຽໃນພູດອຍເອລານັ້ນ ເບິ່ງແມ່, ຍັງ
ຫໍ່ຜ້າຢູ່ທີ່ຂ້າງຫລັງເອໂຟດ ຖ້າທ່ານຕ້ອງການດາບນັ້ນຈົ່ງເອົາໄປເຖີດ ນອກຈາກເຫລັ້ມນັ້ນແລ້ວກໍບໍ່ມີດາບ
ອື່ນອີກ” ແລະດາວິດກ່າວວ່າ, “ບໍ່ມີດາບອື່ນເຫມືອນດາບເຫລັ້ມນັ້ນແລ້ວ ຂໍໃຫ້ຂ້າພະເຈົ້າເຖີດ”

**ດາວິດຫນີໄປເມືອງກາດ**

David Flees to Gath

10 ແລະດາວິດກໍລຸກຂຶ້ນໃນວັນນັ້ນ ຫນີຈາກຊາອູນໄປຫາອາຄິສກະສັດເມືອງກາດ
11 ແລະມະຫາດເລັກຂອງອາຄິສທູນວ່າ, “ດາວິດຄົນນີ້ບໍ່ແມ່ນຫລືທີ່ເປັນກະສັດຂອງແຜ່ນດິນນັ້ນ ເຂົາບໍ່ໄດ້ເຕັ້ນ
ຣຳແລະຮ້ອງເພງກັນຫລືວ່າ “ຊາອູນຂ້າຄົນເປັນພັນ ແລະດາວິດຂ້າຄົນເປັນຫມື່ນ”
12 ດາວິດກໍຈຳຖ້ອຍຄຳເຫລົ່ານີ້ໄວ້ໃນໃຈ ແລະຢ້ານອາຄິສກະສັດເມືອງກາດ
13 ທ່ານຈຶ່ງທຳທ່າເປັນຄົນເສັຽຈິດຕໍ່ຫນ້າເຂົາທັງຫລາຍ ແລະກະທຳຕົນເປັນຄົນບ້າ ໂດຍຂີດຂຽນຕາມປະຕູ ແລະ
ປ່ອຍໃຫ້ນ້ຳລາຍໄຫລລົງໃສ່ຫນວດ
14 ອາຄິສຈຶ່ງສັ່ງຜູ້ຮັບໃຊ້ຂອງທ່ານວ່າ, “ເຈົ້າເຫັນວ່າຄົນນັ້ນບ້າ ແລ້ວເຈົ້າພາເຂົາມາຫາເຮົາເຮັດຫຍັງ
15 ເຮົາມີຄົນບ້າບໍ່ພຽງພໍຊັ້ນບໍ ເຈົ້າຈຶ່ງພາຄົນນີ້ມາທຳບ້າໃຫ້ເຮົາເບິ່ງ ຄົນຢ່າງນີ້ຄວນເຂົ້າມາໃນພຣະຣາຊວັງຂອງ
ເຮົາບໍ”

## 22

David and His Followers at Adullan

1 ດາວິດກໍຈາກທີ່ນັ້ນຫນີໄປຢູ່ຖ້ຳ ອາດູນລາມ ເມື່ອອ້າຍຂອງທ່ານແລະເຊື້ອສາຍບິດາຂອງທ່ານທັງຫມົດໄດ້ຍິນ
ເຣື່ອງເຂົາກໍລົງໄປຫາທ່ານທີ່ນັ້ນ
2 ນອກນັ້ນທຸກຄົນທີ່ມີຄວາມທຸກຍາກ ແລະທຸກຄົນທີ່ມີຫນີ້ສິນ ແລະທຸກຄົນທີ່ບໍ່ມີຄວາມພໍໃຈກໍພາກັນມາຫາ
ທ່ານ ແລະທ່ານກໍເປັນຫົວຫນ້າຂອງເຂົາທັງຫລາຍ ມີຄົນມາຮ່ວມຢູ່ກັບທ່ານປະມານສີ່ຮ້ອຍຄົນ
3 ດາວິດກໍອອກຈາກທີ່ນັ້ນໄປຍັງເມືອງມິສປາໃນແຜ່ນດິນໂມອາບ ແລະທ່ານທູນເຈົ້າຊີວິດເມືອງໂມອາບວ່າ, “ຂໍ
ໂຜດໃຫ້ບິດາມານດາຂອງຂ້າພະເຈົ້າມາຢູ່ກັບພຣະອົງເຖີດ ຈົນກວ່າຂ້າພະເຈົ້າຈະຮູ້ວ່າພຣະຜູ້ເປັນເຈົ້າຈະຊົງ
ກະທຳປະການໃດເພື່ອຂ້າພະເຈົ້າ”
4 ແລະທ່ານກໍນຳບິດາມານດາມາຝາກໄວ້ກັບກະສັດເມືອງໂມອາບ ແລະທ່ານທັງສອງກໍອາໄສຢູ່ກັບເຈົ້າຊີວິດຕ
ລອດເວລາທີ່ດາວິດຢູ່ໃນບ່ອນກຳບັງເຂັ້ມແຂງ
5 ແລ້ວຜູ້ປະກາດພຣະທັມກາດກ່າວແກ່ດາວິດວ່າ, “ທ່ານຢ່າຢູ່ໃນທີ່ກຳບັງເຂັ້ມແຂງນີ້ເລີຍ ຈົ່ງໄປເຂົ້າໃນແຜ່ນ
ດິນຢູດາເຖີດ” ດາວິດກໍໄປ ແລະມາຢູ່ໃນປ່າເຮເຣທ

**ຊາອູນຊົງປະຫານຊີວິດປະໂຣຫິດເມືອງໂນບ**

Saul Slaughters the Priests at Nob

6 ຝ່າຍຊາອູນຊົງຮູ້ວ່າມີຜູ້ພົບດາວິດແລະຄົນທີ່ຢູ່ກັບທ່ານ ເວລານັ້ນຊາອູນປະທັບທີ່ເມືອງກິເບອາໃຕ້ຕົ້ນສົນ
ຫນອກໃນທີ່ເນີນພູ ຊົງຖືຫອກຢູ່ ແລະຜູ້ຮັບໃຊ້ຂອງພຣະອົງກໍຢືນຢູ່ຮອບພຣະອົງ
7 ແລະຊາອູນສັ່ງກັບຜູ້ຮັບໃຊ້ທີ່ຢືນຢູ່ຮອບພຣະອົງວ່າ, “ເຈົ້າທັງຫລາຍພວກຄົນເບັນຢາມິນ ຈົ່ງຟັງເຖີດ ບຸດຂອງ
ເຈສຊີຈະໃຫ້ນາ ແລະສວນອະງຸ່ນແກ່ເຈົ້າຫລື ຈະຕັ້ງເຈົ້າໃຫ້ເປັນຜູ້ບັງຄັບການກອງພັນກອງຮ້ອຍຫລື

8 ເຈົ້າທັງຫລາຍຈຶ່ງໄດ້ຄິດກະບົດຕໍ່ເຮົາບໍ່ມີຜູ້ໃດແຈ້ງແກ່ເຮົາເລີຍ ເມື່ອລູກຂອງເຮົາທໍາພັນທະໄມຕຣີກັບບຸດເຈສ
ຊີນັ້ນ ບໍ່ມີຜູ້ໃດຮ່ວມທຸກກັບເຮົາ ຫລືແຈ້ງແກ່ເຮົາວ່າ ລູກຂອງເຮົາປຸກປັ່ນຜູ້ຮັບໃຊ້ຂອງເຮົາໃຫ້ຕໍ່ສູ້ເຮົາ ຄອຍຊຸ່ມ
ດັກຈັບເຮົາຢູ່ຢ່າງທຸກວັນນີ້"
9 ໂດເອກ ຊາວເອໂດມຊຶ່ງຢືນຢູ່ໃກ້ຜູ້ຮັບໃຊ້ຂອງຊາອູນຈຶ່ງທູນຕອບວ່າ, "ຂ້ານ້ອຍເຫັນບຸດເຈສຊີມາທີ່ເມືອງ
ໂນບມາຫາອາຮີເມເລກບຸດຂອງອາຮີຕູບ
10 ແລ້ວເຂົາກໍທູນຖາມພຣະຜູ້ເປັນເຈົ້າໃຫ້ທ່ານ ແລະໃຫ້ສະບຽງອາຫານແກ່ທ່ານໄປ"
11 ແລ້ວເຈົ້າຊີວິດກໍໃຊ້ໃຫ້ໄປເອີ້ນປະໂຣຫິດອາຮີເມເລກ ບຸດອາຮີຕູບ ແລະເຊື້ອສາຍຂອງທ່ານທັງຫມົດ ຜູ້ເປັນ
ປະໂຣຫິດເມືອງໂນບ ທຸກຄົນກໍມາຫາກະສັດ
12 ຊາອູນກ່າວວ່າ, "ບຸດອາຮີຕູບເອີຍ ຈົ່ງຟັງເຖີດ" ເຂົາທູນຕອບວ່າ, "ເຈົ້ານາຍຂອງຂ້າພຣະອົງ ຂ້າພຣະອົງຢູ່ທີ່ນີ້"
13 ຊາອູນສັ່ງແກ່ເຂົາວ່າ, "ເປັນຫຍັງເຈົ້າຈຶ່ງຮ່ວມກັນກະບົດຕໍ່ເຮົາທັງເຈົ້າແລະບຸດຂອງເຈສຊີ ໃນການທີ່ເຈົ້າໄດ້ໃຫ້
ເຂົ້າຈີ່ ແລະດາບແກ່ເຂົາ ແລະໄດ້ທູນຖາມພຣະຜູ້ເປັນເຈົ້າໃຫ້ເຂົາ ເຂົາຈຶ່ງລຸກຂຶ້ນຕໍ່ສູ້ ແລະຄອຍຊຸ່ມດັກຈັບ
ເຮົາຢູ່ຢ່າງທຸກວັນນີ້"
14 ແລະອາຮີເມເລກຕອບເຈົ້າຊີວິດວ່າ, "ໃນບັນດາຂ້າຣາຊການຜູ້ຮັບໃຊ້ຂອງພຣະອົງ ມີຜູ້ໃດແດ່ທີ່ຈະຊື່ສັດ
ເຫມືອນດາວິດ  ພຣະຣາຊບຸດເຂີຍຂອງເຈົ້າຊີວິດ ຜູ້ບັງຄັບບັນຊາທະຫານ ແລະເປັນຜູ້ມີກຽດໃນພຣະຣາຊສໍາ
ນັກຂອງພຣະອົງ
15 ໃນວັນນີ້ຂ້າພຣະອົງໄດ້ທູນຂໍພຣະຜູ້ເປັນເຈົ້າເພື່ອເຂົາຈິງຫລື ບໍ່ເລີຍ ຂໍກະສັດຢ່າຊົງກ່າວໂທດສິ່ງໃດຕໍ່ຜູ້ຮັບໃຊ້
ຂອງພຣະອົງ ຫລືເຊື້ອສາຍຂອງບິດາຂອງຂ້າພຣະອົງ ເພາະຜູ້ຮັບໃຊ້ຂອງພຣະອົງບໍ່ຮູ້ເຣື່ອງນີ້ເລີຍວ່າຫລາຍ
ຫລືຫນ້ອຍ
16 ກະສັດສັ່ງວ່າ, "ອາຮີເມເລກ ເຈົ້າຈະຕ້ອງຕາຍແນ່ນອນ ທັງເຈົ້າແລະເຊື້ອສາຍຂອງບິດາຂອງເຈົ້ານໍາ"
17 ແລະກະສັດກໍຮັບສັ່ງແກ່ຣາຊອົງຄະຮັກຜູ້ຢືນເຝົ້າຢູ່ວ່າ, "ຈົ່ງຫັນມາປະຫານປະໂຣຫິດເຫລົ່ານີ້ຂອງພຣະຜູ້ເປັນ
ເຈົ້າເສັຽ ເພາະວ່າມືຂອງເຂົາຢູ່ກັບດາວິດ ເຂົາຮູ້ແລ້ວວ່າມັນຫນີໄປ ແຕ່ບໍ່ແຈ້ງໃຫ້ເຮົາຮູ້" ແຕ່ຂ້າຣາຊການຜູ້ຮັບ
ໃຊ້ຂອງກະສັດບໍ່ຍອມລົງມືທໍາກັບປະໂຣຫິດຂອງພຣະຜູ້ເປັນເຈົ້າ
18 ແລ້ວກະສັດຈຶ່ງສັ່ງໂດເອກວ່າ, "ເຈົ້າຈົ່ງໄປຂ້າປະໂຣຫິດເຫລົ່ານັ້ນ" ໂດເອກ ຊາວເອໂດມກໍໄດ້ຂ້າປະໂຣຫິດ ໃ
ນວັນນັ້ນເຂົາຂ້າບຸກຄົນທີ່ສວມເອໂຟດຜ້າປ່ານແປດສິບຫ້າຄົນ
19 ແລະເຂົາປະຫານໂນບເມືອງຂອງປະໂຣຫິດເສັຽດ້ວຍຄົມດາບ ຂ້າເສັຽດ້ວຍຄົມດາບມີ ທັງຜູ້ຊາຍ ຜູ້ຍິງ ເດັກ
ນ້ອຍ ງົວ ລໍແລະແກະ
20 ແຕ່ບຸດຊາຍຍຄົນນຶ່ງຂອງອາຮີເມເລກບຸດອາຮີຕູບ ຊື່ອາບີອາທາໄດ້ລອດພົ້ນ ແລະຫນີຕາມດາວິດໄປ
21 ອາບີອາທາກໍບອກດາວິດວ່າຊາອູນໄດ້ປະຫານປະໂຣຫິດຂອງພຣະຜູ້ເປັນເຈົ້າເສັຽ
22 ດາວິດຈຶ່ງເວົ້າກັບອາບີອາທາວ່າ, "ໃນວັນນັ້ນເມື່ອໂດເອກຢູ່ທີ່ນັ້ນ ເຮົາຮູ້ແລ້ວວ່າ ເຂົາຈະຕ້ອງທູນຊາອູນ
ແນ່ນອນ ເຮົາເປັນຕົ້ນເຫດແຫ່ງການຕາຍຂອງບຸກຄົນໃນຄອບຄົວບິດາຂອງທ່ານ
23 ຈົ່ງຢູ່ກັບເຮົາເຖີດ ຢ່າຢ້ານເລີຍ ເພາະຖ້າເຂົາສແວງຫາຊີວິດຂອງທ່ານ ກໍສແວງຫາຊີວິດຂອງເຮົາດ້ວຍ ທ່ານຢູ່
ກັບເຮົາກໍຈະພົ້ນພັຍ"

## 23 ດາວິດໃນເມືອງເກອີລາ

David Saves the City of Keilah

1 ເຂົາບອກດາວິດວ່າ, "ເບິ່ງແມ໋, ຄົນຟີລີສຕິນກໍາລັງຮົບເມືອງເກອີລາຢູ່ ແລະປຸ້ນເອົາເຂົ້າທີ່ຫາກໍເກັບກ່ຽວໃຫມ່"

2 ດາວິດຈຶ່ງທູນຖາມພຣະຜູ້ເປັນເຈົ້າວ່າ, “ຄວນທີ່ຂ້າພຣະອົງຈະໄປຕໍ່ສູ້ກັບຄົນຟີລິສຕິນເຫລົ່ານີ້ຫລືບໍ່” ແລະພຣະ
ຜູ້ເປັນເຈົ້າສັ່ງກັບດາວິດວ່າ, “ຈົ່ງໄປຕໍ່ສູ້ຄົນຟີລິສຕິນ ແລະຊ່ອຍເມືອງເກອີລາໄວ້”
3 ແຕ່ຄົນຂອງດາວິດບອກທ່ານວ່າ, “ເບິ່ງແມ໋, ເຮົາຢູ່ໃນຢູດານີ້ກໍຍັງຢ້ານຢູ່ແລ້ວ ຖ້າເຮົາຂຶ້ນໄປຍັງເກອີລາສູ້ຮົບ
ກັບກອງທັບຂອງຟີລິສຕິນເຮົາຍິ່ງຢ້ານຫລາຍຂຶ້ນເທົ່າໃດ”
4 ແລ້ວດາວິດກໍທູນຖາມພຣະຜູ້ເປັນເຈົ້າອີກ ແລະພຣະເຈົ້າສັ່ງຕອບທ່ານວ່າ, “ຈົ່ງລຸກຂຶ້ນລົງໄປຍັງເກອີລາເຖີດ
ເພາະເຮົາຈະມອບຄົນຟີລິສຕິນໄວ້ໃນມືຂອງເຈົ້າ”
5 ດາວິດກັບຄົນຂອງທ່ານກໍໄປຍັງເກອີລາຕໍ່ສູ້ກັບຄົນຟີລິສຕິນ ນຳເອົາສັດລ້ຽງຂອງເຂົາໄປ ແລະຂ້າຟັນເຂົາທັງ
ຫລາຍເສັຽເປັນຈຳນວນຫລວງຫລາຍ ດັ່ງນັ້ນແຫລະ ດາວິດກໍໄດ້ຊ່ອຍຊາວເມືອງເກອີລາໄວ້
6 ຢູ່ມາເມື່ອອາບີອາທາບຸດຂອງອາຮີເມເລກ ຫນີໄປຫາດາວິດທີ່ເມືອງເກອີລານັ້ນ ເຂົາຖືເອໂຟດລົງມານຳ
7 ມີຄົນໄປທູນຊາອູນວ່າ ດາວິດມາທີ່ເກອີລາແລ້ວ ຊາອູນຈຶ່ງສັ່ງວ່າ, “ພຣະຜູ້ເປັນເຈົ້າຊົງມອບເຂົາໄວ້ໃນມືຂອງ
ເຮົາແລ້ວ ເພາະທີ່ເຂົາເຂົ້າໄປໃນເມືອງທີ່ມີປະຕູແລະດ່ານ ເຂົາກໍຂັງຕົວເອງໄວ້”
8 ແລະຊາອູນຊົງເອີ້ນໃຫ້ພົນທັງປວງເຂົ້າສົງຄາມ ໃຫ້ລົງໄປຍັງເກອີລາເພື່ອລ້ອມດາວິດກັບຄົນຂອງທ່ານໄວ້
9 ດາວິດຮູ້ວ່າຊາອູນຊົງຄິດຮ້າຍຕໍ່ທ່ານ ທ່ານຈຶ່ງເວົ້າກັບປະໂຣຫິດອາບີອາທາວ່າ, “ຈົ່ງນຳເອົາເອໂຟດມາທີ່ນີ້
ເຖີດ”
10 ດາວິດກາບທູນວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງອິສຣາເອນ ຜູ້ຮັບໃຊ້ຂອງພຣະອົງໄດ້ຍິນແລ້ວວ່າ
ຊາອູນຫາຊ່ອງທາງທີ່ຈະມາຍັງເກອີລາເພື່ອທຳລາຍເມືອງນີ້ເພາະຂ້າພຣະອົງເປັນເຫດ
11 ປະຊາຊົນຊາວເກອີລາຈະມອບຂ້າພຣະອົງໄວ້ໃນມືທ່ານຫລື ຊາອູນຈະສະເດັດມາດັ່ງທີ່ຜູ້ຮັບໃຊ້ຂອງພຣະອົງ
ໄດ້ຍິນນັ້ນຫລື ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນ ຂໍພຣະອົງຊົງບອກຜູ້ຮັບໃຊ້ຂອງພຣະອົງເຖີດ”
ແລະພຣະຜູ້ເປັນເຈົ້າສັ່ງວ່າ, “ເຂົາຈະລົງມາ”
12 ແລ້ວດາວິດຈຶ່ງກາບທູນວ່າ, “ປະຊາຊົນຊາວເກອີລາຈະມອບຂ້າພຣະອົງກັບຄົນຂອງຂ້າພຣະອົງໄວ້ໃນມືຂອງ
ຊາອູນຫລື” ແລະພຣະຜູ້ເປັນເຈົ້າກ່າວວ່າ, “ເຂົາທັງຫລາຍຈະມອບເຈົ້າໄວ້”
13 ແລ້ວດາວິດກັບຄົນຂອງທ່ານຊຶ່ງມີປະມານຫົກຮ້ອຍຄົນ ກໍລຸກຂຶ້ນໄປເສັຽຈາກເກອີລາ ແລະເຂົາທັງຫລາຍກໍໄປ
ຕາມແຕ່ ເຂົາຈະໄປໄດ້ ເມື່ອມີຄົນໄປທູນຊາອູນວ່າ ດາວິດຫນີໄປຈາກເກອີລາແລ້ວຊາອູນຊົງເລີກການຕິດ
ຕາມ
14 ດາວິດກໍໄດ້ລີ້ຢູ່ໃນຖິ່ນກັນດານ ແລະຢູ່ໃນພູດອຍແຫ່ງຖິ່ນກັນດານ ແລະຊາອູນກໍຊົງຊອກຫາທ່ານທຸກວັນ ແຕ່
ພຣະຜູ້ເປັນເຈົ້າບໍ່ໄດ້ມອບທ່ານໄວ້ໃນມືຂອງຊາອູນ

David Eludes saul in the Wilderness

15 ດາວິດເຫັນວ່າຊາອູນໄດ້ຊົງອອກຕາມຫາເພື່ອຂ້າຕົນ ດາວິດຢູ່ປ່າ ຊີຟ ທີ່ໂຮເຣສ
16 ໂຢນາທານ ບຸດຊາຍຂອງຊາອູນໄດ້ລຸກຂຶ້ນໄປຫາດາວິດທີ່ ໂຮເຣສ ແລະສນັບສນຸນມືຂອງທ່ານໃຫ້ເຂັ້ມແຂງ
ຂຶ້ນໃນພຣະຜູ້ເປັນເຈົ້າ
17 ໂຢນາທານເວົ້າກັບທ່ານວ່າ, “ຢ່າຢ້ານເລີຍ ຊາອູນພໍ່ຂອງຂ້ອຍຈະເຮັດຫຍັງເຈົ້າບໍ່ໄດ້ເລີຍ ເຈົ້າຈະໄດ້ເປັນກະ
ສັດເຫນືອອິສຣາເອນ ແລະເຈົ້າຈະເປັນອຸປຣາຊ ຊາອູນພໍ່ຂອງຂ້ອຍກໍຮູ້ເຣື່ອງນີ້ດີ”
18 ແລ້ວທັງສອງກໍກະທຳຄຳສັນຍາຕໍ່ພຣະພັກພຣະຜູ້ເປັນເຈົ້າ ດາວິດຍັງຄ້າງຢູ່ທີ່ໂຮເຣສ ແລະໂຢນາທານກໍກັບ
ຄືນໄປວັງ
19 ຝ່າຍຊາວຊີຟ ໄດ້ຂຶ້ນໄປຫາຊາອູນທີ່ເມືອງກິເບອາທູນວ່າ, “ດາວິດໄດ້ລີ້ຢູ່ຖ້າມກາງພວກຂ້າພຣະອົງ ໃນທີ່ກຳ
ບັງເຂັ້ມແຂງທີ່ໂຮເຣສ ເທິງເນີນພູ ຮາຄີລາຊຶ່ງຢູ່ໃຕ້ເຢຊີໂມນບໍ່ແມ່ນຫລື

20 ຂ້າແດ່ພຣະຣາຊາ ເພາະສະນັ້ນຂໍສະເດັດລົງໄປຕາມພຣະທັຍປາຖນາທີ່ຈະລົງໄປ ຝ່າຍພວກຂ້າພຣະອົງຈະ
ມອບເຂົາໄວ້ໃນຫັດຂອງພຣະອົງ”
21 ແລະຊາອູນສັ່ງວ່າ, “ຂໍພຣະຜູ້ເປັນເຈົ້າຊົງອວຍພຣະພອນແກ່ພວກທ່ານ ເພາະພວກທ່ານປານີເຮົາ
22 ຈົ່ງໄປຫາເບິ່ງໃຫ້ແນ່ນອນ ເບິ່ງໃຫ້ຮູ້ຄັກວ່າເຂົາຢູ່ໃສ ໃຜເຫັນເຂົາທີ່ນັ້ນແດ່ ເພາະມີຄົນບອກເຮົາວ່າ ເຂົາສລາດ
ຫລາຍ
23 ເພາະສະນັ້ນຈົ່ງໄປສັງເກດເບິ່ງທີ່ຊຸ່ມວ່າເຂົາລີ້ຢູ່ໃສ ແລະກັບມາ ເອົາເນື້ອຄວາມແນ່ນອນມາບອກເຮົາ ແລ້ວ
ເຮົາຈະໄປກັບທ່ານ ຖ້າເຂົາຢູ່ໃນເຂດແຜ່ນດິນ ເຮົາຈະຄົ້ນຫາເຂົາໃນຫມູ່ຄົນຕະກູນຢູດາ”
24 ເຂົາທັງຫລາຍກໍລຸກຂຶ້ນໄປເມືອງ ຊີຟ ກ່ອນຊາອູນ ຝ່າຍດາວິດກັບຄົນຂອງທ່ານຢູ່ໃນຖິ່ນກັນດານມາໂອນໃນ
ອາຣາບາທາງທິດໃຕ້ເຢຊີໂມນ
25 ຊາອູນກັບຄົນຂອງພຣະອົງກໍຊອກຫາ ມີຄົນບອກດາວິດ ທ່ານຈຶ່ງລົງໄປຍັງສີລາ ແລະຢູ່ໃນຖິ່ນກັນດານມາ
ໂອນ ເມື່ອຊາອູນຊົງຮູ້ດັ່ງນັ້ນກໍຊົງຕິດຕາມດາວິດໄປໃນຖິ່ນກັນດານມາໂອນ
26 ຊາອູນສະເດັດໄປຟາກພູຂ້າງນຶ່ງ ດາວິດກັບຄົນຂອງທ່ານຢູ່ທີ່ພູອີກຟາກນຶ່ງ ດາວິດກໍຟ້າວຫນີຈາກຊາອູນ
ເພາະຊາອູນກັບຄົນຂອງພຣະອົງເຂົ້າມາໃກ້ດາວິດກັບຄົນຂອງທ່ານເພື່ອຈະຈັບ
27 ແຕ່ມີຜູ້ນຳຂ່າວຄົນນຶ່ງມາທູນຊາອູນວ່າ, “ຂໍຈົ່ງສະເດັດກັບຄືນ ເພາະພວກຟີລິສຕິນຍົກກອງທັບມາປຸ້ນແຜ່ນ
ດິນ”
28 ຊາອູນຈຶ່ງສະເດັດກັບຈາກການໄລ່ຕາມດາວິດໄປຮົບກັບຟີລິສຕິນ ເຂົາຈຶ່ງເອີ້ນທີ່ນັ້ນວ່າສີລາພົ້ນພັຍ
29 ດາວິດກໍຂຶ້ນໄປຈາກທີ່ນັ້ນໄປອາໄສຢູ່ໃນທີ່ກຳບັງເຂັ້ມແຂງເມືອງເອນເກດີ

## 24 ດາວິດໄວ້ຊີວິດຊາອູນ

David Spares Saul’s Life

1 ເມື່ອຊາອູນກັບມາຈາກການຕໍ່ສູ້ກັບພວກຟີລິສຕິນກໍມີຄົນມາບອກວ່າ ດາວິດຢູ່ໃນຖິ່ນກັນດານໃກ້ໆເມືອງ
ເອນເກດີ
2 ຊາອູນຈຶ່ງເອົາທະຫານຜູ້ເກັ່ງກ້າທີ່ສຸດໃນອິສຣາເອນສາມພັນຄົນອອກຊອກຫາດາວິດ ແລະທະຫານຂອງເຂົາຢູ່
ທາງທິດຕາເວັນອອກຂອງຫີນດານແບ້ປ່າ
3 ຊາອູນໄດ້ເຂົ້າໄປຖ່າຍໃນຖ້ຳແຫ່ງນຶ່ງໃກ້ໆກັບຄອກແກະຢູ່ແປະແຄມທາງ ສ່ວນດາວິດແລະທະຫານຂອງທ່ານ
ກໍລີ້ຢູ່ໃນຖ້ຳນັ້ນ
4 ພວກທະຫານຈຶ່ງເວົ້າຕໍ່ດາວິດວ່າ, “ນີ້ແມ່ນໂຊກຂອງທ່ານແລ້ວ ພຣະຜູ້ເປັນເຈົ້າໄດ້ມອບສັດຕຣູຂອງທ່ານໄວ້
ໃນອຳນາດຂອງທ່ານຕາມທີ່ຊົງບອກໄວ້ນັ້ນແລ້ວ ແລະບັດນີ້ ທ່ານຈົ່ງທຳກັບສັດຕຣູຂອງທ່ານຕາມທີ່ຕ້ອງ
ການ” ດາວິດໄດ້ຄານອອກມາແລ້ວຕັດເອົາເສື້ອຍາວຂອງຊາອູນໂດຍທີ່ພຣະອົງບໍ່ຮູ້ເມື່ອຫຍັງຫມົດ
5 ແຕ່ດາວິດກໍມີຄວາມຮູ້ສຶກເສັຽໃຈ ທີ່ທ່ານໄດ້ຕັດເຄື່ອງສລອງພຣະອົງຂອງຊາອູນ
6 ທ່ານຈຶ່ງເວົ້າກັບທະຫານຂອງຕົນວ່າ, “ຂໍພຣະຜູ້ເປັນເຈົ້າຢ່າອະນຸຍາດໃຫ້ຂ້ອຍທຳອັນຕະຣາຍຢ່າງໃດຫມົດແກ່
ເຈົ້ານາຍຂອງຂ້ອຍ ຊຶ່ງເປັນຜູ້ທີ່ພຣະຜູ້ເປັນເຈົ້າຊົງເລືອກເອົາເປັນເຈົ້າຊີວິດ ຂ້ອຍບໍ່ຄວນທຳອັນຕະຣາຍແກ່ພ
ຣະອົງເລີຍ ເພາະພຣະອົງເປັນເຈົ້າຊີວິດທີ່ພຣະຜູ້ເປັນເຈົ້າໄດ້ຊົງເລືອກໄວ້”
7 ດັ່ງນັ້ນ ດາວິດຈຶ່ງບອກໃຫ້ທະຫານຂອງຕົນຢ່າຕໍ່ສູ້ ຊາອູນ
8 ຊາອູນໄດ້ອອກຈາກຖ້ຳນັ້ນ ແລະໄດ້ເດີນທາງຕໍ່ໄປ ແລ້ວດາວິດກໍອອກໄປຕາມຫລັງພຣະອົງ ແລະເອີ້ນໃສ່ພ
ຣະອົງວ່າ, “ພຣະອົງເອີຍ ຊາອູນກໍຫລຽວຫລັງເບິ່ງອ້ອມໆ ດາວິດກໍກົ້ມຂາບລົງດ້ວຍຄວາມນັບຖື

9 ແລ້ວທູນຖາມວ່າ, “ເປັນຫຍັງພຣະອົງຈຶ່ງຟັງສຽງປະຊາຊົນ ທີ່ເວົ້າວ່າຂ້ານ້ອຍກຳລັງພຍາຍາມຈະທຳຮ້າຍພຣະອົງ ພຣະອົງຊົງເຫັນດ້ວຍຕົນເອງແລ້ວວ່າ

10 ວັນນີ້ ທີ່ຖ້ຳນັ້ນພຣະຜູ້ເປັນເຈົ້າໄດ້ຊົງມອບພຣະອົງໄວ້ໃນມືຂອງຂ້ານ້ອຍ ບາງຄົນໄດ້ບອກຂ້ານ້ອຍໃຫ້ຂ້າພຣະອົງເສັຽ ແຕ່ວ່າຂ້ານ້ອຍຮູ້ສຶກອີດູຕົນພຣະອົງ ຂ້ານ້ອຍຈຶ່ງບອກວ່າ ຂ້ານ້ອຍບໍ່ຄວນທຳອັນຕະຣາຍແກ່ພຣະອົງເລີຍ ເພາະວ່າພຣະອົງເປັນຜູ້ທີ່ພຣະຜູ້ເປັນເຈົ້າຊົງເລືອກໃຫ້ເປັນເຈົ້າຊີວິດ

11 ສະເດັດພໍ່ເອີຍ ຂໍຊົງທອດພຣະເນດເບິ່ງສົ້ນເສື້ອລ່າມຂອງພຣະອົງທີ່ຂ້ານ້ອຍກຳລັງຖືຢູ່ນີ້ ຂ້ານ້ອຍໄດ້ຕັດມັນອອກ ແຕ່ວ່າຂ້ານ້ອຍບໍ່ໄດ້ຂ້າພຣະອົງນັ້ນເປັນສິ່ງທີ່ພຣະອົງຄວນໝັ້ນໃຈວ່າຂ້ານ້ອຍບໍ່ໄດ້ຄິດກະບົດ ຫລືຄິດທຳຮ້າຍພຣະອົງແຕ່ຢ່າງໃດ ແຕ່ເຖິງປານນັ້ນ ພຣະອົງກໍຍັງຕາມຂ້າຂ້ານ້ອຍ ໂດຍທີ່ຂ້ານ້ອຍບໍ່ໄດ້ທຳຜິດຫຍັງຕໍ່ພຣະອົງ

12 ຂໍໃຫ້ພຣະຜູ້ເປັນເຈົ້າເປັນຜູ້ຕັດສິນລະຫວ່າງພວກເຮົາທັງສອງຄົນນີ້ໃຜເປັນຜູ້ຜິດ ຂໍໃຫ້ພຣະຜູ້ເປັນເຈົ້າຊົງລົງໂທດພຣະອົງໃນກິຈການທີ່ພຣະອົງໄດ້ກະທຳຕໍ່ສູ້ຂ້ານ້ອຍ ເພາະວ່າຂ້ານ້ອຍບໍ່ໄດ້ທຳອັນຕະຣາຍຕໍ່ສູ້ພຣະອົງແມ່ນແຕ່ນ້ອຍດຽວ

13 ພຣະອົງກໍຮູ້ໃນຄຳໂບຮານທີ່ວ່າ “ຄວາມຊົ່ວກໍຕ້ອງແກ້ແຄ້ນດ້ວຍຄວາມຊົ່ວ” ແຕ່ຂ້ານ້ອຍບໍ່ໄດ້ທຳຮ້າຍພຣະອົງຈົ່ງເບິ່ງວ່າ ເຈົ້າຊີວິດອິສຣາເອນກຳລັງຈະຂ້າຜູ້ໃດ

14 ພຣະອົງຊົງໄລ່ຕິດຕາມຫຍັງ ໄລ່ຕິດຕາມໝາຕາຍ ຫລືຕົວມັນ

15 ພຣະຜູ້ເປັນເຈົ້າຈະຊົງຕັດສິນວ່າ ໃຜໃນພວກເຮົາເປັນຄົນຜິດ ຂໍໃຫ້ພຣະອົງຊົງທອດພຣະເນດເບິ່ງໃນເຣື່ອງນີ້ຂໍຊົງປ້ອງກັນໃຫ້ຂ້ານ້ອຍພົ້ນຈາກສະເດັດພໍ່ເທີນ”

16 ເມື່ອດາວິດເວົ້າສຸດແລ້ວ ຊາອູນກໍກ່າວວ່າ, “ດາວິດລູກຂອງພໍ່ເອີຍ ແມ່ນເຈົ້າແທ້ບໍທີ່ເວົ້ານັ້ນ”

17 ແລ້ວພຣະອົງກໍຮ້ອງໄຫ້ ແລະເວົ້າຕໍ່ດາວິດວ່າ, “ເຈົ້າເປັນຄົນຖືກ ແຕ່ຂ້ອຍເປັນຄົນຜິດ ເຈົ້າໄດ້ເຮັດດີຕໍ່ຂ້ອຍໃນຂນະທີ່ຂ້ອຍໄດ້ເຮັດຊົ່ວຕໍ່ເຈົ້າ

18 ວັນນີ້ ເຈົ້າໄດ້ສະແດງຄວາມເມດຕາກະຣຸນາຕໍ່ຂ້ອຍ ເພາະເຈົ້າບໍ່ໄດ້ຂ້າຂ້ອຍ ທັງໆທີ່ພຣະຜູ້ເປັນເຈົ້າຊົງໄດ້ມອບຂ້ອຍໄວ້ໃນມືຂອງເຈົ້າແລ້ວ

19 ຄົນທີ່ຈັບສັດຕຣູຂອງຕົນໄດ້ແລ້ວປ່ອຍໃຫ້ໄປຢ່າງປອດພັຍຈະມີບໍ ຂໍໃຫ້ພຣະຜູ້ເປັນເຈົ້າຊົງອວຍພຣະພອນໃນສິ່ງທີ່ເຈົ້າໄດ້ທຳກັບຂ້ອຍໃນວັນນີ້

20 ດຽວນີ້ ຂ້ອຍຮູ້ຢ່າງຄັກແນ່ແລ້ວວ່າ ເຈົ້າຈະເປັນເຈົ້າຊີວິດຂອງອິສຣາເອນ ແລະພຣະຣາຊອານາຈັກຈະຢູ່ໃຕ້ການປົກຄອງຂອງເຈົ້າຕໍ່ໄປ

21 ແຕ່ວ່າ ຂໍໃຫ້ສັນຍາກັບຂ້ອຍໃນນາມຂອງພຣະຜູ້ເປັນເຈົ້າວ່າ ເຈົ້າຈະສະຫງວນເຊື້ອສາຍຂອງຂ້ອຍໄວ້ ເພື່ອວ່າຊື່ຂ້ອຍແລະຊື່ຄອບຄົວຂອງຂ້ອຍຈະບໍ່ຖືກຫລົງລືມໄປຈົນໝົດສິ້ນ

22 ດາວິດກໍສັນຍາວ່າ ທ່ານຈະປະຕິບັດຕາມ ແລ້ວຊາອູນກໍກັບຄືນເມືອ ສ່ວນດາວິດແລະທະຫານຂອງທ່ານກໍກັບຄືນເມືອບ່ອນລີ້ຂອງພວກເຂົາ

## 25 ການຕາຍຂອງຊາມູເອນ

Death of Samuel

1 ຝ່າຍຊາມູເອນກໍເສັຽຊີວິດ ແລະຄົນອິສຣາເອນທັງປວງກໍປະຊຸມກັນໄວ້ທຸກໃຫ້ແກ່ທ່ານ ແລະເຂົາທັງຫລາຍກໍຝັງສົບທ່ານໄວ້ໃນບ້ານຂອງທ່ານທີ່ເມືອງຣາມາ ແລະດາວິດກໍລຸກຂຶ້ນໄປຍັງຖິ່ນກັນດານປາຣານ

**ດາວິດແລະເມັຽຂອງນາບານ**

## David and the Wife of Nabal

2 ມີຊາຍຄົນນຶ່ງໃນເມືອງມາໂອນ ມີການງານຢູ່ໃນເມືອງກາຣ໌ເມນ ຊາຍຜູ້ນັ້ນຮັ່ງມີຫລາຍ ມີແກະສາມພັນໂຕ ແລະແບ້ນຶ່ງພັນ ເຂົາຕັດຂົນແກະຂອງເຂົາຢູ່ທີ່ກາຣ໌ເມນ

3 ຊາຍຄົນນັ້ນຊື່ ນາບານ ແລະເມັຽຂອງທ່ານຊື່ ອາບີກາອີນ ຍິງຄົນນັ້ນມີຄວາມຮອບຄອບ ແລະຫນ້າຕາສວຍງາມ ແຕ່ຊາຍຄົນນັ້ນເປັນຄົນສາມັນ ແລະປະພຶດຕົວບໍ່ດີ ເປັນວົງວານຂອງກາເລັບ

4 ດາວິດຢູ່ໃນຖິ່ນກັນດານຮູ້ວ່າ ນາບານກຳລັງຕັດຂົນແກະຂອງເຂົາຢູ່

5 ດາວິດຈຶ່ງໃຊ້ຊາຍຫນຸ່ມສິບຄົນ ແລະດາວິດສັ່ງຊາຍຫນຸ່ມເຫລົ່ານັ້ນວ່າ, “ຈົ່ງຂຶ້ນໄປທີ່ກາຣ໌ເມນໄປຫານາບານ ແລະຄຳນັບເຂົາໃນນາມຂອງເຮົາ

6 ທ່ານທັງຫລາຍຈົ່ງກ່າວຄຳຄຳນັບເຂົາເຊັ່ນນີ້ວ່າ “ສັນຕິສຸກຈົ່ງມີແກ່ທ່ານ ສັນຕິສຸກຈົ່ງມີແກ່ຄອບຄົວຂອງທ່ານ ແລະສັນຕິສຸກຈົ່ງແກ່ບັນດາສິ່ງທີ່ທ່ານມີ

7 ຂ້າພະເຈົ້າໄດ້ຍິນວ່າທ່ານມີຄົນຕັດຂົນແກະ ຝ່າຍຜູ້ລ້ຽງແກະຂອງທ່ານນັ້ນຢູ່ກັບເຮົາ ເຮົາບໍ່ໄດ້ກະທຳອັນຕະລາຍເຂົາເລີຍແລະເຂົາກໍບໍ່ໄດ້ຂາດສິ່ງໃດໄປຕລອດເວລາທີ່ເຂົາຢູ່ໃນກາຣ໌ເມນ

8 ຂໍຖາມຄົນຫນຸ່ມຂອງທ່ານເບິ່ງວ່າ ເຂົາທັງຫລາຍຄົງຈະບອກແກ່ທ່ານ ເພາະສະນັ້ນຂໍໃຫ້ຄົນຫນຸ່ມຂອງຂ້າພະເຈົ້າໄດ້ຮັບຄວາມກະຣຸນາໃນສາຍຕາຂອງທ່ານ ເພາະເຮົາມາໃນວັນມີການລ້ຽງ ຂໍທ່ານໄດ້ໃຫ້ສິ່ງທີ່ມີຕິດມືຂອງທ່ານແກ່ພວກຜູ້ຮັບໃຊ້ຂອງທ່ານ ແລະແກ່ດາວິດບຸດຂອງທ່ານ”

9 ເມື່ອພວກຄົນຫນຸ່ມຂອງດາວິດມາເຖິງກໍກ່າວຄຳເຫລົ່ານັ້ນແກ່ນາບານໃນນາມຂອງດາວິດ ແລະເຂົາທັງຫລາຍກໍຄອຍຢູ່

10 ແລະນາບານຕອບຄົນຮັບໃຊ້ຂອງດາວິດວ່າ, “ດາວິດແມ່ນໃຜ ບຸດຂອງເຈສຊີແມ່ນໃຜ ສມັຍນີ້ມີຄົນໃຊ້ເປັນຈຳນວນຫລາຍທີ່ຫນີໄປຈາກນາຍຂອງຕົນ

11 ຄວນຫລືທີ່ເຮົາຈະນຳເຂົ້າຈີ່ຂອງເຮົາ ແລະນ້ຳຂອງເຮົາ ແລະຊີ້ນຂອງເຮົາ ຊຶ່ງເຮົາໄດ້ຂ້າເສັຽສຳລັບຄົນຕັດຂົນແກະຂອງເຮົາມອບໃຫ້ແກ່ຄົນຊຶ່ງມາຈາກໃສກໍບໍ່ຮູ້“

12 ພວກຄົນຫນຸ່ມຂອງດາວິດກໍກັບຄືນ ແລະມາບອກເຣື່ອງຣາວທັງສິ້ນນີ້ແກ່ດາວິດ

13 ແລະດາວິດສັ່ງຄົນຂອງທ່ານວ່າ, “ທຸກຄົນຈົ່ງເອົາດາບຄາດແອວໄວ້” ແລະທຸກຄົນກໍເອົາດາບຄາດແອວຂອງຕົນ ແລະດາວິດກໍເອົາດາບຄາດແອວ ແລະມີຄົນຕິດຕາມດາວິດໄປປະມານສີ່ຮ້ອຍຄົນ ສ່ວນອີກສອງຮ້ອຍຄົນຢູ່ເຝົ້າກອງສັມພາຣະ

14 ແຕ່ມີຄົນຫນຸ່ມຄົນນຶ່ງໄປບອກນາງອາບີກາອີນເມັຽຂອງນາບານວ່າ, “ເບິ່ງແມ່, ດາວິດສົ່ງຜູ້ນຳຂ່າວມາຈາກຖິ່ນກັນດານເພື່ອຈະຄຳນັບນາຍຂອງເຮົາ ແລະນາຍກັບເວົ້າຮ້າຍໃຫ້ກັບຄົນເຫລົ່ານັ້ນ

15 ແຕ່ຄົນເຫລົ່ານັ້ນເຄີຍຕໍ່ເຮົາຫລາຍ ແລະເຮົາບໍ່ຕ້ອງຖືກທຳຮ້າຍຢ່າງໃດເລີຍ ແລະບໍ່ຂາດສິ່ງໃດຕາບໃດທີ່ເຮົາໄປກັບເຂົາ ເມື່ອເຮົາຢູ່ໃນທົ່ງນາ

16 ເຂົາເປັນເຫມືອນກຳແພງຂອງເຮົາທັງກາງຄືນແລະກາງເວັນ

17 ບັດນີ້ ຂໍທ່ານຮູ້ເຣື່ອງນີ້ແລະພິຈາຣະນາວ່າ ທ່ານຄວນຈະທຳປະການໃດ ເພາະເຂົາຄົງມຸ່ງຮ້າຍຕໍ່ນາຍຂອງເຮົາ ແລະຕໍ່ຄອບຄົວທັງສິ້ນຂອງນາຍ ນາຍນັ້ນເປັນຄົນສາມຫາວ ໃຜຈະເວົ້ານຳກໍບໍ່ໄດ້”

18 ແລ້ວນາງອາບີກາອີນກໍຟ້າວຈັດຂະຫນົມສອງຮ້ອຍກ້ອນ ແລະເຫລົ້າອະງຸ່ນສອງຖົງຫນັງ ແລະແກະທີ່ທຳຮຽບຮ້ອຍແລ້ວຫ້າໂຕ ແລະເຂົ້າຂົ້ວຫ້າຖັງ ແລະອະງຸ່ນແຫ້ງຮ້ອຍຊໍ່ ແລະຂະຫນົມຫມາກເດື່ອສອງຮ້ອຍແຜ່ນບັນທຸກຫລັງລໍ

19 ນາງກໍສັ່ງຊາຍຫນຸ່ມຂອງນາງວ່າ, “ຈົ່ງຟ້າວໄປກ່ອນເຮົາ ເຮົາຈະຕາມເຈົ້າໄປ” ແຕ່ນາງບໍ່ໄດ້ບອກນາບານຜົວຂອງນາງ

20 ເມື່ອນາງຂີ່ລໍລົງມາມີສັນພູບັງຝ່າຍນາງຢູ່ ດາວິດກັບທະຫານຂອງທ່ານກໍລົງມາທາງນາງ ແລະນາງກໍພົບເຂົາ
ທັງຫລາຍເຂົ້າ
21 ດາວິດກ່າວໄວ້ແລ້ວວ່າ, "ເຮົາໄດ້ເຝົ້າທຸກສິ່ງທີ່ຄົນນີ້ຢູ່ໃນຖິ່ນກັນດານເສັຽເປົ່າ ບໍ່ມີສິ່ງໃດຂອງເຂົາຂາດໄປເລີຍ
ແລະເຂົາຍັງກະທຳຄວາມຊົ່ວຕໍ່ເຮົາຕອບແທນຄວາມດີ
22 ຖ້າເຖິງມື້ອື່ນເຊົ້າເຮົາຍັງປ່ອຍໃຫ້ຊາຍຈັກຄົນນຶ່ງໃນບັນດາທີ່ເຂົາມີຢູ່ນັ້ນເຫລືອຢູ່ ກໍຂໍພຣະເຈົ້າຊົງລົງໂທດດາ
ວິດ ແລະຍິ່ງຫນັກກວ່າ"
23 ເມື່ອນາງອາບີກາອີນເຫັນດາວິດ ນາງກໍຟ້າວລົງຈາກຫລັງລໍ ຊົບຫນ້າລົງຕໍ່ດາວິດກາບລົງເຖິງດິນ
24 ນາງກາບລົງທີ່ຕີນຂອງດາວິດກ່າວວ່າ, "ເຈົ້ານາຍຂອງຂ້ານ້ອຍ ຄວາມຜິດນັ້ນຢູ່ທີ່ຂ້ານ້ອຍແຕ່ຜູ້ດຽວ ຂໍໃຫ້ຜູ້
ຮັບໃຊ້ຂອງທ່ານໄດ້ເວົ້າໃຫ້ທ່ານຟັງ ຂໍທ່ານໄດ້ໂຜດຟັງສຽງຜູ້ຮັບໃຊ້ຂອງທ່ານ
25 ຂໍເຈົ້ານາຍຂອງຂ້ານ້ອຍຢ່າໄດ້ເອົາຄວາມກັບນາບັນ ຊາຍສາມຫາວຄົນນີ້ເລີຍ ຄືນາບານ ເພາະເຂົາເປັນຢ່າງ
ທີ່ຊື່ຂອງເຂົາບອກ ນາບານເປັນຊື່ຂອງເຂົາ ແລະຄວາມໂງ່ຈ້າກໍຢູ່ກັບເຂົາ ແຕ່ຂ້ານ້ອຍຜູ້ຮັບໃຊ້ຂອງທ່ານບໍ່ໄດ້
ເຫັນພວກຄົນຫນຸ່ມຂອງເຈົ້ານາຍຊຶ່ງທ່ານໄດ້ໃຊ້ໄປນັ້ນ
26 ເຫດສະນັ້ນເຈົ້ານາຍຂອງຂ້ານ້ອຍ ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ສັນໃດ ແລະທ່ານມີຊີວິດຢູ່ສັນໃດ ດ້ວຍວ່າພ
ຣະຜູ້ເປັນເຈົ້າຊົງກະທຳໃຫ້ທ່ານຣະງັບເສັຽໄປຈາກຄວາມຜິດທີ່ທຳໃຫ້ໂລຫິດຕົກ ແລະຈາກການແກ້ແຄ້ນດ້ວຍ
ມືຂອງທ່ານເອງ ເພາະສະນັ້ນຂໍໃຫ້ສັດຕຣູຂອງທ່ານ ແລະບັນດາຜູ້ທີ່ກະທຳຮ້າຍຕໍ່ເຈົ້ານາຍຂອງຂ້ານ້ອຍຈົ່ງ
ເປັນຢ່າງລາບານ
27 ສິ່ງເຫລົ່ານີ້ຊຶ່ງຜູ້ຮັບໃຊ້ຂອງທ່ານໄດ້ນຳມາໃຫ້ເຈົ້ານາຍຂອງຂ້ານ້ອຍ ຂໍມອບໃຫ້ແກ່ບັນດາຄົນຫນຸ່ມ ຊຶ່ງຕິດ
ຕາມເຈົ້ານາຍຂອງຂ້ານ້ອຍ
28 ໄດ້ໂຜດອະພັຍຄວາມຜິດຂອງຜູ້ຮັບໃຊ້ຂອງທ່ານເຖີດ ເພາະພຣະຜູ້ເປັນເຈົ້າຄົງຊົງກະທຳໃຫ້ເຈົ້ານາຍຂອງຂ້າ
ນ້ອຍເປັນເຊື້ອສາຍທີ່ຫມັ້ນຄົງ ດ້ວຍວ່າເຈົ້ານາຍຂອງຂ້ານ້ອຍທຳສົງຄາມຢູ່ຝ່າຍພຣະຜູ້ເປັນເຈົ້າ ຕາບໃດທີ່
ທ່ານມີຊີວິດຢູ່ຈະຫາຄວາມຊົ່ວທີ່ຕົວທ່ານບໍ່ໄດ້ເລີຍ
29 ເຖິງແມ່ນມີຄົນລຸກຂຶ້ນໄລ່ຕິດຕາມທ່ານ ແລະປອງຈະຂ້າທ່ານ ຊີວິດຂອງເຈົ້ານາຍຂອງຂ້ານ້ອຍຈະຜູກມັດຢູ່
ກັບກຸ່ມຊີວິດຊຶ່ງຢູ່ໃນຄວາມພິທັກຮັກສາຂອງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານ ແຕ່ຊີວິດຂອງສັດຕຣູຂອງ
ທ່ານຈະຖືກແກວ່ງອອກໄປດັ່ງອອກໄປຈາກກະຖຸນ
30 ແລະເມື່ອພຣະຜູ້ເປັນເຈົ້າຊົງກະທຳແກ່ເຈົ້ານາຍຂອງຂ້ານ້ອຍແລ້ວ ຕາມບັນດາຄວາມດີຊຶ່ງພຣະອົງຊົງລັ່ນວາ
ຈາກ່ຽວກັບທ່ານ ແລະຊົງຕັ້ງທ່ານໄວ້ເປັນເຈົ້ານາຍເຫນືອອິສຣາເອນ
31 ເຈົ້ານາຍຂອງຂ້ານ້ອຍຈະບໍ່ມີເຫດທີ່ຕ້ອງເສົ້າໃຈຫລືຣະກຳໃຈ ເພາະໄດ້ກະທຳໃຫ້ໂລຫິດເຂົາຕົກດ້ວຍບໍ່ມີສາ
ເຫດຫລື ເພາະເຈົ້ານາຍຂອງຂ້ານ້ອຍທຳການແກ້ແຄ້ນເສັຽເອງ ແລະເມື່ອພຣະຜູ້ເປັນເຈົ້າຊົງກະທຳຄວາມດີ
ແກ່ເຈົ້ານາຍຂອງຂ້ານ້ອຍແລ້ວກໍຂໍລະນຶກເຖິງຜູ້ຮັບໃຊ້ຂອງທ່ານດ້ວຍ"
32 ດາວິດຈຶ່ງກ່າວແກ່ອາບີກາອີນວ່າ, "ສາທຸການແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງອິສຣາເອນຜູ້ຊົງໃຊ້ເຈົ້າໃຫ້ມາ
ພົບເຮົາໃນວັນນີ້
33 ຂໍໃຫ້ຄວາມສຸຂຸມຂອງເຈົ້າຮັບພຣະພອນ ແລະຂໍໃຫ້ຕົວເຈົ້າໄດ້ຮັບພຣະພອນ ເພາະເຈົ້າໄດ້ປ້ອງກັນເຮົາໃນວັນ
ນີ້ໃຫ້ພົ້ນຈາກຄວາມຜິດທີ່ທຳໃຫ້ໂລຫິດຕົກ ແລະຈາກການແກ້ແຄ້ນດ້ວຍມືຂອງເຮົາເອງ
34 ເພາະພຣະຜູ້ເປັນເຈົ້າ ພຣະເຈົ້າຂອງອິສຣາເອນຜູ້ຊົງຣະງັບເຮົາເສັຽຈາກການກະທຳຮ້າຍເຈົ້າ ຊົງພຣະຊົນຢູ່
ສັນໃດ ຖ້າເຈົ້າບໍ່ໄດ້ຟ້າວມາພົບເຮົາເສັຽເຖິງມື້ອື່ນເຊົ້າຄົງບໍ່ມີເຫລືອຈັກຄົນນຶ່ງເປັນແນ່"

35 ແລ້ວດາວິດກໍຮັບບັນດາສິ່ງທີ່ນາງນຳມາຈາກມືຂອງນາງ ແລະດາວິດກ່າວແກ່ນາງວ່າ, "ຈົ່ງກັບຄືນໄປຍັງບ້ານ
ເຮືອນຂອງເຈົ້າດ້ວຍສັນຕິສຸກເຖີດ ເຮົາໄດ້ຟັງສຽງຂອງເຈົ້າແລ້ວ ແລະເຮົາກໍໄດ້ອະນຸໂລມຕາມຄຳຂໍຮ້ອງຂອງ
ເຈົ້າ"
36 ແລ້ວອາບີກາອີນກໍກັບຄືນໄປຫານາບານ ແລະເຂົາກຳລັງມີການລ້ຽງໃນບ້ານຂອງເຂົາຢ່າງການລ້ຽງຂອງກະ
ສັດ ແລະຈິດໃຈຂອງນາບານກໍເບີກບານມ່ວນຊື່ນຢູ່ ເພາະເຂົາມືນເມົາຫລາຍ ນາງຈຶ່ງບໍ່ໄດ້ບອກຫຍັງໃຫ້ເຂົາຮູ້
ຈົນເວລາຮຸ່ງເຊົ້າ
37 ໃນເວລາເຊົ້າ ເມື່ອເຫລົ້າອະງຸ່ນສ່ວງຈາກນາບານໄປແລ້ວ ເມັຽຂອງເຂົາກໍເລົ່າເຫດການເຫລົ່ານີ້ໃຫ້ຟັງ ແລະ
ຈິດໃຈຂອງເຂົາກໍຕາຍເສັຽພາຍໃນ ແລະເຂົາກາຍເປັນດັ່ງກ້ອນຫີນ
38 ຢູ່ມາອີກປະມານສິບວັນພຣະຜູ້ເປັນເຈົ້າຊົງປະຫານນາບານ ແລະທ່ານກໍສິ້ນຊີວິດ
39 ເມື່ອດາວິດໄດ້ຍິນວ່ານາບານເສັຽຊີວິດແລ້ວ ທ່ານຈຶ່ງວ່າ, "ສາທຸການແດ່ພຣະຜູ້ເປັນເຈົ້າຜູ້ຊົງແກ້ແຄ້ນການ
ຢຽບຫຍາມທີ່ຂ້າພຣະອົງໄດ້ຮັບຈາກມືຂອງນາບານ ແລະຊົງປ້ອງກັນຜູ້ຮັບໃຊ້ຂອງພຣະອົງບໍ່ໃຫ້ທຳຄວາມຊົ່ວ
ພຣະຜູ້ເປັນເຈົ້າຊົງຕອບແທນການກະທຳຊົ່ວຂອງນາບານໃຫ້ຕົກເທິງຫົວຂອງເຂົາເອງ ແລ້ວດາວິດກໍສົ່ງຄົນໄປ
ສູ່ຂໍອາບີກາອີນໃຫ້ມາເປັນເມັຽຂອງທ່ານ
40 ເມື່ອຜູ້ຮັບໃຊ້ຂອງດາວິດມາເຖິງອາບີກາອີນທີ່ກາຣ໌ເມນ ເຂົາທັງຫລາຍກໍເວົ້າກັບນາງວ່າ, "ດາວິດໄດ້ໃຫ້ເຮົາ
ທັງຫລາຍມານຳເຈົ້າໄປໃຫ້ເປັນເມັຽຂອງທ່ານ"
41 ແລະນາງກໍລຸກຂຶ້ນຊົບຫນ້າລົງເຖິງດິນກ່າວວ່າ, "ເບິ່ງແມ່, ຜູ້ຮັບໃຊ້ຂອງທ່ານເປັນຜູ້ຮັບໃຊ້ທີ່ຈະລ້າງຕີນໃຫ້ແກ່
ຜູ້ຮັບໃຊ້ແຫ່ງເຈົ້ານາຍຂອງຂ້ານ້ອຍ"
42 ອາບີກາອີນກໍຟ້າວລຸກຂຶ້ນຂີ່ລໍໂຕນຶ່ງພ້ອມກັບສາວໃຊ້ບໍລິວະບັດນາງອີກຫ້າຄົນ ນາງຕາມຜູ້ນຳຂ່າວຂອງດາວິດ
ໄປ ແລະໄດ້ເປັນເມັຽຂອງດາວິດ
43 ດາວິດຍັງໄດ້ຮັບນາງອາຮີໂນອາມ ຊາວເຢສເຣເອນມາດ້ວຍ ແລະທັງສອງກໍເປັນເມັຽຂອງດາວິດ
44 ຊາອູນໄດ້ຊົງຍົກມີຄານ ບຸດສາວຂອງພຣະອົງ ຜູ້ເປັນເມັຽຂອງດາວິດ ໃຫ້ແກ່ປັນຕີບຸດລາອີສ ຊາວກັນລິມ

## 26 ດາວິດໄວ້ຊີວິດຊາອູນທີ່ຊີຟ

David Spares Saul's Life a Second Time

1 ຊາວຊີຟມາຫາຊາອູນທີ່ເມືອງກິເບອາທູນວ່າ, "ດາວິດລີ້ຢູ່ເທິງພູ ຮາຄີລາ ຊຶ່ງຢູ່ທາງຕາເວັນອອກຂອງເຢຊີໂມນ
ບໍ່ແມ່ນຫລື"
2 ຊາອູນຈຶ່ງຊົງລຸກຂຶ້ນລົງໄປທີ່ຖິ່ນກັນດານຊີຟ ພ້ອມກັບຊາຍອິສຣາເອນທີ່ຄັດເລືອກໄວ້ແລ້ວສາມພັນຄົນ ເພື່
ອຊອກຫາດາວິດໃນຖິ່ນກັນດານຊີຟ
3 ຊາອູນຊົງຕັ້ງຄ້າຍຢູ່ທີ່ພູຮາຄີລາ ຊຶ່ງຢູ່ຂ້າງຖນົນທາງທິດຕາເວັນອອກຂອງເຢຊີໂມນ ແຕ່ດາວິດຍັງຄົງຢູ່ໃນຖິ່ນ
ກັນດານ ແລະເມື່ອທ່ານເຫັນວ່າຊາອູນສະເດັດມາຫາທ່ານທີ່ໃນຖິ່ນກັນດານ
4 ດາວິດກໍສົ່ງຜູ້ສອດແນມອອກໄປ ຈຶ່ງຮູ້ວ່າຊາອູນຊົງຍົກມາແນ່ແລ້ວ
5 ແລ້ວດາວິດກໍລຸກຂຶ້ນມາຍັງທີ່ຊຶ່ງຊາອູນຊົງຕັ້ງຄ້າຍຢູ່ ແລະດາວິດກໍເຫັນບ່ອນທີ່ຊາອູນບັນທົມພ້ອມກັບອັບເນີ
ບຸດເນີແມ່ທັບ ຊາອູນບັນທົມຢູ່ກາງເຂດຄ້າຍ ຝ່າຍກອງທັບກໍຕັ້ງຄ້າຍຢູ່ຮອບພຣະອົງ
6 ແລ້ວດາວິດກໍເວົ້າກັບອາຮີເມເລກ ຊາວຮິດຕີ ແລະອາບີຊັຍບຸດຂອງນາງເຊຣູຢາ ນ້ອງຊາຍຂອງໂຢອາບວ່າ,
"ຜູ້ໃດຈະລົງໄປໃນຄ້າຍຂອງຊາອູນກັບເຮົາແດ່" ອາບີຊັຍຕອບວ່າ, "ຂ້າພະເຈົ້າຈະລົງໄປກັບທ່ານ"

7 ດາວິດແລະອາບີຊັຍຈຶ່ງລົງໄປທີ່ກອງທັບໃນເວລາກາງຄືນ ແລະເບິ່ງແມ໋, ຊາອູນບັນທົມຢູ່ກາງເຂດຄ້າຍ ມີ
ຫອກປັກຢູ່ບ່ອນທີ່ດິນຊື່ທົວ ອັບເນີກັບພວກພົນກຳນອນລ້ອມພຣະອົງຢູ່
8 ອາບີຊັຍເວົ້າກັບດາວິດວ່າ, "ໃນວັນນີ້ພຣະຜູ້ເປັນເຈົ້າຊົງມອບສັດຕຣູຂອງທ່ານໄວ້ໃນມືຂອງທ່ານແລ້ວ ບັດນີ້ຂໍ
ໃຫ້ຂ້າພະເຈົ້າແທງເຂົາດ້ວຍຫອກໃຫ້ຕິດດິນ ຄັ້ງດຽວກໍພໍ ແລະຂ້າພະເຈົ້າບໍ່ຕ້ອງແທງເຂົາຄັ້ງທີສອງ"
9 ແຕ່ດາວິດບອກອາບີຊັຍວ່າ, "ຂໍຢ່າທຳລາຍພຣະອົງເລີຍ ເພາະຜູ້ໃດຈະຢຽດມືອອກຕໍ່ສູ້ຜູ້ຊຶ່ງພຣະຜູ້ເປັນເຈົ້າຊົງ
ຊະໂລມທົດສົງໄວ້ ແລະຈະບໍ່ມີຄວາມຜິດ"
10 ແລະດາວິດກ່າວວ່າ, "ພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່ ພຣະຜູ້ເປັນເຈົ້າຈະຊົງຂ້າພຣະອົງທ່ານເອງ ຫລືຈະ
ເຖິງວັນກຳນົດທີ່ພຣະອົງຕ້ອງສິ້ນພຣະຊົນ ຫລືພຣະອົງຈະສະເດັດເຂົ້າສົງຄາມແລະພິນາດເສັຽ
11 ຂໍພຣະຜູ້ເປັນເຈົ້າຊົງຫ້າມປາມຂ້າພະເຈົ້າບໍ່ໃຫ້ຢຽດມືອອກຕໍ່ສູ້ຜູ້ທີ່ພຣະອົງຊົງຊະໂລມທົດສົງໄວ້ ບັດນີ້ຈົ່ງເອົາ
ຫອກທີ່ຢູ່ຊື່ ພຣະສຽນກັບເຢືອກນ້ຳ ແລະໃຫ້ເຮົາໄປກັນເຖີດ"
12 ດາວິດຈຶ່ງເອົາຫອກແລະເຢືອກນ້ຳຈາກທີ່ພຣະສຽນຂອງຊາອູນ ແລະເຂົາທັງສອງກໍອອກໄປ ບໍ່ມີໃຜເຫັນບໍ່ມີໃຜ
ຮູ້ ແລະບໍ່ມີໃຜຕື່ນເພາະເຂົາຫລັບສນິດທຸກຄົນ ເພາະພຣະຜູ້ເປັນເຈົ້າຊົງບັນດານໃຫ້ເຂົາຫລັບສນິດ
13 ດາວິດກໍຂ້າມໄປອີກຟາກນຶ່ງໄປຢືນຢູ່ເທິງຍອດພູໄກອອກໄປ ມີທີ່ຫວ່າງກວ້າງໃຫຍ່ລະຫວ່າງທັງສອງຝ່າຍ
14 ດາວິດກໍຮ້ອງເອີ້ນພວກພົນແລະເອີ້ນອັບເນີບຸດເນີວ່າ, "ອັບເນີເອີຍ ທ່ານບໍ່ຕອບຫລື" ແລ້ວອັບເນີຕອບວ່າ,
"ໃຜຫັ້ນທີ່ມາ ຮ້ອງເອີ້ນພຣະຣາຊາ"
15 ດາວິດຕອບອັບເນີວ່າ, "ທ່ານບໍ່ແມ່ນຜູ້ຊາຍດອກຫລື ໃນອິສຣາເອນມີໃຜເຫມືອນທ່ານແດ່ ເປັນຫຍັງທ່ານບໍ່
ເຝົ້າກະສັດເຈົ້ານາຍຂອງທ່ານໄວ້ໃຫ້ດີ ເພາະມີຄົນນຶ່ງເຂົ້າໄປຈະທຳລາຍກະສັດເຈົ້ານາຍຂອງທ່ານ
16 ທີ່ທ່ານກະທຳເຊັ່ນນີ້ບໍ່ດີ ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ສັນໃດ ທ່ານຄວນຕາຍເພາະທ່ານບໍ່ໄດ້ເຝົ້າເຈົ້ານາຍ
ຂອງທ່ານໄວ້ໃຫ້ດີ ຜູ້ທີ່ພຣະຜູ້ເປັນເຈົ້າຊົງຊະໂລມທົດສົງໄວ້ ບັດນີ້ກວດເບິ່ງດູວ່າ ຫອກຂອງກະສັດຢູ່ໃສ ແລະ
ເຢືອກນ້ຳທີ່ຊື່ພຣະສຽນນັ້ນຢູ່ໃສ"
17 ຊາອູນຊົງຈຳສຳນຽງດາວິດໄດ້ຈຶ່ງກ່າວວ່າ, "ດາວິດບຸດຂອງຂ້າເອີຍ ນີ້ເປັນສຽງຂອງເຈົ້າຫລື" ແລະດາວິດທູນ
ວ່າ, "ຂ້າແດ່ພຣະຣາຊາ ເຈົ້ານາຍຂອງຂ້ານ້ອຍ ເປັນສຽງຂອງຂ້າພຣະອົງ"
18 ທ່ານທູນຕໍ່ໄປວ່າ, "ເຫດໃດເຈົ້ານາຍຂອງຂ້ານ້ອຍຈຶ່ງໄລ່ຕິດຕາມຜູ້ຮັບໃຊ້ຂອງພຣະອົງ ຂ້ານ້ອຍໄດ້ກະທຳສິ່ງ
ໃດໄປ ມີຂ້ານ້ອຍຜິດໄປຢ່າງໃດ
19 ເພາະສະນັ້ນບັດນີ້ຂໍພຣະຣາຊາເຈົ້ານາຍຂອງຂ້ານ້ອຍຊົງຟັງສຽງຜູ້ຮັບໃຊ້ຂອງພຣະອົງ ຖ້າພຣະຜູ້ເປັນເຈົ້າຊົງ
ປຸກປັ່ນຂ້ານ້ອຍຕໍ່ສູ້ພຣະອົງ ຂໍພຣະຜູ້ເປັນເຈົ້າໃຫ້ໄດ້ຮັບເຄື່ອງຖວາຍ ຖ້າເປັນຄົນຍຸ ກໍຂໍຄົນນັ້ນເປັນທີ່ສາບ
ແຊ່ງຕໍ່ພຣະພັກພຣະຜູ້ເປັນເຈົ້າ ເພາະເຂົາໄດ້ຂັບໄລ່ຂ້ານ້ອຍອອກໄປໃນວັນນີ້ບໍ່ໃຫ້ໄດ້ສ່ວນມໍຣະດົກຂອງພ
ຣະຜູ້ເປັນເຈົ້າ ໂດຍກ່າວວ່າ, "ຈົ່ງໄປບົວລະບັດພຣະອື່ນ"
20 ເຫດສັນນັ້ນບັດນີ້ ຂໍຢ່າໃຫ້ໂລຫິດຂອງຂ້ານ້ອຍຕົກເຖິງດິນໄກຈາກພຣະພັກພຣະຜູ້ເປັນເຈົ້າ ເພາະເຈົ້າຊີວິດ
ຂອງອິສຣາເອນໄດ້ອອກມາຫາຊີວິດຫມັດໂຕດຽວ ດັ່ງຜູ້ນຶ່ງໄລ່ຕິດຕາມນົກກະທາຢູ່ເທິງພູ"
21 ແລ້ວຊາອູນຕອບວ່າ, "ເຮົາໄດ້ກະທຳຜິດແລ້ວ ດາວິດບຸດຂອງເຮົາເອີຍ ຈົ່ງກັບຄືນເຖີດ ເຮົາຈະບໍ່ທຳຮ້າຍເຈົ້າ
ອີກຕໍ່ໄປ ເພາະໃນວັນນີ້ຊີວິດຂອງເຮົາກໍປະເສີດໃນສາຍຕາຂອງເຈົ້າ ເບິ່ງແມ໋, ເຮົາສຳແດງຕົວເປັນຄົນໂງ່ຈ້າ
ແລະໄດ້ກະທຳຜິດ ຫລາຍ"
22 ແລະດາວິດທູນວ່າ, "ຂ້າແດ່ພຣະຣາຊາ ຫອກນັ້ນຢູ່ທີ່ນີ້ ຂໍຮັບສັ່ງໃຫ້ຄົນຫນຸ່ມຄົນນຶ່ງມາຮັບໄປຈາກທີ່ນີ້
23 ພຣະຜູ້ເປັນເຈົ້າຊົງປະທານຣາງວັນແກ່ທຸກຄົນຕາມຄວາມຊອບທັມ ແລະຄວາມສັດຊື່ຂອງເຂົາ ເພາະໃນວັນນີ້
ພຣະຜູ້ເປັນເຈົ້າຊົງມອບພຣະອົງໄວ້ໃນມືຂອງຂ້າພຣະອົງແລ້ວ ແຕ່ຂ້າພຣະອົງບໍ່ໄດ້ຢຽດມືອອກຕໍ່ສູ້ຜູ້ທີ່ພຣະຜູ້
ເປັນເຈົ້າຊົງຊະໂລມທົດສົງໄວ້

24 ເບິ່ງແມ໋, ໃນສາຍຕາຂອງຂ້ານ້ອຍ ຊີວິດຂອງພຣະອົງນັ້ນປະເສີດ ຈຶ່ງຂໍໃຫ້ຊີວິດຂອງຂ້າພຣະອົງປະເສີດໃນ
ສາຍພຣະເນດຂອງພຣະຜູ້ເປັນເຈົ້າ ແລະຂໍພຣະອົງຊົງຊ່ອຍກູ້ຂ້າພຣະອົງໃຫ້ພົ້ນຈາກບັນດາຄວາມທຸກຍາກ
ລໍາບາກ”
25 ແລ້ວຊາອູນຈຶ່ງກ່າວກັບດາວິດວ່າ, “ດາວິດບຸດຂອງເຮົາເອີຍ ຂໍພຣະຜູ້ເປັນເຈົ້າຊົງອວຍພອນເຈົ້າ ເຈົ້າຈະກະ
ທໍາຫລາຍສິ່ງຫລາຍຢ່າງແລະຈະສໍາເຣັດ“ ດາວິດຈຶ່ງໄປຕາມທາງຂອງທ່ານ ແລະຊາອູນກໍສະເດັດກັບສູ່ຣາຊ
ສໍານັກຂອງພຣະອົງ

## 27 ດາວິດຢູ່ໃນຫມູ່ຄົນຟີລິສຕິນ

David Serves King Achish of Gath

1 ດາວິດຄິດໃນໃຈວ່າ, “ເຮົາຄົງຈະພິນາດຈັກວັນນຶ່ງດ້ວຍມືຂອງຊາອູນ ບໍ່ມີສິ່ງໃດດີກວ່າທີ່ເຮົາຈະຫນີໄປຢູ່ທີ່
ແຜ່ນດິນຄົນຟີ ລິສຕິນ ແລ້ວຊາອູນກໍຈະຊົງເລີກບໍ່ຕິດຕາມເຮົາອີກພາຍໃນເຂດແດນອິສຣາເອນ ແລະເຮົາຈະ
ລອດພົ້ນຈາກມືຂອງທ່ານໄດ້”
2 ດາວິດຈຶ່ງລຸກຂຶ້ນຍົກຂ້າມໄປ ທັງຕົວທ່ານ ແລະທະຫານທີ່ຢູ່ກັບທ່ານຫົກຮ້ອຍຄົນດ້ວຍກັນ ໄປຫາອາຄິສ ບຸດ
ມາໂອກ ກະສັດເມືອງກາດ
3 ດາວິດກໍອາໄສຢູ່ກັບອາຄິສທີ່ເມືອງກາດ ຄືຕົວທ່ານແລະທະຫານຂອງທ່ານ ທຸກຄົນມີຄອບຄົວໄປດ້ວຍ ທັງດາ
ວິດພ້ອມກັບເມັຽສອງຄົນ ຄືອາຮີໂນອາມຊາວເຢສເຣເອນ ແລະອາບີກາອີນຊາວກາຣ໌ເມນແມ່ຫມ້າຍຂອງນາ
ບານ
4 ເມື່ອມີຄົນໄປທູນຊາອູນວ່າ ດາວິດໄດ້ຫນີໄປເມືອງກາດແລ້ວ ພຣະອົງກໍບໍ່ໄດ້ຊອກຫາທ່ານອີກຕໍ່ໄປ
5 ແລ້ວດາວິດຈຶ່ງທູນອາຄິສວ່າ, “ຖ້າຂ້າພຣະອົງເປັນທີ່ໂຜດປານໃນສາຍພຣະເນດຂອງພຣະອົງ ຂໍຊົງໃຫ້ເຂົາ
ມອບທີ່ຢູ່ໃນຫົວເມືອງແກ່ຂ້າພຣະອົງຈັກແຫ່ງນຶ່ງ ເພື່ອຂ້າພຣະອົງຈະໄດ້ອາໄສຢູ່ທີ່ນັ້ນ ເຫດໃດຜູ້ຮັບໃຊ້ຂອງພ
ຣະອົງຈະຢູ່ໃນກຸງກັບ  ພຣະອົງ”
6 ໃນວັນນັ້ນອາຄິສຊົງມອບເມືອງຊິກລາກໃຫ້ ຊິກລາກຈຶ່ງເປັນຫົວເມືອງຂຶ້ນແກ່ກະສັດຢູດາຈົນເຖິງທຸກວັນນີ້
7 ລະຍະເວລາທີ່ດາວິດເຂົ້າໄປຢູ່ໃນແຜ່ນດິນຟີລິສຕິນນັ້ນເປັນນຶ່ງປີກັບສີ່ເດືອນ
8 ຝ່າຍດາວິດກັບທະຫານຂອງທ່ານກໍຂຶ້ນໄປປຸ້ນຊາວເກຊູຣ໌ ຄົນກີຣ໌ຊີດ ແລະຄົນອາມາເລກ ເພາະປະຊາຊາດ
ເຫລົ່ານີ້ເປັນຊາວແຜ່ນດິນນັ້ນຕັ້ງແຕ່ສມັຍໂບຮານ ໄກໄປຈົນເຖິງເມືອງຊູຣ໌ ເຖິງແຜ່ນດິນເອຢິບ
9 ດາວິດກໍໂຈມຕີແຜ່ນດິນນັ້ນ ບໍ່ໄວ້ຊີວິດຜູ້ຊາຍ ຫລືຜູ້ຍິງ ແຕ່ຍຶດແກະ ງົວ ລໍ ອູດ ແລະເຄື່ອງນຸ່ງ ແລ້ວກັບຄືນມາ
ຫາອາຄິສ
10 ເມື່ອໃດອາຄິສຖາມວ່າ, “ວັນນີ້ທ່ານໄປປຸ້ນຜູ້ໃດມາ” ດາວິດກໍທູນຕອບວ່າ, “ປຸ້ນຖິ່ນໃຕ້ທີ່ແຜ່ນດິນຢູດາ” ຫລື
“ປຸ້ນເນເກັບທີ່ຕະກູນເຢຣາເມເອນ” ຫລື “ປຸ້ນຖິ່ນໃຕ້ເກນິດ”
11 ດາວິດບໍ່ໄດ້ໄວ້ຊີວິດຜູ້ຊາຍຫລືຜູ້ຍິງ ທີ່ຈະນໍາມາທີ່ເມືອງກາດ ໂດຍຄິດວ່າ “ຢ້ານວ່າເຂົາຈະບອກເຣື່ອງຂອງ
ເຮົາແລະກ່າວວ່າ, “ດາວິດໄດ້ທໍາຢ່າງນັ້ນ” ນີ້ເປັນວິທີການຂນະທີ່ທ່ານອາໄສຢູ່ໃນແຜ່ນດິນຟີລິສຕິນ
12 ອາຄິສຊົງວາງພຣະທັຍໃນດາວິດດ້ວຍຊົງດໍາຣິວ່າ, “ເຂົາໄດ້ກະທໍາໃຫ້ອິສຣາເອນຊົນຊາດຂອງພຣະອົງກຽດຊັງ
ຢ່າງທີ່ສຸດ ເຫດສັນນັ້ນເຂົາຈຶ່ງເປັນຜູ້ຮັບໃຊ້ຂອງເຮົາໄດ້ຕລອດໄປ”

## 28

Chapter 28

1 ຢູ່ມາໃນຄັ້ງນັ້ນຄົນຟີລິສຕິນໄດ້ຮວບຮວມກຳລັງ ເພື່ອທຳສົງຄາມສ຺ູ້ຮົບກັບອິສຣາເອນ ແລະອາຄິສສັ່ງກັບດາ
ວິດວ່າ, "ຈົ່ງເຂົ້າໃຈເຖີດວ່າ ທ່ານກັບຄົນຂອງທ່ານຈະອອກທັບໄປກັບເຮົາ"
2 ດາວິດທູນອາຄິສວ່າ, "ດີ ຂ້າພຣະອົງຈະໄດ້ຮູ້ວ່າຜູ້ຮັບໃຊ້ຂອງພຣະອົງຈະກະທຳສິ່ງໃດໄດ້ແດ່" ແລະອາຄິສຮັບ
ສັ່ງກັບດາວິດວ່າ, "ດີແລ້ວ ເຮົາຈະໃຫ້ທ່ານເປັນອົງຄະຮັກຂອງເຮົາຕລອດຊີວິດ"

**ຊາອູນແລະຄົນຊົງທີ່ເມືອງເອນໂດຣ໌**

Saul Consults a Medium

(ພບຍ 18:9-14)

3 ຝ່າຍຊາມູເອນໄດ້ເສັຽຊີວິດແລ້ວ ແລະຄົນອິສຣາເອນທັງປວງກໍໄວ້ທຸກໃຫ້ທ່ານ ແລະຝັງສົບທ່ານໄວ້ໃນເມືອງ
ຣາມາ ຊຶ່ງເປັນເມືອງຂອງທ່ານເອງ ແລະຊາອູນຊົງກຳຈັດຄົນຊົງແລະພໍ່ມົດແມ່ມົດເສັຽຈາກແຜ່ນດິນ
4 ຄົນຟີລິສຕິນກໍຊຸມນຸມກັນແລະມາຕັ້ງຄ້າຍຢູ່ທີ່ ຊູເນມ ແລະຊາອູນຊົງຮວບຮວມອິສຣາເອນທັງສິ້ນ ແລະເຂົາ
ທັງຫລາຍຕັ້ງຄ້າຍຢູ່ທີ່ເມືອງກິນໂບອາ
5 ເມື່ອຊາອູນທອດພຣະເນດກອງທັບຂອງຄົນຟີລິສຕິນກໍຢ້ານ ແລະພຣະທັຍຂອງພຣະອົງກໍຫວັ່ນໄຫວຫລາຍ
6 ເມື່ອຊາອູນທູນຖາມພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າບໍ່ໄດ້ຊົງຕອບພຣະອົງ ບໍ່ວ່າດ້ວຍຄວາມຝັນ ຫລືດ້ວຍອູ
ຣີມ ຫລືດ້ວຍຜູ້ປະກາດພຣະທັມ
7 ຊາອູນຈຶ່ງຮັບສັ່ງກັບມະຫາດເລັກຂອງພຣະອົງວ່າ, "ຈົ່ງອອກໄປຫາຍິງທີ່ເປັນຄົນຊົງ ເພື່ອເຮົາຈະໄດ້ໄປຫາ
ແລະຖາມເຂົາເບິ່ງ" ແລະມະຫາດເລັກກໍກາບທູນວ່າ, "ເບິ່ງແມ໋, ມີຍິງຄົນຊົງຄົນນຶ່ງຢູ່ທີ່ບ້ານເອນໂດຣ໌
8 ຊາອູນຈຶ່ງປອມພຣະອົງ ແລະຊົງສລອງພຣະອົງຢ່າງອື່ນສະເດັດອອກໄປພ້ອມກັບຊາຍສອງຄົນ ໄປຫາຍິງຄົນ
ຊົງໃນເວລາກາງຄືນ ພຣະອົງສັ່ງວ່າ, "ຂໍທຳນວາຍໃຫ້ເຮົາໂດຍວິນຍານຂອງຄົນຕາຍ ເຮົາຈະບອກຊື່ຜູ້ໃດກໍໃຫ້
ເອີ້ນຜູ້ນັ້ນຂຶ້ນມາ"
9 ຍິງຄົນນັ້ນຈຶ່ງທູນຕອບພຣະອົງວ່າ, "ທ່ານຄົງຮູ້ແນ່ແລ້ວວ່າຊົງກະທຳສິ່ງໃດ ທີ່ໄດ້ກຳຈັດຄົນຊົງ ແລະພໍ່ມົດແມ່
ມົດເສັຽຈາກແຜ່ນດິນ ເປັນຫຍັງທ່ານຈຶ່ງມາວາງກັບດັກຊີວິດຂອງຂ້າພະເຈົ້າ"
10 ແຕ່ຊາອູນຊົງສາບານກັບຍິງນັ້ນໃນພຣະນາມຂອງພຣະຜູ້ເປັນເຈົ້າວ່າ "ພຣະເຈົ້າຜູ້ຊົງພຣະຊົນຢູ່ສັນໃດ ເຈົ້າ
ຈະບໍ່ຖືກໂທດເພາະເຣື່ອງນີ້ສັນນັ້ນ"
11 ຍິງນັ້ນຈຶ່ງທູນຖາມວ່າ, "ທ່ານຈະໃຫ້ຂ້າພະເຈົ້າເອີ້ນໃຜຂຶ້ນມາ" ຊາອູນກ່າວວ່າ, "ເອີ້ນຊາມູເອນຂຶ້ນມາໃຫ້ເຮົາ"
12 ແລະເມື່ອຍິງນັ້ນເຫັນຊາມູເອນ ຈຶ່ງຮ້ອງສຽງດັງ ແລະຍິງນັ້ນກໍກາບທູນຊາອູນວ່າ, "ເຫດໃດພຣະອົງຈຶ່ງຊົງລໍ້
ລວງຂ້ານ້ອຍ ພຣະອົງຄືຊາອູນ"
13 ກະສັດສັ່ງແກ່ນາງວ່າ, "ຢ່າຢ້ານເລີຍ ເຈົ້າໄດ້ເຫັນຫຍັງ" ແລະຍິງນັ້ນກາບທູນຊາອູນວ່າ, "ຂ້ານ້ອຍເຫັນເທບ
ພຣະເຈົ້າອົງນຶ່ງສະເດັດຂຶ້ນມາຈາກແຜ່ນດິນ"
14 ພຣະອົງຖາມວ່າ, "ຮູບຮ່າງຂອງເຂົາເປັນຢ່າງໃດ" ແລະນາງຕອບວ່າ, "ເປັນຜູ້ຊາຍແກ່ຂຶ້ນມາມີເສື້ອຄຸມກາຍຢູ່"
ຊາອູນກໍຊົງຮູ້ວ່າເປັນຊາມູເອນ ພຣະອົງຊົງໂນ້ມພຣະກາຍລົງເຖິງດິນຂາບໄຫວ້
15 ແລ້ວຊາມູເອນເວົ້າກັບຊາອູນວ່າ, "ທ່ານຣົບກວນເຮົາດ້ວຍເອີ້ນເຮົາຂຶ້ນມາເຮັດຫຍັງ" ຊາອູນຊົງຕອບວ່າ, "ຂ້າ
ພະເຈົ້າມີຄວາມທຸກຫນັກ ເພາະຄົນຟີລິສຕິນກຳລັງມາທຳສົງຄາມກັບຂ້າພະເຈົ້າ ແລະພຣະຜູ້ເປັນເຈົ້າຊົງທັນ
ຫນີຈາກຂ້າພະເຈົ້າເສັຽແລ້ວ ບໍ່ໄດ້ຊົງຕອບຂ້າພະເຈົ້າອີກເລີຍ ບໍ່ວ່າໂດຍຜູ້ປະກາດພຣະທັມ ຫລືໂດຍຄວາມ
ຝັນ ເພາະສະນັ້ນຂ້າພະເຈົ້າຈຶ່ງຂໍເອີ້ນທ່ານຂຶ້ນມາເພື່ອທ່ານຈະໄດ້ແຈ້ງວ່າ ຂ້າພະເຈົ້າຈະກະທຳປະການໃດດີ"
16 ຊາມູເອນຕອບວ່າ, "ໃນເມື່ອພຣະຜູ້ເປັນເຈົ້າຊົງທັນຫນີຈາກທ່ານເສັຽແລ້ວ ແລະເປັນສັດຕຣູຂອງທ່ານ ທ່ານ
ຈະມາຖາມຂ້າພະເຈົ້າເຮັດຫຍັງ

17 ພຣະຜູ້ເປັນເຈົ້າໄດ້ຊົງກະທຳແກ່ທ່ານຢ່າງທີ່ພຣະອົງສັ່ງບອກທາງຂ້າພະເຈົ້າແລ້ວນັ້ນ ເພາະພຣະຜູ້ເປັນເຈົ້າຊົງຈີກຣາຊອານາຈັກນັ້ນອອກເສັຽຈາກມືຂອງທ່ານ ແລະຊົງມອບໃຫ້ແກ່ຄົນອື່ນ ຄືດາວິດ

18 ເພາະທ່ານບໍ່ໄດ້ເຊື່ອຟັງພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າ ບໍ່ໄດ້ກະທຳຕາມພຣະພິໂຣດຂອງພຣະອົງທີ່ຊົງມີຕໍ່ອາມາເລກ ສະນັ້ນພຣະຜູ້ເປັນເຈົ້າຈຶ່ງຊົງກະທຳສິ່ງນີ້ແກ່ທ່ານໃນວັນນີ້

19 ນອກຈາກນີ້ ພຣະຜູ້ເປັນເຈົ້າຈະຊົງມອບອິສຣາເອນພ້ອມກັບຕົວທ່ານໄວ້ໃນມືຂອງຄົນຟີລິສຕິນ ມື້ອື່ນຕົວທ່ານພ້ອມກັບບຸດຊາຍທັງຫລາຍຂອງທ່ານຈະຢູ່ກັບເຮົາ ແລະພຣະຜູ້ເປັນເຈົ້າຈະຊົງມອບກອງທັບອິສຣາເອນໄວ້ໃນມືຂອງຄົນຟີລິສຕິນດ້ວຍ”

20 ແລ້ວຊາອູນກໍຊົງລົ້ມລົງຢຽດຍາວເທິງພື້ນດິນໃນທັນທີ ຢ້ານກົວຈົນຕົວສັ່ນເພາະຖ້ອຍຄຳຂອງຊາມູເອນ ແລະບໍ່ມີກຳລັງເຫລືອຢູ່ໃນພຣະອົງ ເພາະບໍ່ໄດ້ສເວີຍມາຕລອດວັນນຶ່ງກັບຄືນນຶ່ງແລ້ວ

21 ຍິງນັ້ນກໍເຂົ້າມາຫາຊາອູນ ແລະເມື່ອນາງເຫັນວ່າພຣະອົງຕົກພຣະທັຍຫລາຍ ຈຶ່ງທູນວ່າ, “ເບິ່ງແມ໋, ຜູ້ຮັບໃຊ້ຂອງພຣະອົງກໍຍອມຟັງຮັບສັ່ງຂອງພຣະອົງ ຍອມສ່ຽງຊີວິດ ແລະຍອມຟັງພຣະດຳຣັດທີ່ພຣະອົງຊົງສັ່ງທຸກປະການ

22 ເພາະສະນັ້ນຂໍພຣະອົງຈົ່ງຟັງສຽງຜູ້ຮັບໃຊ້ຂອງພຣະອົງດ້ວຍ ຂໍຂ້ານ້ອຍໄດ້ຖວາຍພຣະກະຍາຫານແກ່ພຣະອົງຈັກຫນ້ອຍນຶ່ງ ຂໍພຣະອົງສເວີຍເພື່ອພຣະອົງຈະຊົງມີກຳລັງກັບເມືອຕາມທາງຂອງພຣະອົງ”

23 ພຣະອົງກໍຊົງປະຕິເສດ ຮັບສັ່ງວ່າ, “ບໍ່ກິນ” ແຕ່ມະຫາດເລັກກັບຍິງນັ້ນອ້ອນວອນພຣະອົງ ພຣະອົງກໍຊົງຟັງສຽງຂອງເຂົາ ພຣະອົງຊົງລຸກຂຶ້ນປະທັບເທິງຕຽງ

24 ຍິງນັ້ນມີລູກງົວອ້ວນຢູ່ໃນບ້ານໂຕນຶ່ງ ກໍຟ້າວຂ້າ ເອົາແປ້ງມານວດປີ້ງທຳເຂົ້າຈີ່ບໍ່ມີເຊື້ອແປ້ງ

25 ນາງກໍນຳມາຖວາຍແກ່ຊາອູນ ແລະຊົງສເວີຍກັບໃຫ້ມະຫາດເລັກ ເຂົາຮັບປະທານ ແລ້ວກໍຊົງລຸກຂຶ້ນສະເດັດກັບຄືນໄປໃນຄືນນັ້ນ

## 29 ຄົນຟີລິສຕິນບໍ່ວາງໃຈໃນດາວິດ

The Philistines Reject David

1 ຝ່າຍຄົນຟີລິສຕິນຊຸມນຸມກຳລັງທັງຫມົດຢູ່ທີ່ອາເຟກ ແລະຄົນອິສຣາເອນກໍຕັ້ງຄ້າຍຢູ່ທີ່ນ້ຳພຸຊຶ່ງຢູ່ໃນເມືອງເຢສຣາເອນ

2 ເມື່ອເຈົ້ານາຍຟີລິສຕິນເດີນຜ່ານໄປຕາມກອງຮ້ອຍແລະກອງພັນ ແລະດາວິດກັບຄົນຂອງທ່ານກໍຜ່ານໄປເປັນກອງຫລັງກັບອາຄິສ

3 ແມ່ທັບຂອງຄົນຟີລິສຕິນກ່າວວ່າ, “ພວກເຮັບເຣີເຫລົ່ານີ້ມາເຮັດຫຍັງຢູ່ທີ່ນີ້” ແລະອາຄິສກໍຮັບສັ່ງແກ່ແມ່ທັບຄົນຟີລິສຕິນວ່າ, “ນີ້ຄືດາວິດມະຫາດເລັກຂອງຊາອູນກະສັດອິສຣາເອນບໍ່ແມ່ນຫລື ເຂົາຢູ່ກັບເຮົາມາເປັນວັນເປັນປີແລ້ວ ຕັ້ງແຕ່ວັນທີ່ເຂົາຫນີມາຫາຂ້າພະເຈົ້າ ຂ້າພະເຈົ້າຍັງບໍ່ພົບຄວາມຜິດໃນຕົວເຂົາເລີຍ”

4 ແຕ່ເຈົ້ານາຍຟີລິສຕິນໃຈຮ້າຍໃຫ້ທ່ານແລະເຈົ້ານາຍຟີລິສຕິນທູນທ່ານວ່າ, “ຂໍສົ່ງຊາຍຄົນນັ້ນກັບຄືນໄປ ເພື່ອໃຫ້ເຂົາກັບໄປຍັງບ່ອນທີ່ທ່ານກຳນົດໃຫ້ເຂົາຢູ່ ແລະຢ່າໃຫ້ເຂົາລົງໄປຮົບພ້ອມກັບເຮົາຢ້ານວ່າເມື່ອເຮົາຮົບກັນເຂົາຈະເປັນສັດຕຣູຂອງເຮົາ ເພາະວ່າຊາຍຄົນນີ້ຈະຄືນດີກັບເຈົ້ານາຍຂອງເຂົາໄດ້ຢ່າງໃດ ບໍ່ແມ່ນດ້ວຍຫົວຂອງຄົນທີ່ນີ້ດອກຫລື”

5 ຄົນນີ້ດາວິດບໍ່ແມ່ນຫລື ຊຶ່ງເຂົາຮ້ອງເພງຂັບລຳຮັບກັນວ່າ “ຊາອູນຂ້າຄົນເປັນພັນ ແລະດາວິດຂ້າຄົນເປັນຫມື່ນ”

6 ອາຄິສຈຶ່ງເອີ້ນດາວິດເຂົ້າມາຮັບສັ່ງແກ່ທ່ານວ່າ, “ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ ທ່ານໄດ້ປະຕິບັດຕົນເປັນຄົນຊື່
ສັດມາແລ້ວ ສຳລັບເຮົາ ເຮົາກໍເຫັນຊອບທີ່ທ່ານອອກທັບໄປກັບເຮົາ ເພາະເຮົາບໍ່ເຫັນມີຄວາມຜິດອັນໃດໃນ
ທ່ານຕັ້ງແຕ່ວັນທີ່
ທ່ານມາຢູ່ກັບເຮົາຈົນເຖິງວັນນີ້ ແຕ່ຢ່າງໃດກໍຕາມບັນດາເຈົ້ານາຍບໍ່ເຫັນດ້ວຍໃນເຣື່ອງທ່ານ
7 ສະນັ້ນຂໍທ່ານກັບຄືນໄປເສັຽຈິ່ງໄປຢ່າງສັນຕິເຖີດ ເພື່ອບໍ່ໃຫ້ເປັນທີ່ຂັດໃຈເຈົ້ານາຍຟີລິສຕິນທັງຫລາຍ”
8 ດາວິດກໍທູນອາຄິສວ່າ, “ແຕ່ຂ້າພຣະອົງໄດ້ກະທຳສິ່ງໃດ ຫລື ພຣະອົງໄດ້ພົບສິ່ງໃດໃນຕົວຂອງຂ້າພຣະອົງ ຕັ້ງ
ແຕ່ວັນທີ່ຂ້າພຣະອົງເຂົ້າມາຮັບຣາຊການຈົນບັດນີ້ວ່າ ຂ້າພຣະອົງບໍ່ຄວນຈະໄປຣົບກັບສັດຕຣູຂອງກະສັດເຈົ້າ
ນາຍຂອງຂ້າ
ພຣະອົງ”
9 ອາຄິສກໍຮັບສັ່ງຕອບດາວິດວ່າ, “ເຮົາຮູ້ແລ້ວວ່າໃນສາຍຕາຂອງເຮົາທ່ານດີແລ້ວຢ່າງທູດສວັນຂອງພຣະເຈົ້າ
ແຕ່ບັນດາແມ່ທັບແຫ່ງຟີລິສຕິນກ່າວວ່າ “ຢ່າໃຫ້ເຂົາຂຶ້ນໄປໃນການຣົບກັບເຮົາເລີຍ”
10 ເມື່ອເປັນດັ່ງນີ້ ຂໍທ່ານລຸກຂຶ້ນແຕ່ເຊົ້າພ້ອມກັບພວກພົນແຫ່ງນາຍຂອງທ່ານຄືຄົນທີ່ມາກັບທ່ານ ເມື່ອພວກທ່ານ
ລຸກຂຶ້ນໃນເວລາເຊົ້າມືດ ພໍມີແສງກໍຈິ່ງອອກເດີນ”
11 ດາວິດຈຶ່ງລຸກຂຶ້ນຕັ້ງແຕ່ມືດ ຄືຕົວທ່ານພ້ອມກັບຄົນຂອງທ່ານເພື່ອອອກເດີນໃນຕອນເຊົ້າ ກັບຄືນໄປຍັງແຜ່ນ
ດິນຟີລິສຕິນ ແຕ່ຄົນຟີລິສຕິນຂຶ້ນໄປຍັງເຢສຣາເອນ

## 30 ດາວິດຣົບຊະນະຄົນອາມາເລກ

David Avenges the Destruction of Ziklag

1 ຢູ່ມາໃນວັນທີສາມເມື່ອດາວິດກັບຄົນຂອງທ່ານມາເຖິງເມືອງຊິກລາກ ປາກົດວ່າຄົນອາມາເລກໄດ້ມາປຸ້ນເນ
ເກັບກັບປຸ້ນຊິກລາກແລ້ວ ເຂົາຊະນະຊິກລາກ ແລະເຜົາເສັຽດ້ວຍໄຟ
2 ແລະຈັບຜູ້ຍິງກັບທຸກຄົນທີ່ຢູ່ໃນນັ້ນໄປເປັນຊະເລີຍທັງເດັກແລະຜູ້ໃຫຍ່ ບໍ່ໄດ້ຂ້າຜູ້ໃດເລີຍ ແຕ່ກວາດຕ້ອນໄປ
ຕາມທາງຂອງເຂົາ
3 ເມື່ອດາວິດກັບຄົນຂອງທ່ານມາທີ່ໃນເມືອງ ກໍເຫັນວ່າເມືອງນັ້ນຖືກເຜົາດ້ວຍໄຟ ແລະເມັຽກັບບຸດຊາຍບຸດຍິງ
ຂອງເຂົາຖືກກວາດໄປເປັນຊະເລີຍ
4 ແລ້ວດາວິດກັບປະຊາຊົນທີ່ຢູ່ກັບທ່ານກໍຮ້ອງໄຫ້ສຽງດັງ ຈົນເຂົາບໍ່ມີກຳລັງຈະຮ້ອງໄຫ້ອີກ
5 ອາຮີໂນອາມ ຊາວເຢສເຣເອນ ແລະອາບີກາອີນແມ່ຫມ້າຍຂອງນາບານຊາວກາເມນ ເມັຽທັງສອງຂອງດາວິດ
ກໍຖືກກວາດໄປເປັນຊະເລີຍ
6 ດາວິດກໍເປັນທຸກຫນັກເພາະປະຊາຊົນເວົ້າກັນວ່າຈະຂວ້າງກ້ອນຫີນໃສ່ທ່ານ ດ້ວຍຈິດໃຈຂອງປະຊາຊົນກໍ
ຂົມຂື່ນຫລາຍ ເພາະບຸດຊາຍ ແລະບຸດຍິງຂອງເຂົາ ແຕ່ດາວິດກໍມີກຳລັງຂຶ້ນໃນພຣະຜູ້ເປັນເຈົ້າພຣະເຈົ້າຂອງ
ທ່ານ
7 ດາວິດຈຶ່ງເວົ້າກັບປະໂຣຫິດອາບີອາທາ ບຸດຂອງອາຮີເມເລກວ່າ, “ຂໍນຳເອໂຟດມາໃຫ້ຂ້າພະເຈົ້າ” ອາບີອາທາ
ກໍນຳເອໂຟດມາໃຫ້ດາວິດ
8 ດາວິດທູນຖາມພຣະຜູ້ເປັນເຈົ້າວ່າ, “ສົມຄວນທີ່ຂ້າພຣະອົງຈະຕິດຕາມກອງປຸ້ນນີ້ຫລື ຂ້າພຣະອົງຈະໄລ່ທັນ
ເຂົາຫລື” ພຣະອົງຕອບທ່ານວ່າ, “ຈົ່ງຕິດຕາມເຖີດ ເຈົ້າຈະໄປທັນເຂົາແນ່ນອນ ແລະຈະຊ່ອຍໄດ້ແນ່ນອນ”
9 ດາວິດກໍຍົກອອກຕິດຕາມພ້ອມກັບຄົນທີ່ຢູ່ກັບທ່ານຫົກຮ້ອຍນັ້ນ ແລະເຂົາມາເຖິງແມ່ນ້ຳ ເບຊໍ ຄົນທີ່ຫລ້າ
ຫລັງກໍພັກຢູ່ທີ່ນັ້ນ

10 ແຕ່ດາວິດຕິດຕາມຕໍ່ໄປ ທັງຕົວທ່ານແລະຄົນສີ່ຮ້ອຍ ສອງຮ້ອຍທີ່ອ່ອນເພັຽເກີນທີ່ຈະຂ້າມແມ່ນ້ຳເບໂຊຣ໌ກໍຢຸດ
ພັກຢູ່
11 ເຂົາທັງຫລາຍພົບຊາວເອຢິບຄົນນຶ່ງຢູ່ທີ່ກາງແຈ້ງ ຈຶ່ງນຳເຂົາມາຫາດາວິດ ໃຫ້ເຂົ້າຈີ່ແລະເຂົາກໍຮັບປະທານ
ແລະໃຫ້ນ້ຳເຂົາດື່ມ
12 ແລະໃຫ້ຂະຫນົມຫມາກເດື່ອແຜ່ນນຶ່ງກັບພວງຫມາກອະງຸ່ນແຫ້ງສອງພວງ ເມື່ອເຂົາຮັບປະທານແລ້ວ ຈິດໃຈ
ຂອງເຂົາກໍຟື້ນຂຶ້ນ ເພາະເຂົາບໍ່ໄດ້ຮັບປະທານເຂົ້າຈີ່ຫລືດື່ມນ້ຳມາສາມວັນສາມຄືນແລ້ວ
13 ດາວິດຖາມເຂົາວ່າ, "ເຈົ້າເປັນຄົນພວກໃດ ແລະເຈົ້າມາຈາກໃສ" ເຂົາຕອບວ່າ, "ຂ້າພະເຈົ້າເປັນຄົນຫນຸ່ມ
ຊາວເອຢິບ ເປັນຄົນໃຊ້ຂອງຄົນອາມາເລກຄົນນຶ່ງ ເມື່ອສາມວັນກ່ອນຂ້າພະເຈົ້າປ່ວຍ ນາຍຂ້າພະເຈົ້າຈຶ່ງຖິ້ມ
ຂ້າພະເຈົ້າໄວ້
14 ເຮົາມາປຸ້ນທີ່ຖິ່ນໃຕ້ຂອງຄົນເຄເຣທ ແລະປຸ້ນທີ່ສ່ວນຂອງຢູດາ ແລະທີ່ຖິ່ນໃຕ້ຂອງກາເລັບ ແລະເຮົາເຜົາເມືອງ
ຊິກລາກເສັຽດ້ວຍໄຟ"
15 ດາວິດຖາມເຂົາວ່າ, "ເຈົ້າຈະພາເຮົາລົງໄປເຖິງກອງປຸ້ນນີ້ຫລືບໍ" ເຂົາຕອບວ່າ, "ຂໍສາບານແກ່ຂ້າພະເຈົ້າໃນພ
ຣະນາມຂອງພຣະເຈົ້າວ່າຈະບໍ່ຂ້າຂ້າພະເຈົ້າ ແລະທ່ານຈະບໍ່ມອບຂ້າພະເຈົ້າໄວ້ໃນມືນາຍຂອງຂ້າພະເຈົ້າ ຂ້າ
ພະເຈົ້າຈຶ່ງຈະພາທ່ານໄປທີ່ກອງປຸ້ນນັ້ນ"
16 ເມື່ອເຂົາພາທ່ານລົງໄປແລ້ວ ເບິ່ງແມ້, ກໍພົບເຂົາທັງຫລາຍແຜ່ກັນຢູ່ເຕັມດິນໄປຫມົດ ຕ່າງກິນແລະດື່ມ ແລະ
ເຕັ້ນລຳເພາະເຂົາຍຶດໄດ້ເຂົ້າຂອງຫລວງຫລາຍມາຈາກແຜ່ນດິນຟີລິສຕິນແລະຈາກແຜ່ນດິນຢູດາ
17 ດາວິດກໍຂ້າຟັນເຂົາຕັ້ງແຕ່ຮຸ່ງເຊົ້າຈົນເຖິງຄ່ຳຂອງວັນຮຸ່ງຂຶ້ນ ບໍ່ມີຊາຍຄົນໃດຫນີລອດໄປໄດ້ຈັກຄົນດຽວ ເວັ້ນ
ແຕ່ຊາຍສີ່ຮ້ອຍຄົນຊຶ່ງຂີ່ອູດຫນີໄປ
18 ດາວິດໄດ້ສິ່ງຂອງຕ່າງໆທີ່ຄົນອາມາເລກຍຶດ ແລະຄືນມາທັງຫມົດ ແລະດາວິດຊ່ອຍເມັຽທັງສອງຂອງທ່ານມາ
ໄດ້
19 ບໍ່ມີສິ່ງໃດຂາດຈາກທ່ານໄປເລີຍ ບໍ່ວ່ານ້ອຍຫລືໃຫຍ່ ບຸດຊາຍຫລືບຸດຍິງ ໃນສິ່ງທີ່ຍຶດໄປ ຫລືສິ່ງທີ່ເຂົາເຫລົ່າ
ນັ້ນເອົາ ດາວິດໄດ້ຄືນມາຫມົດ
20 ດາວິດຍັງຈັບໄດ້ບັນດາຝູງແບ້ ແລະຝູງງົວ ແລະເຂົາໄລ່ຕ້ອນຝູງສັດໄປຂ້າງຫນ້າທ່ານກ່າວວ່າ, "ນີ້ເປັນສ່ວນ
ນຶ່ງຂອງດາວິດຍຶດມາ"
21 ແລ້ວດາວິດກັບມາຍັງຄົນສອງຮ້ອຍຜູ້ທີ່ອ່ອນເພັຽເກີນທີ່ຈະຕາມດາວິດໄປ ຊຶ່ງໃຫ້ພັກເຊົາຢູ່ທີ່ແມ່ນ້ຳເບໂຊຣ໌
ແລະເຂົາກໍອອກໄປຕ້ອນຮັບດາວິດ ແລະຕ້ອນຮັບປະຊາຊົນທີ່ຢູ່ກັບທ່ານ ເມື່ອດາວິດເຂົ້າມາໃກ້ປະຊາຊົນ
ທ່ານກໍຄຳນັບເຂົາທັງຫລາຍ
22 ຄົນອະທັມແລະຄົນຖ່ອຍທັງຫມົດໃນພວກພົນທີ່ຕິດຕາມດາວິດໄປຈຶ່ງກ່າວວ່າ, "ເພາະເຂົາບໍ່ໄປກັບເຮົາ ເຮົາ
ຈະບໍ່ໃຫ້ສິ່ງໃດທີ່ເຮົາຍຶດມາໄດ້ແກ່ເຂົາເລີຍ ນອກຈາກໃຫ້ຕ່າງຄົນມາເອົາເມັຽແລະບຸດຂອງເຂົາໄປກໍແລ້ວກັນ"
23 ແຕ່ດາວິດກ່າວວ່າ, "ພີ່ນ້ອງທັງຫລາຍຂອງຂ້າພະເຈົ້າເອີຍ ທ່ານຢ່າທຳຢ່າງນັ້ນກັບສິ່ງຊຶ່ງພຣະຜູ້ເປັນເຈົ້າຊົງ
ມອບແກ່ເຮົາ ຜູ້ໄດ້ຊົງພິທັກຮັກສາເຮົາໄວ້ ແລະຊົງມອບກອງປຸ້ນຊຶ່ງມາຕໍ່ສູ້ກັບເຮົາໄວ້ໃນມືຂອງເຮົາ
24 ໃນເຣື່ອງນີ້ໃຜຈະຟັງສຽງຂອງທ່ານ ເພາະຄົນທີ່ລົງໄປຮົບໄດ້ສ່ວນແບ່ງຂອງເຂົາຢ່າງໃດ ຄົນທີ່ເຝົ້າກອງສັມພາ
ຣະຢູ່ກໍຄວນໄດ້ສ່ວນແບ່ງຢ່າງນັ້ນ ໃຫ້ເຂົາທັງຫລາຍຮັບສ່ວນແບ່ງເຫມືອນກັນ"
25 ຕັ້ງແຕ່ນັ້ນເປັນຕົ້ນໄປ ດາວິດກໍຕັ້ງຂໍ້ນີ້ໃຫ້ເປັນກົດເກນແລະກົດຫມາຍແກ່ອິສຣາເອນຈົນທຸກວັນນີ້
26 ເມື່ອດາວິດມາເຖິງເມືອງຊິກລາກແລ້ວ ກໍສົ່ງຂອງທີ່ຍຶດໄດ້ນັ້ນສ່ວນນຶ່ງໄປໃຫ້ຫມູ່ ຊຶ່ງເປັນພວກຜູ້ໃຫຍ່ໃນຢູດາ
ກ່າວວ່າ, "ນີ້ເປັນຂອງຂວັນຝາກມາໃຫ້ທ່ານຊຶ່ງເປັນສ່ວນຂອງທີ່ຍຶດຈາກສັດຕຣູຂອງພຣະຜູ້ເປັນເຈົ້າ"
27 ຄືແກ່ຄົນທີ່ຢູ່ໃນເບັດເອນ ໃນຣາໂມທທີ່ເນເກັບ ໃນຢັດຕີຣ໌

28 ໃນອາໂຣເອີ ໃນຊີຟໂມທ ໃນເອສເຕໂມອາ
29 ໃນຣາການ ໃນຫົວເມືອງຂອງເຢຣາເມເອນ ໃນຫົວເມືອງຂອງຄົນເກນິດ
30 ໃນໂຮຣ໌ມາ ໃນໂບຣາຊານ ໃນອາທາກ
31 ໃນເຮໂບຣນ ຄືໃຫ້ທົ່ວທຸກໆບ່ອນ ທີ່ດາວິດແລະຄົນຂອງທ່ານໄດ້ເຄີຍໄປໆມາໆ

## 31 ມໍຣະນາພາບຂອງຊາອູນ ແລະ ຂອງຣາຊໂອຣົດ

The Death of Saul and His Sons

(1 ຂຄວ 10:1-14)

1 ຝ່າຍຄົນຟີລິສຕິນກໍຕໍ່ສູ້ກັບຄົນອິສຣາເອນ ແລະຄົນອິສຣາເອນກໍຫນີຄົນຟີລິສຕິນ ລົ້ມຕາຍຢູ່ທີ່ເທິງພູກິນໂບອາ
2 ຄົນຟີລິສຕິນກໍໄລ່ທັນຊາອູນກັບພວກບຸດຊາຍ ແລະຄົນຟີລິສຕິນກໍຂ້າໂຢນາທານ ອາບີນາດາບ ແລະມັນຄີຊູ
ວາ ບຸດຊາຍຂອງຊາອູນເສັຽ
3 ການສູ້ຮົບຫນັກກໍປະຊິດຊາອູນເຂົ້າໄປ ນັກທະນູມາພົບພຣະອົງເຂົ້າ ພຣະອົງກໍບາດເຈັບສາຫັດ ດ້ວຍຝີມືຂອງ
ນັກທະນູ
4 ແລ້ວຊາອູນຮັບສັ່ງຄົນຖືອາວຸດຂອງພຣະອົງວ່າ, "ຈົ່ງຊັກດາບອອກ ແທງເຮົາເສັຽໃຫ້ຊອດເຖີດ ຢ້ານວ່າຄົນທີ່ບໍ່
ໄດ້ເຂົ້າພິທີຕັດເຫລົ່ານີ້ຈະເຂົ້າມາແທງເຮົາຈົນຊອດ ເປັນການລົບຫລູ່ເຮົາ" ແຕ່ຜູ້ຖືອາວຸດບໍ່ຍອມກະທຳ ເພາະ
ເຂົາຢ້ານຫລາຍ ຊາອູນຈຶ່ງຊິງຊັກດາບຂອງພຣະອົງອອກຊິງລົ້ມທັບດາບນັ້ນ
5 ແລະເມື່ອຜູ້ຖືອາວຸດເຫັນວ່າຊາອູນສິ້ນພຣະຊົນແລ້ວ ເຂົາກໍລົ້ມທັບດາບຂອງເຂົາເອງຕາຍດ້ວຍ
6 ດັ່ງນັ້ນ ຊາອູນກໍເສັຽຊີວິດ ບຸດຊາຍທັງສາມ ແລະຜູ້ຖືອາວຸດຂອງພຣະອົງກໍເສັຽຊີວິດ ຕລອດຈົນຄົນຂອງພຣະ
ອົງທັງຫມົດກໍຕາຍເສັຽໃນວັນດຽວກັນ
7 ເມື່ອຄົນອິສຣາເອນຊຶ່ງຢູ່ຟາກພູຂ້າງນັ້ນ ແລະຜູ້ທີ່ຢູ່ຟາກຕາເວັນອອກຂອງແມ່ນໍ້າຈໍແດນ ເຫັນຄົນອິສຣາເອນ
ຫນີໄປ ແລະເຫັນວ່າຊາອູນກັບບຸດຊາຍຂອງພຣະອົງເສັຽຊີວິດແລ້ວ ເຂົາກໍຖິ້ມບ້ານເມືອງຂອງເຂົາເສັຽຫລົບ
ຫນີໄປ ຄົນຟີລິສຕິນກໍ
ເຂົ້າມາອາໄສຢູ່ໃນນັ້ນ
8 ຢູ່ມາໃນວັນຮຸ່ງເຊົ້າ ເມື່ອຄົນຟີລິສຕິນມາຖອດເຄື່ອງນຸ່ງຈາກຄົນທີ່ຖືກຂ້າ ພໍພົບສົບຂອງຊາອູນ ແລະບຸດຊາຍ
ທັງສາມຢູ່ເທິງພູເຂົາກິນໂບອາ
9 ເຂົາຈຶ່ງຕັດພຣະສຽນຂອງຊາອູນ ແລະຖອດເອົາເຄື່ອງອາວຸດຂອງພຣະອົງອອກ ສົ່ງຜູ້ນຳຂ່າວອອກໄປທົ່ວແຜ່ນ
ດິນຟີ ລິສຕິນ ນຳເອົາຂ່າວດີໄປຍັງເຮືອນຮູບໂຄຣົບ ແລະຍັງປະຊາຊົນຂອງເຂົາ
10 ເຂົາເອົາເຄື່ອງອາວຸດຂອງພຣະອົງບັນຈຸໄວ້ໃນວັດຂອງພຣະອັຊຕາຣ໌ເຕສ ແລະມັດພຣະສົບຂອງພຣະອົງໄວ້
ກັບກຳແພງເມືອງເບັດຊານ
11 ແຕ່ເມື່ອຊາວເຢເບສກີເລອາດໄດ້ຍິນວ່າຄົນຟີລິສຕິນກະທຳຢ່າງນັ້ນກັບຊາອູນ
12 ຊາຍທີ່ກ້າຫານທຸກຄົນກໍລຸກຂຶ້ນເດີນຄືນໄປເຖິງຮຸ່ງເພື່ອໄປປົດພຣະສົບຂອງຊາອູນ ແລະສົບບຸດຊາຍທັງສາມ
ລົງເສັຽຈາກກຳແພງເມືອງເບັດຊານ ແລະນຳມາທີ່ເມືອງຢາເບສ ເພື່ອເຜົາໃນທີ່ນັ້ນ
13 ເຂົາກໍເກັບກະດູກໄປຝັງໄວ້ທີ່ໃຕ້ຕົ້ນສົນຫນອກໃນຢາເບສ ແລະອົດອາຫານເຈັດວັນ